# ພົງສາວະດາຣເມືອງພວນ

ລຳດັບ

# ກະສັຕິຍ໌ ເມືອງພວນ

ແລະ

# ຜູ້ສືບສາຍສກຸລ

ຣວບຣວມ ໂດຍ

**ເຈົ້າຄຳໝັ້ນ ວົງກົຕ-ຣັຕນະ**

ເຈົ້າເມືອງ ບ່າເຫນັລ

**ພຍາຄຳວົງຣິທິ໌ ໄກ ຕຸບີລີຟຸງ**

ເຈົ້າເມືອງ

ເປັນຜູ້ຈັດພາຍ ພິມພ໌ຈຳໜ່າຍ

ປະຕິສັງຂອນ ວັດເພັຽວັດ ເມືອງຊຽງຂວາງ–

ພ,ສ. ໒໔໙໕

# ພົງສາວະດາຣເມືອງພວນ

ລຳດັບ

# ກະສັຕິຍ໌ ເມືອງພວນ

ແລະ

# ຜູ້ສືບສາຍສະກຸລ

ຣວບຣວມ ໂດຍ

**ເຈົ້າຄຳໝັ້ນ ວົງກົຕະ-ຣັຕນະ**

ເຈົ້າເມືອງ ບ່າເໜັລ

**ພະຍາດຳຣົງຣິທິໄຊ ຕຸບີລີພູງ**

ເຈົ້າເມືອງ

ເປັນຜູ້ຈັດການ ພິມພ໌ຈຳໜ່າຍ

ປະຕິສັງຂອນ ວັດເພັງແຕ ເມືອງຊຽງຂວາງ—

ພ.ສ. ໒໔໙໕

# ສາຣະບານ


| | | |
|---|---|---|
| ຄຳນຳ | | |
| ພົງສາວະດານເມືອງພວນ | ຫນ້າ | ໑ |
| ຮູປເຈົ້າໄຊຍ໌ວົງສ໌ | ,, | ໒໕ |
| ລຳດັບກະສັຕິຍ໌ເມືອງພວນ | ,, | ໒໗ |
| ຮູປເຈົ້າສາຍຄຳ ສຸທະກະກຸມານ | ,, | ໒໘ |
| ປະວັຕິເຈົ້າສາຍຄຳ | ,, | ໓໐ |
| ກົງດິນເມືອງພວນ | ,, | ໓໑ |
| ສານເຈົ້າສາລີເຣັດໄປຂໍເກືອບໄທ | ,, | ໓໔ |
| ເຈົ້າຫນອງຄາຍເກນກຳລັງທັພ | ,, | ໓໕ |
| ກອງທັພເຈົ້າຫນອງຄາຍຮ້ອດວຽງແສນ | ,, | ໓໖ |
| ຊີ່ບ້ານໃນ໔ວຽນທີ່ໄທກວາດຄົວໄປ | ,, | ໓໗ |
| ເຈົ້າສາລີແລະເຈົ້າສະໄປພ້ອມກັບນາຍໄທ | ,, | ໓໘ |
| ນາຍໄທຍ້ວກເບົ້າເອົາຄົວພວນລົງໄປ | ,, | ໔໐ |
| ໄທປັນຊາວຄົວເຣັດຂ້ອຍກັບທີ່ຫນອງຄາຍ | ,, | ໔໓ |
| ຊາວຄົວໂຕນຫນີເບື່ອຫນາກຫນ້ອງຕາຍກາງປ່າ | ,, | ໔໓ |
| ເຈົ້າສະຫນີເປັນເທື່ອທີ່໒ | ,, | ໔໖ |
| ພົງສາວະດານແມ້ວເມືອງພວນ | ,, | ໔໙ |
| ຮູປພະຍາດຳຣົງຣິທໄກ ລິຕູນີ | ,, | ໕໑ |
| ປະວັຕິພະຍາດຳຣົງຣິທໄກ ລິຕູນີ | ,, | ໕໒ |
| ລາຍການເດີນທາງຂອງ | | |
| ເຈົ້າຄຳໝັ້ນໄປຊົມເມືອງພວນ | ,, | ໕໓ |
| ຮູປເຈົ້າຄຳໝັ້ນກັບລູກ໔ຄົນ | ,, | ໕໔ |
| ,, ວັດບ້ານພ້ອງເມືອງສູຍ | ,, | ໕໘ |
| ,, ໂດນຫ້ທີ່ງຊຽງຄຳເມືອງຄຳ | ,, | ໖໒ |

# ຄຳນຳ

ໜັງສືພົງສາວະດາຣເລັ່ມນີ້ ຂ້າພະເຈົ້າໄດ້ສວຍໂອກາສເວລາໄປຊົມເມືອງພວນ ເດືອນ ມີ ແຮມ ໔ ຫາ ໑໔ ຄ່ຳ ປີກົດຍີ ພ.ສ. ໒໔໙໓ ທີ່ຂ້າມມາ ເມືອເດືອງບິນພາຂ້າພເຈົ້າລົງຈອດສນາມບິນ ຂ້າພເຈົ້າຍິນບຸຊາທາເສດັຈເຈົ້າມຫາອຸປ-ຣາຊສູວັນນະພົມມາແລະບຸນຄົງ ອົງຄ໌ເປັນພຼະໂອຣະໂສແລະບິດຸລາ ຊຶ່ງໄດ້ຍົກທັພຈັບເສິກຫໍ້ທີ່ບ້ານສູດເມືອງກັດ ປີໃຄ້ ຈ.ສ. ໑໒໓໗ ແລະທົ່ງຊຽງຄຳເມືອງຄຳປີມົດ ຈ.ສ. ໑໒໔໕ ແຕ່ປາງກ່ອນພຸ້ນເປັນອັນມາກ.

ຂ້າພເຈົ້າຈຶ່ງໄດ້ພຍາຍາມຄົ້ນຄ້ວາເສາະສືບຫາພົງສາວະດາຣເມືອງພວນໄດ້ແລ້ວ ມາພິຈາຣະນາຮຽບຮຽງພິມພ໌ຂຶ້ນ ເພື່ອຈະໄດ້ເຜີຍແຜ່ກຸຍດຕີຍົສຂອງແມ່ທັພສອງພຼະອົງຄ໌ ແລະເຈົ້ານາຍໃນຕະກຸລວົງສ໌ພົງສ໌ກະສັດຕີຍ໌ເມືອງພວນ ກັບໄວ້ໃຫ້ຄົນຊັ້ນເກົ່າ ຊັ້ນກາງ ຊັ້ນໃໝ່ແລະຈະເກີດມາຊັ້ນຫລັງຊາບທົ່ວກັນ.

ຂ້າພເຈົ້າຂໍນ້ອມເກົ້າຯອຸທິສໜັງສືນີ້ ຖວາຍແດ່ແມ່ທັພທັງ ໒ ແລະເຈົ້ານາຍເມືອງພວນ ອົງຄ໌ທີ່ສເດັຈລ່ວງລັບໄປສູ່ປະຣະໂລກແລ້ວນັ້ນ ຈົ່ງໄດ້ຮັບຜົລບຸນສ່ວນນີ້ດ້ວຍ ແມ່ນວ່າອົງຄ໌ໃດຕົກທີ່ຍ້າກລຳບາກ ກໍ່ຂໍໃຫ້ຍ້າຍໄປສູ່ທີ່ດີ ຕົກທີ່ດີແລ້ວຂໍໃຫ້ດີກວ່າເກົ່າໝື່ນເທົ່າແລະແສນທີ ກັບຂໍຖວາຍກຸສົລແດ່ອົງຄ໌ທີ່ຍັງຊົງດຳຣົງພຼະຊົນຍ໌ຢູ່ໃນໂລກນີ້ ແລະຈະເກີດມາພາຍຫຼັງສືບເຜົ່າພົງພັນທຸກໍດີ ຈົ່ງຊົງພຼະເຈີນແລະເຈີນດ້ວຍອາຍຸ ວັນນະ ສຸຂະ ພລະ ຄຸນສາຣສົມບັດຕິ ສຸພະສິຣິສວັສດິ໌ ພິພັທທະນະມົງຄົລ ວິບຸນລະຜົລ ຊົ່ວກາລນານເທີ້ນ.

ໃນທີ່ສຸດແຫ່ງຄຳນຳ ຂ້າພເຈົ້າຂໍຂອບພຼະຄຸນທູນບາທໄຊຍ໌ວົງສ໌ ເຈົ້າ-ເມືອງກິຕຕິນສັກດິ໌ ມຫານັກຄະຣະຕັກກະເສລາ ນະຄຣຊຽງຂວາງຣາຊທານີ ເຈົ້າສາຍຄຳສຸທະກະກຸມາຣ ເຈົ້າແຂວງພວນ ແລະພຼະຍາດຳຣົງຣິທິໄກລິດບີ ເຈົ້າເມືອງແມ້ວ ຊຶ່ງພາກັນຮັບຕ້ອນຂ້າພເຈົ້າແລ້ວຢ່າງສນິທສນົມ ສົມພີ່ສົມນ້ອງ ທັງຊ່ວຍເຫຼືອໃຫ້ຂ້າພເຈົ້າໄດ້ສຳເຣັຈຜົລ ໂດຍດັ່ງຄວາມປາຖນາ

ແລະຫວັງວ່າຄົງຈະອນຸໂມທະນາບູນກຸສົລສ່ວນນີ້ນຳກັນ..

ເຈົ້າຄຳໝັ້ນ ວົງກົຕຣັຕນະ

ບ້ານສຳຣານຣົມຍ໌ ໔໒໐
ຖນົນສຸຂະເສີມ ພຣະນະຄຣ
ວັນທີ່ **30-4-51**

# ພົງສາວະດາຣເມືອງພວນ

ຕັ້ງແຕ່ເຈັດເຈືອງລູກຂຸນບູຣົມຣາຊາບິດຈາກນານ້ອຍອ້ອຍໜູ (ເມືອງແຖງ ຫຼືແຖງ (໑) ລົງມາຍັງເມືອງຊຽງຂວາງ (ພວນ) ເມື່ອຈຸລະສັກກະຣາຊ ໗໐ ຕົວ.

ເມື່ອເຈັດເຈືອງເຖິງເມືອງພ່ວນແລ້ວ ໄດ້ຂຶ້ນຄອງຣາຊສົມບັດ ແລະຕັ້ງປັນເຂດບ້ານແດນດິນເມືອງຊວາ ( ຫຼວງພະບາງ ) ແລະເມືອງພວນໄວ້ແກ່ກັນ.

ເຈັດເຈືອງ ມີພະຣາຊໂອຣົສອົງຄ໌ ໑ ພະນາມວ່າ ເຈັດຈອນ ເຈັດເຈືອງສວັນນະຄົດ ເຈັດຈອນ ໄດ້ຂຶ້ນຄອງຣາຊສົມບັດ.

ເຈັດຈອນ ມີພະຣາຊໂອຣົສອົງຄ໌ ໑ ພະນາມວ່າ ເຈັດຈອກ ເຈັດຈອນສວັນນະຄົດ ເຈັດຈອກ ໄດ້ຂຶ້ນຄອງຣາຊສົມບັດ.

ເຈັດຈອກ ມີພະຣາຊໂອຣົສອົງຄ໌ ໑ ພະນາມວ່າ ເຈັດຈິວ ເຈັດຈອກສວັນນະຄົດ ເຈັດຈິວ ໄດ້ຂຶ້ນຄອງຣາຊສົມບັດ.

ເຈັດຈິວ ມີພະຣາຊໂອຣົສອົງຄ໌ ໑ ພະນາມວ່າ ເຈັດຈັນ ເຈັດຈິວສວັນນະຄົດ ເຈັດຈັນໄດ້ຂຶ້ນຄອງຣາຊສົມບັດ.

ເຈັດຈັນ ມີພະຣາຊໂອຣົສອົງຄ໌ ໑ ພະນາມວ່າ ເຈັດບອດບໍ່ຄຳ ເຈັດຈັນສວັນນະຄົດ ເຈັດບອດບໍ່ຄຳ ໄດ້ຂຶ້ນຄອງຣາຊສົມບັດ.

ເຈັດບອດບໍ່ຄຳ ມີພະຣາຊໂອຣົສອົງຄ໌ ໑ ພະນາມວ່າ ເຈັດບີ ເຈັດບອດບໍ່ຄຳສວັນນະຄົດ ເຈັດບີໄດ້ຂຶ້ນຄອງຣາຊສົມບັດ ຖວາຍພະນາມວ່າ ເຈົ້າພະບີຫີນ.

ເຈົ້າພະບີຫີນ ມີພະຣາຊໂອຣົສ ໒ ອົງຄ໌ ພະນາມວ່າ ເຈົ້າພະຄີແລະເຈົ້າສັ້ນ ເຈົ້າພະບີຫີນສວັນນະຄົດ ເຈົ້າພະຄີໄດ້ຂຶ້ນຄອງຣາຊສົມບັດ.

ເຈົ້າພະຄີມີພະຣາຊໂອຣົສອົງຄ໌ ໑ ພະນາມວ່າ ເຈົ້າຄຳລູນເຈົ້າພະຄີສວັນນະຄົດ ເຈົ້າຄຳລູນ ໄດ້ຂຶ້ນຄອງຣາຊສົມບັດ.

ເຈົ້າຄຳລູນ ມີພະຣາຊໂອຣົສອົງຄ໌ ໑ ພະນາມວ່າເຈົ້າຄຳເພັງ ເຈົ້າຄຳລູນສວັນນະຄົດ ເຈົ້າຄຳເພັງ ໄດ້ຂຶ້ນຄອງຣາຊສົມບັດ.

---

(໑) ດຽນບຽນຟູ Dien-Bien-Phu

24/VII
ຫ້າມຈຳໜ່າຍ

ເຈົ້າຄຳເພັງ ມີພະຣາຊໂອຣົສອົງຄ໌ ໑ ພະນາມວ່າ ເຈົ້າຄຳຂອດ ເຈົ້າຄຳເພັງສວັນນະຄົດ ເຈົ້າຄຳຂອດ ໄດ້ຂຶ້ນຄອງຣາຊສົມບັດ.

ເຈົ້າຄຳຂອດ ມີພະຣາຊໂອຣົສອົງຄ໌ ໑ ພະນາມວ່າ ເຈົ້າຄຳຮອງ. ເຈົ້າຄຳຂອດສວັນນະຄົດ ເຈົ້າຄຳຮອງ ໄດ້ຂຶ້ນຄອງຣາຊສົມບັດ.

ເຈົ້າຄຳຮອງ ມີພະຣາຊໂອຣົສອົງຄ໌ ໑ ພະນາມວ່າ ເຈົ້າຄຳແຈ້ກ. ເຈົ້າຄຳຮອງສວັນນະຄົດ ເຈົ້າຄຳແຈ້ກ ໄດ້ຂຶ້ນຄອງຣາຊສົມບັດ.

ເຈົ້າຄຳແຈ້ກ ມີພະຣາຊໂອຣົສອົງຄ໌ ໑ ພະນາມວ່າ ເຈົ້າຄຳຝັ້ນ. ເຈົ້າຄຳແຈ້ກສວັນນະຄົດ ເຈົ້າຄຳຝັ້ນ ໄດ້ຂຶ້ນຄອງຣາຊສົມບັດ.

ເຈົ້າຄຳຝັ້ນ ມີພະຣາຊໂອຣົສ ໒ ອົງຄ໌ ພະນາມວ່າ ເຈົ້າເຣືອແລະເຈົ້າຄຳພິນ. ເຈົ້າຄຳຝັ້ນສວັນນະຄົດ ເຈົ້າເຣືອບໍ່ໄດ້ຂຶ້ນຄອງຣາຊສົມບັດ ພໍແຕ່ວ່າກາຣຊີວຕາວຖວາຍເຈົ້າຄຳພິນນ້ອງຊາຍ ຊຶ່ງຍັງຊົງພະເຍົາວ໌ ຄັນເຖິງກະສຽນແລ້ວ ໄດ້ຂຶ້ນຄອງຣາຊສົມບັດ.

ເຈົ້າຄຳພິນ ມີພະຣາຊໂອຣົສອົງຄ໌ ໑ ພະນາມວ່າ ເຈົ້າຄຳຫີບ ເຈົ້າຄຳພິນສວັນນະຄົດ ເຈົ້າຄຳຫີບ ໄດ້ຂຶ້ນຄອງຣາຊສົມບັດ.

ເຈົ້າຄຳຫີບ ມີພະຣາໂອຣົສອົງຄ໌ ໑ ພະນາມວ່າ ເຈົ້າຄຳຕິດສາກ ເຈົ້າຄຳຫີບສວັນນະຄົດ ເຈົ້າຄຳຕິດສາກ ໄດ້ຂຶ້ນຄອງຣາຊສົມບັດ.

ເຈົ້າຄຳຕິດສາກ ມີພະຣາຊໂອຣົສອົງຄ໌ ໑ ພະນາມວ່າ ເຈົ້າຄຳຄອນ ເຈົ້າຄຳຕິດສາກສວັນນະຄົດ ເຈົ້າຄຳຄອນ ໄດ້ຂຶ້ນຄອງຣາຊສົມບັດ.

ເຈົ້າຄຳຄອນ ມີພະຣາຊໂອຣົສອົງຄ໌ ໑ ພະນາມວ່າ ເຈົ້າຄຳລ້ອນ ເຈົ້າຄຳຄອນສວັນນະຄົດ ເຈົ້າຄຳລ້ອນ ໄດ້ຂຶ້ນຄອງຣາຊສົມບັດ.

ເຈົ້າຄຳລ້ອນ ມີພະຣາຊໂອຣົສອົງຄ໌ ໑ ພະນາມວ່າ ເຈົ້າຄຳໜ້າ ເຈົ້າຄຳລ້ອນສວັນນະຄົດ ເຈົ້າຄຳໜ້າ ໄດ້ຂຶ້ນຄອງຣາຊສົມບັດ.

ເຈົ້າຄຳໜ້າ ມີພະຣາຊໂອຣົສອົງຄ໌ ໑ ພະນາມວ່າເຈົ້າຄຳຫ້າວ ເຈົ້າຄຳໜ້າສວັນນະຄົດ ເຈົ້າຄຳຫ້າວ ໄດ້ຂຶ້ນຄອງຣາຊສົມບັດ.

ເຈົ້າຄຳຫ້າວມີ ພະຣາຊໂອຣົສອົງຄ໌ ໑ ພະນາມວ່າ ເຈົ້າຄຳເຕົ້າ ເຈົ້າຄຳຫ້າວສວັນນະຄົດ ເຈົ້າຄຳເຕົ້າ ໄດ້ຂຶ້ນຄອງຣາຊສົມບັດ.

ເຈົ້າຄຳເຕົ້າ ມີພະຣາຊໂອຣົສອົງຄ໌ ໑ ພະນາມວ່າ ເຈົ້າຄຳຜີງ ເຈົ້າຄຳ

ເຄົ້າສວັນນະຄົດ ເຈົ້າຄຳພິງໄດ້ຂຶ້ນຄອງຣາຊສົມບັດ ເມື່ອ ຈ.ສ໌ ໘໕໑.

ບັງນີ້ແກວສກຸລແລ(໑) ຊື່ແລດູຍມັດ Lé Duy Mat ຖືກຫາເປັນສັດຕູຣາຊສົມບັດພີ່ຊາຍ ຈຶ່ງພານາງບາໄກນ້ອງສາວໂຕນໜີມາເມືອງພວນ ແລ້ວຍົກນ້ອງສາວຖວາຍເຈົ້າຄຳພິງເປັນມະເຫສີຂໍກອງທັພເມືອງພວນໄປຕີພີ່ຊາຍເລີຍບໍ່ຊະນະ ໄດ້ກັບຄືນມາເມືອງພວນເຂົ້າສາງໝົ້ເຜົາຕົວເອງຕາຍ ທີ່ນັ້ນຈຶ່ງຕັ້ງເປັນຫໍມະເຫສັກຫຼັກເມືອງ ຊຶ່ງແກວໄດ້ຖວາຍສັກກາຣະບັບຖືສືບຕໍ່ມາ ແລະເປັນເຫດຸນຶ່ງໃຫ້ພຣະເຈົ້າຄຳພິງຊຶ່ງຕິດຕໍ່ກັບແກວຢູ່ເລື້ອຍ ຈົນເຖິງວ່າເສັຍບ້ານເມືອງໃຫ້ແກວ.

ເຈົ້າຄຳພິງ ມີພຣະຣາຊໂອຣົສອົງຄ໌ ໑ ພຣະນາມວ່າ ເຈົ້າຄຳບໍ່ອົກງໄປເປັນຊູ້ກັບນາງສນົມຂອງພຣະຣາຊບິດາ ຖືກຂັບໄລ່ໜີອອກຈາກເມືອງໄປຢູ່ບໍຣິຄັນນິຄົມເມືອງຄຳມ່ວນ ເມືອງຈຳພອນ ເມືອງເຊໂປນ. ຈ.ສ. ໙໑໑ ໄດ້ຂຶ້ນໄປພ້ອມກອງທັພພຣະຍາຟ້າງຸ້ມ ຕີເມືອງພວນໄດ້ ພຣະເຈົ້າຄຳພິງກໍ່ມອບຣາຊສົມບັດໃຫ້ເຈົ້າຄຳບໍ່ອົກ ຂຶ້ນຄອງຣາຊສົມບັດ ໃນປີ ຈ.ສ. ໙໑໒ ຖວາຍພຣະນາມວ່າ ພຣະເຈົ້າຂຽວຄຳບໍ່(໒) ແລ້ວພຣະຍາຟ້າງຸ້ມກໍ່ຂໍກອງທັພເມືອງພວນລົງໄປຣົບພຣະຍາສຸວັນນະຄຳພົງ ພຣະເຈົ້າປູ່ທີ່ເມືອງຫຼວງພຣະບາງ ພຣະຍາສຸວັນນະຄຳພົງບໍ່ຊະນະກອງທັພພຣະຍາຟ້າງຸ້ມຫຼາຍຄັ້ງ ກໍມີຄວາມລະອາຍແກ່ພຣະຣາຊບັດດາຍິ່ງນັກ ເລີຍເອົາເສື້ອກຸກພຣະສໍສວັນນະຄົດໃນຫໍສິງ ຈ.ສ. ໙໒໑ ພຣະຍາຟ້າງຸ່ມເຫັນວ່າພຣະເຈົ້າຂຽວຄຳບໍ່ ບໍ່ຊິດຊ່ວຍໃນທາງທະຫາຣອີກຕໍ່ໄປ ກໍ່ເລີຍຍົກກອງທັພຂຶ້ນມາຕີເມືອງພວນ ຈັບເອົາເຈົ້ານາງສອງອົງຄ໌ ບໍ່ປະກົດພຣະນາມ ຂອງພຣະເຈົ້າຂຽວຄຳບໍ່ໄປກັກໄວ້ເມືອງຫຼວງພຣະບາງ.

---

(໑) ຊາຕິແກວມີ ໓ ສກຸລຊຶ່ງເປັນສກຸລເຮືອງລືໃນຄັ້ງໂບຮານກາລ ຄືສກຸລຫງວນ Nguyen ສກຸລຕຣິນ Trinh ແລະສກຸລແລ Lé ຜູ້ເປັນຕົ້ນສກຸລນີ້ຊື່ແລເຈີວໂຕນ Lé Chieu Ton ເປັນພຣະເຈົ້າແຜ່ນດິນປະເທສແກວເໜືອ ຢູ່ເມືອງຫາໂນຍໃນສັດວັສ ໑໘. (໒) ພົງສາວະດາຣເມືອງຫຼວງພຣະບາງວ່າ ຂ້າພໍ່ຕາຍແລ້ວຂຶ້ນຄອງຣາຊສົມບັດ.

ພຣະເຈົ້າຂຽວຄຳບໍ ມີພຣະຣາຊໂອຣົສອົງຄ໌ ໑ ພຣະນາມວ່າ ເຈົ້າລ້ານຄຳກອງ ພຣະເຈົ້າຂຽວຄຳບໍສວັນນະຄົຕ ເຈົ້າລ້ານຄຳກອງໄດ້ຂຶ້ນຄອງຣາຊສົມບັຕິ ຈ.ສ. ໗໓໔ ພຣະອົງຄ໌ຊົງຕັ້ງຢູ່ໃນທົສພິທຣາຊທັມມ໌ ມີເດຊານຸພາພ ໄດ້ຊົງຈັດຕັ້ງກົດໝາຍຂຶ້ນ ເອີ້ນວ່າ " ກົດໝາຍລ້ານຄຳກອງ " ເພື່ອຄອບຄອງບ້ານເມືອງໃຫ້ມີຣະບຽບຮຽບຮ້ອຍ ພຣະອົງຄ໌ໄດ້ນຳເອົາພຸທທະສາສນາ ແລະພຣະພຸທທະຮູປທອງອົງຄ໌ ໑ ຈາກເມືອງທົງສາວະດີ (ພະມ່າ) ມາອຸປຖາກ ແລະເພື່ອໃຫ້ພຣະພຸທທະສາສນາດຳເນີນໄປດ້ວຍດີນັ້ນ ພຣະອົງຄ໌ໄດ້ຊົງສົ່ງໃຫ້ຜູ້ສະລຽວສະລາດໄປຮຽນຮີດຄອງສາສນາທັງຮຽນສ້າງວັດວາອາຣາມທີ່ເມືອງອິນທະປັດຖະນະຄອ (ເຂມຣ). ພຣະອົງຄ໌ໄດ້ສະເດັຈໄປເມືອງຫຼວງພຣະບາງ ຊອກຫາຜູ້ຊຳນິຊຳນານຮູ້ການກໍ່ສ້າງວັດວາອາຣາມຫໍໂຮງຕ່າງໆ ໄດ້ອາຈາຣຍ໌ທັມມຄາຖາ (໑) ຂຶ້ນມາພ້ອມ ແລ້ວສ້າງວັດວາອາຣາມ ທາຕຸ ເຈດີຍ໌ ທຸກສິງທຸກຢ່າງໃສ່ເມືອງພວນ ພາຕັ້ງໃຫ້ມີມະເຫສັກຫຼັກເມືອງໄດ້ ໑໒ ຫໍ ລ້ຽງຄວາຍປີລະຕົວຕໍ່ມາເຖິງທຸກວັນນີ້. ພຣະສົງຄ໌ທັງຫຼາຍ ເສນາອາມາຕຍ໌ ຣາຊປູໂລຫິດ ຈຶ່ງພ້ອມກັນຣາຊາພິເສກພຣະອົງຄ໌ແລະຖວາຍພຣະນາມວ່າ ພຣະເຈົ້າອິສສະຣະເຊດຖາ ແລ້ວຍົກນາມເມືອງວ່າ ມຫາຣັຕນະບູຣີຣົມ ພົມມະຈັກກະພັຕິ ສົມຫານັກຄະຣະຕັກກະເສລາ ນະຄຣຊຽງຂວາງຣາຊທານີ. ສໄມນັ້ນ ເມືອງພວນເຈີນຮຸ່ງເຮືອງນາກ ລືຊາປາກົດໄປເຖິງປຣະເທສອື່ນໆ.ພະເຈົ້າສາມແສນໄທ (ທ້າວອຸ່ນເຮືອນ) ເມືອງຫຼວງພຣະບາງຊົງຊາບດັ່ງນັ້ນ ຈຶ່ງສົ່ງຣາຊທູດມາຂໍເປັນໄມຕຣີ ແລ້ວສົ່ງເຈົ້ານາງທັງສອງຊຶ່ງພຣະຍາຟ້າງຸ່ມເອົາໄປກັກໄວ້ນັ້ນ ຄືນມາຖວາຍພຣະອົງຄ໌ ແລະຍັງໄດ້ຂໍກອງທັພເມືອງພວນໄປຊ່ວຍປາບຂ້າເສິກພະມ່າ.

ພຣະເຈົ້າອິສສຣະເຊດຖາ ມີພຣະຣາຊໂອຣົສອົງຄ໌ ໑ ພຣະນາມວ່າ ເຈົ້າຄຳອຸ່ນເມືອງ ພຣະເຈົ້າອິສສຣະເຊດຖາສວັນນະຄົຕ ເຈົ້າຄຳອຸ່ນເມືອງໄດ້ຂຶ້ນຄອງຣາຊສົມບັຕິ ຈ.ສ.໗໘໔ ຖວາຍພຣະນາມວ່າ ພຣະເຈົ້າຜ້າຂາວເພາະໃຈບຸນທົງແຕ່ຜ້າຂາວຟັງແຕ່ທັມມ໌ ຈຳແຕ່ສີລກິນແລະທານມີພຣະຣາຊທິດາຊື່ເຈົ້າຄຳອ່ອນ(ນາງນິນຄຳ)ແລະພຣະຣາຊໂອຣົສຊື່ ເຈົ້າຄຳດ່ອນ ຍັງຊົງພຣະເຍົາວ໌ຄັນພຣະເຈົ້າຜ້າຂາວ

---

໑) ນັກປາຊຍ໌ສໄມພຣະຍາຟ້າງຸ່ມ

ສວັນນະຄົດແລ້ວ ເມືອງພວນບໍ່ມີກະສັດຍໍສືບແທນ ແມ່ນພຼະຍາແສນຕໍ່ມາຫາພຣະຍາສີເປັນຜູ້ຄອບຄອງ.

ສມບະພູນບາຈາຣຍ໌ ພ້ອມກັບອັນເຊີນເຈົ້າຄຳອ່ອນຂຶ້ນຄອງຣາຊສົມບັດເປັນພຣະມຫາເທພີ ເຈົ້າຄຳອ່ອນສວັນນະຄົດ ເຈົ້າຄຳດ່ອນພຼະຣາຊອນຸຊາໄດ້ຂຶ້ນຄອງຣາຊສົມບັດ ມີພຼະຣາຊໂອຣົສ ໒ ອົງຄ໌ ພຼະນາມວ່າ ເຈົ້າຄຳສັ້ນແລະເຈົ້າຄຳທົງ.

ເຈົ້າຄຳດ່ອນສວັນນະຄົດ ເຈົ້າຄຳສັ້ນໄດ້ຂຶ້ນຄອງຣາຊສົມບັດ ຈ.ສ ໑໐໑໒ ພຼະເຈົ້າສຸຣິຍະວົງສາ ພຼະເຈົ້າລ້ານຊ້າງຣົ່ມຂາວວຽງຈັນທບ໌ ມີພຼະຣາຊປະສົງປາກໄດ້ເຈົ້ານາງແກ່ນຈັນທຣ໌ ພຼະຣາຊທິດາຂອງພຼະອົງຄ໌ໄປເປັນມະເຫສີ ພຼະອົງຄ໌ບໍ່ຍອມໃຫ້ ພຼະເຈົ້າສຸຣິຍະວົງສາຈຶ່ງຍົກກອງທັບຂຶ້ນໄປຕີເມືອງພວນ ຝ່າຍພຼະອົງຄ໌ເຈົ້າຄຳສັ້ນກໍ່ໄດ້ເກນທະຫາຣອອກຕໍ່ຣົບເປັນສາມາດ ແຕ່ສູ້ກອງທັບລ້ານຊ້າງບໍ່ໄດ້ ພຼະເຈົ້າສຸຣິຍະວົງສາ ຈັບເອົາເຈົ້ານາງແກ່ນຈັນທຣ໌ໄປໄດ້ແລະທຳວຸ້ນວາຍໃສ່ເມືອງພວນ ກວາດເອົາຄົວລົງໄປເມືອງວຽງຈັນທບ໌ຫຼາຍພັນຄົວ ສະນັ້ນຈຶ່ງມີພວນປູ່ພົ້ນຕໍ່ມາແລະເອີ້ນວ່າ **ພວນເດີມ** ພຼະອົງຄ໌ເສັຽໃຈຍ໌ແລະເສັຽພຼະຣາຊທິດາໄປກໍ່ບໍ່ມີຄວາມເສັຽພຼະໄທ ຍັງພາໄພ່ບ້ານພົນເມືອງສ້າງບ້ານແປງເມືອງໃຫ້ຮຸ່ງເຮືອງຂຶ້ນເໝືອນດັ່ງພຼະເຈົ້າລ້ານຄຳກອງ ພຼະອົງຄ໌ມີພຼະຣາຊໂອຣົສອົງຄ໌ ໑ ພຼະນາມວ່າ ເຈົ້າຄຳກິວົງ.

ເຈົ້າຄຳສັ້ນສວັນນະຄົດ ເຈົ້າຄຳທົງພຼະຣາຊອນຸຊາ ໄດ້ຂຶ້ນຄອງຣາຊສົມບັດ.

ເຈົ້າຄຳທົງສວັນນະຄົດ ເຈົ້າຄຳກິວົງ ໄດ້ຂຶ້ນຄອງຣາຊສົມບັດ ມີພຼະຣາຊໂອຣົສ ໒ ອົງຄ໌ພຼະນາມວ່າ ເຈົ້າຄຳລ້ອນແລະເຈົ້າຄຳເດືອງ.

ເຈົ້າຄຳກິວົງສວັນນະຄົດ ເຈົ້າຄຳລ້ອນ ໄດ້ຂຶ້ນຄອງຣາຊສົມບັດ ຈ.ສ.໑໐໔໙ ມີພຼະຣາຊໂອຣົສອົງຄ໌ ໑ ພຼະນາມວ່າ ເຈົ້າຄຳພຸທທາ ຊົງຕັ້ງເຈົ້າຄຳເດື່ອງພຼະຣາຊອນຸຊາເປັນພຼະມຫາອຸປຣາຊ.

ເຈົ້າຄຳລ້ອນສວັນນະຄົດ ເຈົ້າຄຳພຸທທາ ໄດ້ຂຶ້ນຄອງຣາຊສົມບັດ ມີພຼະຣາຊໂອຣົສອົງຄ໌ ໑ ພຼະນາມວ່າ ເຈົ້າຄຳສັທທາ.

ເຈົ້າຄຳພຸທທາສວັນນະຄົດ ເຈົ້າຄຳສັທທາ ໄດ້ຂຶ້ນຄອງຣາຊສົມບັດ

ແລະໄດ້ອະພິເສກສົມຣົສກັບເຈົ້ານາງແວ່ນແກ້ວສາມຜິວ ພຣະຣາຊທິດາສົມເດັຈພຣະເຈົ້າອິນທຣ໌ໂສມ ພຣະເຈົ້າລ້ານຊ້າງຮົ່ມຂາວຫຼວງພຣະບາງ ແລ້ວເປັນໄມຕີກັບເມືອງຫຼວງພຣະບາງ ໄດ້ເກນທະຫານໄປຊ່ວຍເມືອງຫຼວງພຣະບາງຣົບພະມ່າແລະວຽງຈັນທຣ໌ ພຣະອົງຄ໌ຊົງສ້າງບ້ານແປງເມືອງແລະສາສນາໃຫ້ເຈຣິນຮຸ່ງເຮືອງອອກຊື່ລືນາມໂດ່ງດັງໄປທົ່ວປະເທສໃກ້ຄຽງ ພຣະອົງຄ໌ມີພຣະຣາຊໂອຣົສ ໒ ອົງຄ໌ ພຣະນາມວ່າ ເຈົ້າບຸນລັງໄທແລະເຈົ້າບຸນລ້ອດ.

ເຈົ້າຄຳສັທທາສວັນນະຄົດ ເຈົ້າບຸນລັງໄທ ໄດ້ຂຶ້ນຄອງຣາຊສົມບັດ ມີພຣະຣາຊໂອຣົສອົງຄ໌ ໑ ພຣະນາມວ່າ ເຈົ້າບຸນຄົງ.

ເຈົ້າບຸນລັງໄທສວັນນະຄົດ ເຈົ້າບຸນລ້ອດພຣະຣາຊອນຸຊາ ໄດ້ຂຶ້ນຄອງຣາຊສົມບັດ.

ເຈົ້າບຸນລ້ອດສວັນນະຄົດ ເຈົ້າບຸນຄົງ ໄດ້ຂຶ້ນຄອງຣາຊສົມບັດ ມີພຣະຣາຊໂອຣົສອົງຄ໌ ໑ ພຣະນາມວ່າ ເຈົ້າບຸນຈັນທຣ໌.

ເຈົ້າບຸນຄົງສວັນນະຄົດ ເຈົ້າບຸນຈັນທຣ໌ ບໍ່ໄດ້ຂຶ້ນຄອງຣາຊສົມບັດ ເພຣາະຍັງນ້ອຍພຣະເຍົາວ໌ ພຣະຍາທັມມະເທໂວເສນາຜູ້ໃຫຍ່ໃນເມືອງພວນ ເປັນຜູ້ວ່າຣາຊການແຜ່ນດິນ ຈົນເຖິງເຈົ້າບຸນຈັນທຣ໌ໄດ້ຂຶ້ນຄອງຣາຊສົມບັດ ມີພຣະຣາຊໂອຣົສ ໒ ອົງຄ໌ ພຣະນາມວ່າ ເຈົ້າຄຳອຸ່ນເມືອງແລະເຈົ້າຄຳເໝັ້ນ.

ເຈົ້າບຸນຈັນທຣ໌ສວັນນະຄົດ ເຈົ້າຄຳອຸ່ນເມືອງ ໄດ້ຂຶ້ນຄອງຣາຊສົມບັດ ມີພຣະຣາຊໂອຣົສ ໓ ອົງຄ໌ ພຣະນາມວ່າ ເຈົ້າອົງຫຼໍ່ (ເຈົ້າອົງຫົງ) ເຈົ້າອົງສີພົມ ແລະເຈົ້າອົງບຸນ ຊົງຕັ້ງເຈົ້າຄຳເໝັ້ນພຣະຣາຊອນຸຊາເປັນພຣະມຫາອຸປຣາຊ ມີພຣະໂອຣົສອົງຄ໌ ໑ ຊື່ ເຈົ້າໜໍ່ເມືອງ (ເຈົ້າອົງໂຕນ).

ເຈົ້າຄຳອຸ່ນເມືອງສວັນນະຄົດ ເຈົ້າອົງຫຼໍ່ ໄດ້ຂຶ້ນຄອງຣາຊສົມບັດ ຈ.ສ. ໑໑໑໓ ປີຣ້ວງເຮົ້າ ຊົງຕັ້ງເຈົ້າອົງບຸນພຣະຣາຊອນຸຊາເປັນພຣະມຫາອຸປຣາຊ ພຣະອົງຄ໌ສົ່ງກອງທັພໄປຣົບເຈົ້າໄຊອົງເວ້ຕີເມືອງວຽງຈັນທນ໌ແຕ່ບໍ່ຊະນະ ພຣະອົງຄ໌ເລີຍມອບຣາຊສົມບັດ ໃຫ້ພຣະມຫາອຸປຣາຊຄອບຄອງບ້ານເມືອງຂຶ້ນກັບວຽງຈັນທນ໌ ແລ້ວກໍສເດັຈໜີໄປຢູ່ຫົວພັນທັງ ໕ ທັງ ໖ ເກັບກ່ອມເອົາຣາສດອນໄດ້ພ້ອມມີແລ້ວ ກໍຍົກລົງມາຈະໄປຕີກອງທັພເຈົ້າເກົ້າວຽງຈັນທນ໌ ແຕ່ເມື່ອມາເຖິງຊຽງຂວາງ ເຈົ້າອົງບຸນໄດ້ສູ້ຣົບເລີຍບໍ່ຊະນະ ຍອມດີດ່ວນກັບແລ້ວຍົກຣາຊ

ສົມບັຕິຖວາຍເຈົ້າອິງຫຼ່ງກໍຂຶ້ນເສວີຍຣາຊດັ່ງເກົ່າ ແລະຂຶ້ນສ່ວຍກັບວຽງຈັນທນ໌ຕໍ່ໄປ.

ເພື່ອໃຫ້ຣາສດອນທັງປວງຢູ່ຖືກຕ້ອງແລະຣວມກັບຫຼາຍ ເຈົ້າອິງຫຼ່ໄດ້ໃຫ້ຄົວທັງຫຼາຍໃນເມືອງສຸຍຍ້າຍມາຢູ່ຝາກນ້ຳຖິ່ມທາງພື້ໜົດ( ຝາກຄັງນະແລ່ນ ຫຼືໜາແລ່ນ). ໃນຣະຫວ່າງນັ້ນແຂວງຫົວພັນໄດ້ຂຶ້ນກັບເມືອງພວນ. ຄັນເຖິງປີຣວາຍເຈົ້ ຈ.ສ. ໑໑໑໙ ເພັນແສນຄິດກະບົດຕໍ່ເມືອງພວນ ເຈົ້າອິງຫຼ່ໄດ້ຊິງມີພຼະຣາຊອາຈບາໃຫ້ເອົາຕົວໄປສຳເຣັຈໂທສ ແລະຂ້າເສັຍທັງລູກຊາຍພ້ອມ.

ເຈົ້າອິງຫຼ່ມີພຼະຣາຊໂອຣົສ ໒ ອົງຄ໌ພຼະນາມວ່າ ເຈົ້າສົມພູແລະເຈົ້າຊຽງ ເຈົ້າອິງຫຼ່ສວັນນະຄົຕ ປີກັດເຕົ້າ ຈ.ສ. ໑໑໔໑ ເຈົ້າອິງສີພົມພຼະຣາຊອະນຸຊາໄດ້ຂຶ້ນຄອງຣາຊສົມບັດິຮ່ວມປີ ໃນປີນັ້ນກອງທັພໄທ (໑)ຕີວຽງຈັນທ໌ນແຕ້ກແລ້ວກໍເລີ່ຍຂຶ້ນມາຕີຊຽງຂວາງຈູດບ້ານເຜົາເມືອງເສັຍຫາຍຫຼາຍ.

ເຈົ້າອິງສີພົມສວັນນະຄົຕ ປີຮ້ວງເປົ້າ ຈ.ສ.໑໑໔໙ ເຈົ້າໜໍ່ເມືອງພຼະໂອຣົສເຈົ້າຄຳເໜັ້ນພຼະມຫາອຸປຣາຊໄດ້ຂຶ້ນຄອງຣາຊສົມບັດິຮ່ວມປີ ຢູ່ມາເລີຍເປັນບ້າໂຕນເຂົ້າປ່າໜີໄປ ຝ່າຍເມືອງໃນ້ ເມືອງນ້ອຍດົນແກວສູນຫາຍ ຊາວເມືອງພວນຈຶ່ງຖວາຍພຼະນາມວ່າ ເຈົ້າອິງໂຕນ ມີພຼະຣາຊໂອຣົສ ໒ ອົງຄ໌ພຼະນາມວ່າ ເຈົ້າກາງແລະເຈົ້າຫ້າ(ໄພທິສາຣ).

ຈ.ສ.໑໑໔໔ ເຈົ້າສົມພູບຸຕເຈົ້າອິງຫຼ່ໄດ້ຂຶ້ນຄອງຣາຊສົມບັດິ.ໃນຣະຫວ່າງນັ້ນກວານຮັບກະບົດຕໍ່ເຈົ້າຟ້າແກວ(໒) ໄດ້ຂໍກອງທັພນຳເຈົ້າເມືອງຫຼວງພຼະບາງມາຕີຊຽງຂວາງ ຕີເຖິງເມືອງເຄິງ(ທີ່ໂດນພູຫນ້າຍ)ບໍ່ຊະນະ ກອງທັພເມືອງພວນແຕ້ກໜີກູ້ບຄືນໄປເມືອງຫຼວງພຼະບາງ(໑)

---

(໑) ເຈົ້າພຼະຍາຈັກກີ (ດ້ວງ) ແມ່ທັພບົກແລະເຈົ້າພຼະຍາສຸຣະສີຫ໌ ( ບູນມາ ແມ່ທັພເຮືອຂອງສົມເດັຈພຼະເຈົ້າກຸງທົນບຸຣີ ພຼະບໍຣົມທັມມີກະຣາຊາທິຣາຊ

(໒)ສົມເດັຈຈັກພັຕິຣາຊເຊັ່ນໂລງ **Gia - Long** ຊື່ນ້ອຍທາງວນອັນ **Nguyên Anh.**

(໑ ) ພົງສາວະດາຣເມືອງຫຼວງພຼະບາງວ່າ ເຈົ້າອິນທຣ໌ວົງສາ ພຼະຣາຊໂອຣົສສົມເດັຈພຼະເຈົ້າອິນທຣໂສມ ຕີທັພອົງຈຽວຫຼຽມຕາຫຼຽມເຈັດແຕກໜີ.

ຈ. ສ. ໑໑໔໖ ເຈົ້າສິນພູສ້າງຫໍຄຳຂຶ້ນແລະຄິດບໍ່ປາກຂຶ້ນກັບວຽງຈັນທບໍ໌ ເຈົ້າອິງຣອງ ເຈົ້າເມືອງວຽງຈັນທບໍ໌ກໍ່ເກນທະຫາຣສາມພັນ ໃຫ້ເຈົ້າແກ້ວແລະເຈົ້າບັນທະເສນຄຸມຂຶ້ນມາຕີຊຽງຂວາງ ຈ. ສ. ໑໑໔໗ ເຈົ້າສິນພູກໍ່ເກນກອງທັພໄປສະກັດທາງ ແຕ່ບໍ່ຊະນະ ກອງທັພວຽງຈັນທບໍ໌ເລີຍເຕົ້າກືນມາ ກອງທັພວຽງຈັນທບໍ໌ໄດ້ຫຼູ່ເຂົ້າຊຽງຂວາງ ປີຣວາຍສງ້າ ຈ. ສ. ໑໑໔໘ ເຈົ້າສິນພູກໍ່ໂຕນໜີໄປຢູ່ເມືອງຣັງແຂວງຫົວພັນ.

ຈ. ສ. ໑໑໕໐ ເຈົ້າແກ້ວແລະເຈົ້າບັນທະເສນຕີໄດ້ຊຽງຂວາງແລ້ວ ກໍ່ເລີຍລົງໄປຕີເມືອງຫຼວງພະບາງແຕກ (໒) ເຈົ້າກາງແລະເຈົ້າຫ້າ (ໄພທິສາຣ) ບຸດເຈົ້າໜໍ່ເມືອງ (ອິງໂຕນ) ເກີດວິວາດບາດກັບເປັນເຈົ້າແຜ່ນດິນພວນ. ເຈົ້າໄພທິສາຣແຕ່ງໃຫ້ບາຍໃຊ້ໄປຫາເຈົ້າບັນທະເສນ ແມ່ທັພລ້ານຊ້າງວຽງຈັນທບໍ໌ທີ່ເມືອງຫຼວງພະບາງໆຈຶ່ງແຕ່ງໃຫ້ເຈົ້າແກ້ວຍົກກອງທັພໄປຕີເຈົ້າກາງທີ່ເມືອງຊຽງຂວາງແຕກ ເຈົ້າແກ້ວກໍ່ເລີຍຂຶ້ນໄປເມືອງສຸຍໃນເດືອນກ ໄດ້ຕັ້ງຄ້າງຢູ່ພູທົງບ້ານແລເດືອນບົງ ແລ້ວຂຶ້ນໄປແຂວງຫົວພັນຕາມຕີເຈົ້າສິນພູຈັບໄດ້ພ້ອມດ້ວຍເພັຍເມືອງກັດ ເພັຍເມືອງເສັງ ຄຸມຕົວລົງໄປວຽງຈັນທບໍ໌ ຄັນໄປເຖິງບ້ານງື່ມທ່າຂ້າມຊ້າງສິນດີ ເຈົ້າແກ້ວກໍ່ຂ້າເພັຍເມືອງກັດແລະເພັຍເມືອງເສັງທີ່ນັ້ນ ເອົາແຕ່ເຈົ້າສິນພູລົງໄປກັກໄວ້ເມືອງວຽງຈັນທບໍ໌ໄດ້ ໓ ປີ.

ເຈົ້າຊຽງນ້ອງ ເຈົ້າສິນພູ ເຫັນເປັນການບໍ່ບຸດີທັ້ນດັ່ງນັ້ນ ກໍ່ນີໜັງສືໄປຫາເຈົ້າຟ້າແກວ (໓) ຂໍກອງທັພໄປຕີວຽງຈັນທບໍ໌ແຕກໃນປີຣ້ວາເຕົ້າ ຈ. ສ. ໑໑໕໓. ເຈົ້າສິນພູແລະເຈົ້າຊຽງກໍ່ຣີບຈັດແຈງເອົາຄອບຄົວບ່າວໄພ່ຣາສດອນພວນຂຶ້ນມາຊຽງຂວາງທັນທີ. ຢູ່ໄດ້ປີໜຶ່ງກໍ່ພາກັນຕີຄືວເມື່ອຢູ່ເມືອງແຖງເດືອນຈຽງ ຂຶ້ນ ໑໓ ຄ່ຳ ໃນປີຣວາຂຶ້ນ.

ຈ. ສ. ໑໑໕໔ ເຈົ້າກາງກໍ່ຂຶ້ນມາຕັ້ງບ້ານເມືອງຢູ່ທີ່ນາບົວກເມືອງຄັງ (ລາດບົວກທີ່ເມືອງແປກສໃນນີ້) ຈ. ສ. ໑໑໕໖ ປີກາບບີ ເຈົ້າສິນພູແລະເຈົ້າຊຽງຣິບໂຮມເອົາກຳລັງໄທບອນ ໄທບ້າຍ ຢູ່ໄທຝ່າຍເມືອງແຖງໄດ້ພ້ອມມີແລ້ວ

---

(໒) ແຜ່ນດິນສົມເດັຈພະເຈົ້າອະນຸຣຸທທີ່ພະເຈົ້າຣົ່ມຂາວ.

(໓) ສົມເດັຈຈັກກະພັດ ຣາຊເຊັຽໂລງ Gia - Long

ກໍຍົກລົງມາຕີເຈົ້າກາງທີ່ນາບົວກ  ທັພເຈົ້າກາງແຕກລົງໄປຫາເຈົ້າເມືອງຫລວງພະບາງ (໑)  ຂໍຄວາມຊ່ວຍເຫຼືອໃຫ້ມາຕີເຈົ້າສິນພູງນໍາເຈົ້າກາງໄປຮອດເມືອງສຸຍນໍ່ຫັບ  ກໍກັບຄືນມາຕັ້ງຄ້າຍຢູ່ບ້ານຫາດຸເມືອງຄັງ.

ຈ.ສ. ໑໑໕໙ ປີຮ່ວາຍສີ  ເຈົ້າສິນພູກໍເຂົ້າມາຕັ້ງຢູ່ຊຽງຂວາງຄຸ້ມບູນກອງ

ຈ.ສ.໑໑໖໐ ປີເປີກສ້ງ້າເຈົ້າສິນພູປຸກຫໍຄໍາ ຫໍເປັນແລະສ້າງວັດບູນກອງຂຶ້ນແລ້ວ  ກໍຈັດສົ່ງພະສັງຄະຣາຊບ້ານຍອບລົງໄປຮຽນຮີດຄອງສາສນາທີ່ວຽງຈັນທບ໌ ໃນປີກັດມົດ ຈ.ສ. ໑໑໖໑. ພະສົງຄ໌ຫົວຄູວຽງຈັນທບ໌  ແຕ່ງໃຫ້ຫົວເຈົ້າວັດປ່າຂຶ້ນມາຊຽງຂວາງຕັ້ງຮີດຄອງສາສນາໄວ້. ໃນປີນັ້ນພະສົງຄ໌ລາມເບຣໃນເມືອງພວນ  ຈຶ່ງບໍ່ທົ່ງຜ້າແດງແລະເຂົ້າກັນນອກເຂດ.

ຈ.ສ. ໑໑໖໒  ເຈົ້າອິນທຣ໌ວົງສ໌ ພະເຈົ້າໄຊເຊດຖາທິຣາຊ ທີ່ ໓ ພະເຈົ້າລານຊ້າງວຽງຈັນທບ໌  ເຫັນວ່າເຈົ້າສິນພູສ້າງບ້ານແປງເມືອງ  ດີດີເຈີນລວດເລວກໍແຕ່ງໃຫ້ເຈົ້າອນຸຣຸທຣາຊ(ຊຶ່ງໄທໄດ້ນັກເອີ້ນສັ້ນໆວ່າ  ເຈົ້າອະນຸຫຼື ເຈົ້າອະນຸວົງກໍມີ)  ເອົາກໍາລັງທັພຂຶ້ນມາຈັບເອົາເຈົ້າສິນພູແລະຊາຍາລົ່ງໄປກັກໄວ້ຢູ່ງຈັນທບ໌ເຖິງປີຮ້ວງເຮົາ ຈ.ສ. ໑໑໖໓ ມີໂອຣົສອົງຄ໌ ໑  ພະນາມວ່າເຈົ້າໜໍ່ເມືອງ(ເຈົ້າຄໍາໂກດ໌)  ສົມເດັຈພະເຈົ້າອິນທຣ໌ວົງສ໌ເຫັນວ່າເມືອງພວນບໍ່ມີຜູ້ສໍາຄັນແລ້ວ  ກໍຊົງແຕ່ງໃຫ້ຊານຸບຕຼ໌ ຂ້າຫລວງຂຶ້ນມາເຮັດສັນນະໃນເມືອງພວນ  ເພື່ອໃຫ້ກັບເມືອງລ້ານຊ້າງວຽງຈັນທບ໌ເດັດຂາດ.

ຈ.ສ. ໑໑໖໔ ປີເຕົ່າເສັຈ  ເຈົ້າສິນພູສິ້ນພະຊົນມ໌ທີ່ເມືອງວຽງຈັນທບ໌ ເຈົ້າຊຽງນ້ອງເຈົ້າສິນພູໄດ້ຂຶ້ນຄອງຣາຊສົມບັດໃນເມືອງພວນ  ມີພະຣາຊໂອຣົສອົງຄ໌ ໑ ພະນາມວ່າ  ເຈົ້າສຸທະກະສຸວັນນະກຸມາຣ (ເຈົ້ານ້ອຍ) ຈ.ສ. ໑໑໖໕ ປີກາເຕົ້ ເຈົ້າຊຽງສວັນນະຄົດ  ເຈົ້ານ້ອຍໄດ້ຂຶ້ນຄອງຣາຊສົມບັດມີພະຊົນມາຍຸ ໑໔ ປີ

ສົມເດັຈພະເຈົ້າອິນທຣ໌ວົງສ໌  ພະເຈົ້າລ້ານຊ້າງວຽງຈັນທບ໌ ສວັນນະຄົດ  ເດືອນຈຽງໃນປີນັ້ນ  ເຈົ້າກາງຊຶ່ງໜີໄປຢູ່ເມືອງກາສີ  ຍົກກອງທັພຂຶ້ນໄປທາງທ່າເຮືອ  ມາຕັ້ງຫໍໂຮງຄ້າຍໄດນ · ຢູ່ທີ່ນາລ່າວ

---

(໑)ສົມເດັຈພະເຈົ້າອນຸຣຸທທີ່ ພະເຈົ້າຣົ່ມຂາວ

ນານ(໑)ເຈົ້ານ້ອຍກໍໃຈນຕີເຈົ້າກາງບານແຖໃກ້ຮຸ່ງຄືນເດືອນຍີ່ ຂຶ້ນ ໑໐ ຕໍ່ ໑໑ ຄ່ຳ ເຈົ້າກາງແຕກໜີໄປເມືອງພັ້ນ ຢູ່ໄດ້ ປີ ເດືອນ ກໍກັບຂຶ້ນມາຢູ່ຊຽງຂວາງ ຂໍເພິ່ງອິ່ນເງົາເອົາແກ້ວບູນສົມພານຂອງເຈົ້ານ້ອຍ.

ຈ.ສ. ໑໑໖໖ ເຈົ້າອນຸຣຸທຣາຊໄດ້ຂຶ້ນຄອງຣາຊສົມບັດເປັນພະເຈົ້າລ້ານຊ້າງວຽງຈັນທບ໌.

ພະເຈົ້າອນຸຣຸທຣາຊແຕ່ງໃຫ້ຣາຊທູຕຖືພະຣາຊສາສນ໌ມາຖວາຍເຈົ້ານ້ອຍ ຮັບຮູ້ຈັກອານາຈັກຣ໌ພວນແລະຣາຊການເຈົ້ານ້ອຍ. ຣາຊທູຕກໍປຸ່ນຕົວເປັນເສນາ ຫາວິຖີທາງເຮັດສັນນະໃນເມືອງພວນ ແລະຣິດສິງພະສັງຄະຣາຊວັດສີພົມ ພ້ອມໃນເດືອນ ໑໒ ແຮມ ປີ ຄ່ຳ.

ຈ. ສ. ໑໑໗໒-໗໗ ພ້ວກຂ້າໃນດິນພວນຄິດກະບົດຈະຕັ້ງຕົວເປັນເອກະຣາຊ ແລະວ່າພະເຈົ້າເຈືອງໄດ້ເກີດຂຶ້ນທີ່ບວມທານ (໑) ໃຫ້ພ້ວກຂ້າທັງຫຼາຍໄປໂຮມກັນທີ່ນັ້ນເພື່ອຮັບຄຳສັ່ງ. ເຈົ້ານ້ອຍຈັບນາຍຂ້າຫົວໜ້າກະບົດໄດ້ເອົາມາທຳໂທສ ການກະບົດກໍລົງບລົງທັນທີ.

ຈ. ສ. ໑໑໘໔ ປີເຕົ່າສງ້າ ເຈົ້ານ້ອຍໄດ້ສ້າງຫໍຄຳ ຫໍໂຮງ ຄ້າຍຄູ ໂດນສນາມເພາະ(໒) ຈັດຕັ້ງກອງທະຫານ ອາວຸທຍຸທພັນ ເສນາອາມາຕຍ໌ ຣາຊນິບຕິ ຂຶ້ນເປັນອັນມາກ ຢ່າງນະໂຫຣານໜ້າຊົມເຊີຍແລະສັນຣະເສີນ.

ຈ. ສ. ໑໑໘໕ ປີກ່ານົດ ທ້າວຂຸນວຽງຄຳ ( ເມືອງຄຳ ) ຄິດກະບົດຕໍ່ເຈົ້ານ້ອຍ ລົງໄປວຽງຈັນທ໌ຟ້ອງຕໍ່ພະເຈົ້າອນຸຣຸທຣາຊວ່າ ເຈົ້ານ້ອຍສ້າງຄ້າຍຄູຫໍຮົບ ແລະຈັດຕັ້ງກອງທະຫານສຳຫຼັບໄວ້ສູ້ຮົບກັບວຽງຈັນທ໌. ພະເຈົ້າອນຸຣຸທຣາຊ ຈຶ່ງແຕ່ງໃຫ້ນັກພູມີບຂຶ້ນມາຈັບເອົາເຈົ້ານ້ອຍລົງໄປວຽງຈັນທ໌.

ຈ. ສ. ໑໑໘໗ ປີຮ້ວງເຮົ້າ ພະເຈົ້າອນຸຣຸທຣາຊ ມີພະຣາຊໂອງການ

---

(໑)ຢູ່ທີ່ສຕາວັນຕກສຽງໄຕ້ໃກ້ເມືອງຊຽງຂວາງ. ເມື່ອເຈົ້ານ້ອຍກັບເຈົ້າກາງພີ່ນ້ອງຖືກຕ້ອງຄອງກັນດີແລ້ວ ກໍທຳບູນໃຫ່ງໃສ່ທີ່ນັ້ນນານໄດ້ ປີ ເດືອນ ບ່າວສາວສູ້ສົມເອັດກັນຈົນນາງມີລູກ ບ່ອນ ນັ້ນຈຶ່ງຊື່ວ່າ "ບາສາວນານ". ດຽວນີ້ຊາວພວນເອີ້ນວ່າ«ສະນ່ານ»

(໑) ທີ່ງໃຫເຫຼົ້າເຈືອງໄກຊຽງຂວາງ ໒໕ ກິໂລແມດ ທິສຕາວັນຕົກສຽງເໜືອ

ໂປດໃຫ້ພະຍາເມືອງສຸຍ ແລະພະຍາຊຽງດີ ຄັດເລືອກເອົາຜູ້ທີ່ສາມາດຈະຄອບຄອງເມືອງພວນໄດ້ຕໍ່ໄປນັ້ນຖວາຍ. ພະຍາໝາກຂີ້ກາທັງ ໖ ພ້ອມກັນລາຍງານທູນຖວາຍຄວາມເຫັນວ່າ ເຈົ້າຄຳໂກດ (ເຈົ້າໜໍ່ເມືອງ) ບຸດເຈົ້າສິນພູ ທີ່ບວຊຢູ່ຖ້ຳນາດນັ້ນ ສົມຄວນເປັນພະເຈົ້າແຜ່ນດິນເມືອງພວນໄດ້. ພະເຈົ້າອນຸຣຸທຣາຊ ຈຶ່ງແຕ່ງໃຫ້ນັກພູມິນແລະພະຍາຊຽງດີຖືຂັນນິມົນຕ໌ໄປຣາທະນາພະຄຳໂກຕ໌ເລີຍບໍ່ຮັບຂັນນິມົນຕ໌.

ຝ່າຍເຈົ້ານ້ອຍຖືກກັກຢູ່ວຽງຈັນທນ໌ ມີໂອຣົສອົງຄ໌ ໑ ຊື່ເຈົ້າໂປ້. ຣະຫວ່າງນັ້ນພະເຈົ້າອນຸຣຸທຣາຊມີອາຊະໄນຕົວຫຽ້ນໂຫດ ບໍ່ມີຜູ້ໃດສາມາດຫັດໄດ້ເຈົ້າເຈົ້ານ້ອຍເປັນຜູ້ຫັດມ້າຫຼິ້ນຖວາຍໄດ້ເປັນທີ່ຊອບພະໄທ ຈຶ່ງຊົງພະມຫາກະຣຸນາໂປດໃຫ້ເຈົ້ານ້ອຍສເດັຈກັບຄືນຊຽງຂວາງ ມີໂອຣົສອີກ ໔ ອົງຄ໌ ພະນາມວ່າເຈົ້າອຶ່ງ ເຈົ້າອ່າງ (ເຈົ້າກ່ຳ) ເຈົ້າທັບແລະເຈົ້າໝົນມາ.

ຈ.ສ. ໑໑໘໘ ປີຣວາຍເສັຈ ພະເຈົ້າອນຸຣຸທຣາຊຊົງຄິດການຈະກູ້ຊາດຈຶ່ງຍົກກອງທັພໄປຕີເທຣັອດໂຄຣາຊ.

ຈ.ສ. ໑໑໘໙ ປີເມີງໄກ້ ວຽງຈັນທນ໌ແຕ່ງນາຍໄຊຂຶ້ນມາຂໍທະຫານພວນນຳເຈົ້ານ້ອຍ ເພື່ອໄປຮັກສາວຽງຈັນທນ໌ ແຕ່ບັງເອີນໃຫ້ເມືອງພວນໄດ້ຮັບຂ່າວວ່າ ມື້ເດືອນ ໓ ຂຶ້ນ ໘ ຄ່ຳ ເມືອງຫຼວງພະບາງ ຊຽງໃໝ່ ແພ່ ນ່ານ ລຳປາງແລະລຳພູນ ຈະຍົກລົງມາຕີຊຽງຂວາງ ເຈົ້ານ້ອຍຈຶ່ງບໍ່ສົ່ງທະຫານໄປວຽງຈັນທນ໌. ເດືອນ ໓ ແຮມ ໑໔ ຄ່ຳ ພະເຈົ້າອນຸຣຸທຣາຊ ຊົງຖອຍທັພອອກຈາກໜອງບົວລຳພູມາຮອດວຽງຈັນທນ໌ ແລ້ວຊົງເຊີນໃຫ້ເຈົ້ານ້ອຍລົງໄປເຝົ້າ. ຄັນເຖິງວຽງຈັນທນ໌ແລ້ວພະເຈົ້າອນຸຣຸທຣາຊກໍຊົງມອບພະບໍຣມວົງສານຸວົງສ໌ໃຫ້ເຈົ້ານ້ອຍເອົາຂຶ້ນໄປຮັກສາໄວ້ຊຽງຂວາງ. ເຈົ້ານ້ອຍໄດ້ພາເອົາຄອບຄົວພະເຈົ້າອນຸຣຸທຣາຊອອກຈາກວຽງຈັນທນ໌ຍາມເຊົ້າ ມື້ຮອງເຮົ້າວັນສຸກຣ໌ ເດືອນ ໗ ແຮມ ໖ ຄ່ຳໃນວັນດຽວນັ້ນຍາມແລງໃກ້ຄ່ຳ ພະເຈົ້າອນຸຣຸທຣາຊ ກໍສເດັຈລ່ອງລົງໄປເມືອງແກວ.

---

(໖) ທີ່ພູຈອມເພັຊຍັງເຫັນສນາມເພາະຂອງເຈົ້ານ້ອຍສ້າງກວ້າງ ໑ມ໕໐ ເລິກ ໖ມ໐໐ ຍາວ ໑໐ ກິໂລແມດ ອ້ອມເມືອງຊຽງຂວາງ.

ກອງທັພໄທ(໑) ກໍເຂົ້າປຸ້ນລ້າງເພຈູດເຜົາວຽງຈັນຫມົດ. ເຈົ້ານ້ອຍໄດ້ພາເອົາຄອບຄົວພະເຈົ້າອະນຸຣຸທຣາຊມາເຖິງຊຽງຂວາງ ເດືອນ ໘ ຂຶ້ນ ໗ ຄ່ຳ ຊົງວິຕົກຢ້ານກອງທັພໄທຈະຂຶ້ນໄປຊຽງຂວາງ ຈຶ່ງແຕ່ງໃຫ້ນາຍໃຊ້ລົງໄປຂໍທະຫານແກວມາຮັກສາເມືອງພວນຊ່ວຍ ແກວ(໒)ໃຫ້ທະຫານແຕ່ ໑໒໐ ຄົນເທົ່ານັ້ນ. ໃນປີດຽວນັ້ນ ສົມເດັຈພະເຈົ້າລ້ານຊ້າງຮົ່ມຂາວຫລວງພະບາງມັງທາຕຸຣາຊ ແຕ່ງໃຫ້ຣາຊທູດຖືພະຣາຊສາສນ໌ມາເຊີນເຈົ້ານ້ອຍລົງໄປເຝົ້າ ເພື່ອທຳໜັງສືສັນຍາມິຕຕະພາພ ເຈົ້ານ້ອຍໄດ້ແຕ່ງໃຫ້ເຈົ້າຣາຊວົງສ໌(?)ແລະພະຍາຊຽງດີໄປຕາງ. ຄັນໄປເຖິງເມືອງສູບ ເຈົ້າຣາຊວົງສ໌ກໍກັບຄືນ ແຕ່ງໃຫ້ອູນເສດພົນແທນຕົວໄປກັບພະຍາຊຽງດີ. ຄັນເຖິງຫລວງພະບາງແລ້ວພະຍາຊຽງດີແລະອູນເສດພົນເລີຍບໍ່ປະຕິບັດໄປທາງດີ ມີແຕ່ຄິດຈະເອົາດິນພວນເຄິ່ງນຶ່ງໃຫ້ເມືອງຫລວງພະບາງ ເພື່ອຂໍຄວາມດີຄວາມຊອບນຳເຈົ້ານະຄອນຫລວງພະບາງບໍ່ເຫັນດີ ກໍເລີຍພາກັນໄປບາງກອກຫາເຈົ້າໄທ.

ເມື່ອເຈົ້ານ້ອຍຊົງຊາບວ່າ ພະຍາຊຽງດີແລະອູນເສດພົນຄິດກະບົດດັ່ງນັ້ນ ທັງຊົງວິຕົກຢ້ານພວກກະບົດສອງນີ້ ຈະເອົາທະຫານມາຕີຊຽງຂວາງ ຈຶ່ງແຕ່ງກອງທະຫານໄປລັດທ່າງໄວ້.

ໃນປີດຽວນັ້ນອີກ ແກວຂຶ້ນມາຕີຊຽງຂວາງ ເຈົ້ານ້ອຍກໍໄດ້ເກນທະຫານອອກຕໍ່ຣົບເປັນສາມາຖ ແຕ່ສູ້ບໍ່ໄຫວ ເລີຍຍອມຂຶ້ນຕໍ່ແກວ.

ຈ.ສ. ໑໑໙໐ ປີເປີກເຈົ້ ເດືອນ ໖ ຂຶ້ນ ໙ ຄ່ຳ ພະຍາຊຽງດີແລະອູນເສດພົນກັບຄືນມາແຕ່ບາງກອກ ເມື່ອເຖິງບ້ານສອດ ເຈົ້ານ້ອຍກໍມີລາຍພະຫັດໄປລັດພະຍາຊຽງດີມີໃຈຄວາມວ່າ ຄວາມຜິດຂອງພະຍາຊຽງດີຊຶ່ງມີຕໍ່ພະກະສັດນີ້ນັ້ນຈະຄວນປະການໃດ? ຈົ່ງໃຫ້ພະຍາຊຽງດີຕັດສິນໃສ່ຕົນເອງເທີ້ນ ເມື່ອພະຍາຊຽງດີຮູ້ສຶກວ່າໂທສຂອງຕົນເຖິງປະຫານຊີວິດແລ້ວ ກໍປົງໃຫ້ນາຍ

---

(໑)ພະຍາຣາຊສຸພາວະດີ(ສິງຫ໌-ສິງຫ໌ເສນີ) ແມ່ທັພຂອງສົມເດັຈພະນັ່ງເກົ້າ(ພະຣາມາທີ່ ໓)

(໒)ສົມເດັຈຈັກກະພັດຕິຣາຊ ມິນມ່າງ **Minh-Mang** .

ໃຊ້ຂ້າຕົວຕາຍທີ່ບ້ານສອດ ມື້ເດືອນ ໗ ແຮມ ໑໗ ຄ່ຳ.
ແຕ່ນັ້ນມາ ມີເຈົ້າສາຣບຸດ ເຈົ້າກາງຊຶ່ງໜີໄປຢູ່ເມືອງກາສີນັ້ນ ໄດ້ກັບຄືນມາ ມາຢູ່ຊຽງຂວາງ ເຈົ້ານ້ອຍເຫັນເຈົ້າສານເປັນຜູ້ມີຄວາມສລາດຜາດຜາຍ ກໍ່ຕັ້ງໃຫ້ເປັນເສນາບໍດີກະຊວງທັມມກາຣ.

ຈ.ສ. ໑໑໙໐ ເດືອນ ໓ ແຮມ ໑໔ ຄ່ຳ ພຼະເຈົ້າອນຸຣຸທຣາຊສເດັຈມາແຕ່ເມືອງແກວລ່ານ້ຳ (໑) ມີທະຫານແກວມາພ້ອມສາມພັນເຖິງລາດຮ້ວງ ພຼະເຈົ້າອນຸຣຸທຣາຊເລີຍສເດັຈໄປຊຽງດີ. ຄັນເຖິງເດືອນ ໘ ແຮມ ໖ ຄ່ຳ ທະຫານແກວກັບຄືນໝົດ ຍັງເຫຼືອແຕ່ສາມສິບເທົ່ານັ້ນ.

ພຼະເຈົ້າອນຸຣຸທຣາຊສເດັຈຈາກເມືອງພວນໄປເຖິງວຽງຈັນທນ໌ ເດືອນ ໑໐ ແຮມ ໑ ຄ່ຳ ເຫັນບ້ານເມືອງຮ້າງມ້າງເພພັງໝົດ ກໍເຂົ້າພັກຢູ່ທີ່ວັດພຼະແກ້ວ. ໄທຊາບກໍຂຶ້ນມາຕີວຽງຈັນທນ໌ເດືອນ ໑໑ ແຮມ ໓ ຄ່ຳອີກ. ພຼະເຈົ້າອນຸຣຸທຣາຊ ກໍໄດ້ໜີສເດັຈຂຶ້ນມາທາງບາຂີນບາງາ ເຖິງບ້ານໄຮ້ເມືອງຈີນຖ້ຳນາກັນ ທະຫານບວນກອງໝານຂັດຕິຍະເມືອງນ່ານນຳມາທັນ ກໍຈັບເອົາພຼະເຈົ້າອນຸຣຸທຣາຊໄດ້ທີ່ນັ້ນ ໃສ່ຫັບຫວາຍຫາມໄປໃຫ້ເຈົ້າພຼະຍາຣາຊສຸພາວະດີ ທີ່ເມືອງວຽງຈັນທນ໌.(໑)

ຈ.ສ. ໑໑໙໑ ເດືອນຈຽງ ແຮມ ໗ ຄ່ຳ ເຈົ້າແຜ່ນດິນແກວ(໑)ກໍແຕ່ງກອງທະຫານຂຶ້ນມາຈັບເອົາເຈົ້ານ້ອຍແລະຄອບຄົວລົງໄປເມືອງແກວ ຫາວ່າເຈົ້ານ້ອຍຈັບເອົາພຼະເຈົ້າອນຸຣຸທຣາຊໄປໃຫ້ໄທ ແລ້ວປະຫານຊີວິດເຈົ້ານ້ອຍເສັຍໂດຍບໍ່ມີເຫດຸຜົລຢ່າງໃດ. ເມື່ອຄອບຄົວຂອງເຈົ້ານ້ອຍເດີນທາງໄປເຮືອຫຼົ້ມແກ້ງນ້ຳໄນ້ ພຼະມະເຫສີກໍຈົມນ້ຳທິວົງຄົດ ຍັງແຕ່ພຼະຣາຊໂອຣົສ ໕ ອົງຄ໌ ເຈົ້າໂປ້ ເຈົ້າອຶ່ງ ເຈົ້າອ່າງ(໒) ເຈົ້າທັພແລະເຈົ້າພົມມາ ແກວໄດ້ຊ່ວຍເອົາອອກມາລ້ຽງໄວ້ເຖິງ ໒໐ ປີ..

ຄັນໝົດບຸນເຈົ້ານ້ອຍໄປແລ້ວ ເມືອງພວນບໍ່ມີກະສັດິຍ໌ສືບແທນເຖິງ ໒ ປີ ມີແຕ່ກວານຟູແກວເອົາທະຫານແກວ ໒໐໐ ມາຕັ້ງຄ້າຍຢູ່ທີ່ຄັງດາຄາວຮັກສາຊຽງຂວາງ ແລ້ວແກວກໍຕັ້ງເຈົ້າສາຣເສນາບໍດີກະຊວງທັມມກາຣຂຶ້ນ

---

(໑) ນ່ຳບໍຈິນ **Nam-Bô-Chinh** ຫຼືດົງເງ **Ngé-an** ຫຼືວິນ **Vinh**

ຄອງຣາຊສົມບັດ ປີຣ້ວງເໝົາ ຈ.ສ. ໑໑໘໙ ເປັນກະສັດຍ໌ຄອບຄອງແຜ່ນດິນພວນຕໍ່ໄປໂດຍຢູ່ໃນຄວາມຄ້ວບຄຸມຂອງແກວ ຈະເອັດພິເລີງຈັດການອັນເດີ ກໍຍັງເກີດ ເຈົ້ານາຍບ່າວໄພ່ຣາສດອນເດືອດຮ້ອນຫຼາຍເຫຼືອກຳໜົດ ດ້ວຍຄວາມກົດຂີ່ຂົມເຫັງເຕັງເຕັກຂອງພວກແກວ ຫາອັນເດີ ຈະເປັນຜົລໃຫ້ແກ່ບ້ານເມືອງບໍ່ມີໆແຕ່ທຳວຸ້ນວາຍເທົ່ານັ້ນ ແລະເມື່ອນັກຫາເຈົ້າແຜ່ນດິນແກວເອົາເຈົ້ານ້ອຍໄປຂ້າຖິ້ມດັ່ງນັ້ນແລ້ວ ເຈົ້ານາຍບ່າວໄພ່ຣາສດອນພວນກໍເຫັນວ່າ ຈະອົດຢູ່ຕໍ່ໄປບໍ່ໄດ້ ປີກາບສ້ງ້າ ຈ.ສ. ໑໑໘໙ ເຈົ້າສາຣຈຶ່ງແຕ່ງຄົນໃຊ້ໄປຂໍກອງທັພນຳເຈົ້າແຜ່ນດິນໄທ ເພື່ອມາຕີແກວໜີ ສົມເດັຈພະນັ່ງເກົ້າໂປດໃຫ້ພະຣາຊສຸຣິນ ເປັນແມ່ທັພຄຸມທະຫານປະມານພັນປາຍ ສົມເດັຈພະເຈົ້ານັ່ງທາຕຸຣາຊ ພະເຈົ້າລ້ານຊ້າງຮົ່ມຂາວຫຼວງພະບາງ ຈຶ່ງແຕ່ງໃຫ້ເຈົ້າອຸປຣາຊອະໄພເປັນແມ່ທັພຄຸມທະຫານປະມານພັນປາຍມາຊ່ວຍເມືອງພວນ ຍັງບໍ່ທັນມາຮອດຊຽງຂວາງ ເຈົ້າສາຣກໍເອົາທະຫານພວນມາຈົນຂ້າແກວໃນກາງຄືນ ແກວເຫຼືອແຕ່ຜູ້ນຶ່ງສອງຄົນໂຕນໜີໄປເມືອງແກວ

ຢູ່ໄດ້ສອງວັນກອງທັພໄທແລະລາວຈຶ່ງມາເຖິງຊຽງຂວາງ ແມ່ທັພໄທພູດກັບເຈົ້າສາຣວ່າ ອາການເປັນດັ່ງນີ້ແລ້ວ ເຫັນທີ່ຍວນຈະກັບມາຣົບເມືອງພວນອີກ ເຈົ້າສາຣຈະຄິດຈະທຳປະການໃດ? ຈະໃຫ້ກອງທັພໄທຢູ່ເມືອງພວນນີ້ຕໍ່ໄປບໍ່ໄດ້. ຄັນກອງທັພໄທບໍ່ຢູ່ແລ້ວ ຍວນຈະກັບມາເມືອງພວນເປັນແນ່. ແມ່ທັພໄທຈຶ່ງບັງຄັບໃຫ້ເຈົ້າສາຣກວາດເອົາຄົວພວນລົງໄປເພື່ອຕັ້ງຢູ່ພັນລ່ຳ. ຄົວພວນ ໖໐໐໐ ຄົນ ຖືກຍັວກເຂົ້າໄປຮອດຫາງອງກາຍແລ້ວຈະເອົາເລີຍໄປບາງກອກ ເມື່ອເຫັນດັ່ງນັ້ນ ເຈົ້າສະແລະເຈົ້າສາລີບຸດເຈົ້າເໝັ້ນນ້ອຍ ກໍຕ້ອນເອົາຄົວລັກໜີດຶນມາໄດ້ ໓໐໐໐ ຄົນ ແຕ່ນາງນຳທາງ

---

(໑)ບໍ່ແມ່ນເຈົ້ານ້ອຍຈັບພະເຈົ້າອນຸຣຸທຣາຊໃຫ້ໄທ ຕາມດັ່ງພົງສາວະດານຂອງທ່ານເລີບູລອງເຊ (Le Laos par Paul Le Boulanger) ຊຶ່ງນຳເອົາຄວາມນັ້ນມາແຕ່ພົງສາວະດານຂອງຍວນ.

(໒)ສົມເດັຈຈັກກະພັດຣາຊມິນມ່າງ Minh-Mang(໓)ຕາຍດຶກນ້ຳອ້າຍນ້ອງເອົາຂີ້ເທົ່ານາຄັບຫົງຄຶງກຳດຳ ຈຶ່ງດີນແລ້ວໄສ່ຊວ່າ ເຈົ້າກຳ.

ອີກເຂົ້າຕາຍຫຼາຍ ສ່ວນຄົວຊຶ່ງບໍ່ໜີຄືນມານຳໝູ່ນັ້ນ ຖືກບົວະໄປຕັ້ງບ້ານຢູ່ທ່າສາບ.

ເຈົ້າສາຣໄດ້ເປັນເຈົ້າແຜ່ນດິນພວນແຕ່ ໔ ປີ ກໍຖືກໄທເອົາລົງໄປເມືອງໄທ ປະເມືອງພວນບໍ່ມີເຈົ້າແຜ່ນດິນ ບ່າວໄພ່ຣາສດອນພາກັນລີ້ຊ່ອນຢູ່ປ່າຢູ່ພູໄປ ແລ້ວແກວກໍຍົກກອງທັພຂຶ້ນມາເມືອງພວນຫຼາຍ ກວດດູບໍ່ເຫັນທັພໄທ ເຫັນແຕ່ຣາສດອນເລັກນ້ອຍ ແກວກໍຖອດກອງທັພກັບຄືນໄປໝົດ ປະແຕ່ກວານຟູກັບທະຫາຣ ໑໐໐ ຄົນເທົ່ານັ້ນຕັ້ງຢູ່ເມືອງຄຳ ກວານຟູແກວຕັ້ງຢູ່ວຽນຄຳ. ຈັດຣາຊກາຣໂດຍຕາມຂນົບທຳນຽມຂອງພະເຈົ້າແຜ່ນດິນພວນ ໃຫ້ເມືອງພວນມີ ໘ ຕອນດິນ ແລ້ວໃຫ້ຣາສດອນຄັດເລືອກເອົາ ທ້າວເພັຍ ໘ ຄົນ ເປັນອົງຄ໌ວຽນ ຕຳແໜ່ງເສນາຮັກສາ ຂຶ້ນຢູ່ໃນຄວາມປົກຄອງຂອງກວານຟູແກວ **(Traminh Phu 8 Huyèn)** ຄື -

໑ - ວຽນກວາງ ແມ່ນເມືອງຊຽງຂວາງ ໃຫ້ພະຍາຊຽງຄູນຢູ່ຮັກສາ.

໒ - ວຽນຄັງ ແມ່ນເມືອງຄັງ ໃຫ້ພະຍາເມືອງຄັງຢູ່ຮັກສາ.

໓ - ວຽນແສນ ແມ່ນເມືອງແສນ ໃຫ້ອົງຄ໌ນ້ອງເຈົ້າຊີວິດອຸປຣາຊແສນເມືອງຢູ່ຮັກສາ.

໔ - ວຽນກັດ ແມ່ນເມືອງກັດ ໃຫ້ພະຍາເມືອງກາງຢູ່ຮັກສາ.

໕ - ວຽນຄຳ ແມ່ນເມືອງຄຳ (ບ້ານບານ) ໃຫ້ພະຍາເມືອງຄຳຢູ່ຮັກສາ.

໖ - ວຽນສຸຍ ແມ່ນເມືອງສຸຍ ໃຫ້ໝື່ນສຸຍຢູ່ຮັກສາ.

໗ - ວຽນຣຽນ ແມ່ນເມືອງຫົວພັນຣຽນ ໃຫ້ເພັຍຫົວພັນຢູ່ຮັກສາ.

໘ - ວຽນຫນອກ ແມ່ນເມືອງໜອກ (ທຳໂຫມ) ໃຫ້ໝື່ນຫນອກຢູ່ຮັກສາ ແລ້ວຊ້ຳແບ່ງເປັນຕອນດິນອີກ ໃຫ້ພະຍາຕີນແທ່ນແລະຕີນຊຽງ ເສນາຜູ້ໃຫຍ່ ຮັກສາອີກດ້ວຍ.

ເຈົ້າສາລີເຖິງຊຽງຂວາງແລ້ວ ກໍເລີຍປາກເປັນເຈົ້າແຜ່ນດິນພວນ ຈິ່ງປະກາສໃຫ້ບ່າວໄພ່ຣາສດອນທີ່ລີ້ຊ່ອນຢູ່ປ່າຢູ່ພູນັ້ນ ອອກມາຕັ້ງພູມີລຳເນົາຕາມເດີມ. ເຈົ້າສາລີຈິ່ງຈັ່ງໃຫ້ດົງສີ ໄປເຝົ້າສົມເດັຈພະເຈົ້າມັງທາຕຸຣາຊ ພະເຈົ້າລ້ານຊ້າງອິນຂາວຫຼວງພະບາງ ຂໍພະຣາຊທານໄຊຍະບັດ ກັບໄດ້ແຕ່ງໃຫ້ສົງພັນ(໑) ໄປເມືອງແກວດັ່ງດຽວກັນ.

ຕິງຊີໄດ້ໄຊຍະບັດບາແລ້ວ ກໍວັດບໍ່ສົ່ງໃຫ້ເຈົ້າສາລີ ວ່າເຈົ້າສາລີບໍ່ແມ່ນເຈົ້ານາຍຊຽງຂວາງ ເຈົ້າສາລີຄຽດກໍຂ້າຕິງສີຕາຍ. ທ້າວຊຸນ ທ້າວເພັຍເຊັດເຈີກໍພາກັນໄປຫາແກວ ເພິ່ງສິງພັນແລະແກວຖືໄຊຍະບັດຕົ້ນມາຮອດຊຽງໃນ. (Cua Rao) ກໍພ້ອງຕໍ່ແກວວ່າ ບໍ່ຍອມໃຫ້ເຈົ້າສາລີເປັນເຈົ້າແຜ່ນດິນເມືອງພວນເປັນອັນຂາດ ເພາະເຈົ້າສາລີຂ້າຕິງສີຕາຍ ແລະອີກປະການນຶ່ງ ເຈົ້າສາລີບໍ່ແມ່ນເຊື້ອສາຍເຈົ້ານາຍເມືອງພວນນັ້ນ. ເມື່ອແກວຊາບຄວາມພ້ອງດັ່ງນັ້ນ ແກວກໍຍົກມາເມືອງຄຳ ແລ້ວຕັ້ງໃຫ້ທ້າວບຸດດາເມືອງຄຳເປັນອາຈຍາຕິ ປຸ Triphu ປັນເມືອງພວນອອກເປັນ ຊຸ ວຸ້ຍ HuYên ໃຫ້ຢູ່ໃນຄວາມປົກຄອງຂອງແກວຄື ວຸ້ຍຄຳ ວຸ້ຍກວາງ ວຸ້ຍຄັງ ວຸ້ຍກັດ ວຸ້ຍບໍແສນ ວຸ້ຍຮັງມ ວຸ້ຍສຸຍແລະວຸ້ຍຫາອກ(໑)

ເຈົ້າໂປ້ ເຈົ້າອິ່ງ ເຈົ້າອ່າງ ເຈົ້າທັບແລະເຈົ້າພົມ ນາເພະຣາຊໂອຣົສຂອງເຈົ້ານ້ອຍທີ່ແກວລ້ຽງໄວ້ເມືອງແກວໄດ້໒໐ ປີນັ້ນ ກໍຖືກສົ່ງໃຫ້ກັບຄືນມາເມືອງພວນດັ່ງເກົ່າ ເພາະເວລານັ້ນແມ່ເຈົ້າຟ້າແກວສເດັຈທິວົງຄົດ(ຊຸ່ນິນມ່າງ)ເອົາໂພດນັກໂທສ.

ຈ.ສ. ໑໒໑໐ ເຈົ້າໂປ້ໄດ້ຂຶ້ນຄອງຣາຊສົມບັດ ແລະໄດ້ມາພັກຢູ່ທົ່ງຊຽງຄຳເພື່ອຈັດການບ້ານເມືອງທີ່ນັ້ນ ກວານຟູແກວ ກໍຖອດຄືນແກວອອກຈາກເມືອງພວນໄປເມືອງແກວໝົດ.

ຈ.ສ. ໑໒໑ປີ ເຈົ້າໂປ້ເລດັຈມາເຖິງຊຽງຂວາງແລ້ວ ໃຜ່ບ້ານພົນເມືອງພ້ອມກັບຣາຊາພິເສກແລ້ວຖວາຍພະນາມວ່າ ພະເຈົ້າອິສສຣະເຊດຖາ ອົງຄ໌ຄອບຄອງເມືອງມຫາຣັຕນະບູຣີຣົມ ພົນມະຈັກກະພັດ ສົມຫານັກຄະຣະຕັກກະເສລາ ນະຄຣຊຽງຂວາງຣາຊທານີ. ພະອົງຄ໌ຊົງຈັດໃຫ້ພ້ອກອົງຄ໌ວຸ້ຍມາເປັນເສນາບໍດີຢູ່ນຳທີ່ຊຽງຂວາງພ້ອມໝົດ ແລະຕັ້ງພະຣາຊອນຸຊາທັງ໔ ເຈົ້າ

---

(໑) ຈ.ສ. ໑໑໙໙ ເຈົ້າຣາຊວົງສ໌ສຸຂະເສີມເມືອງຫລວງພະບາງ ຟ້ອງເຈົ້າອຸປຣາຊອະໄພ ຫາວ່າແຕ່ງໃຫ້ທ້າວຄຳພັນໄປເມືອງແກວ ຈ.ສ. ໑໒໐໐ ສົມເດັຈພະນັ່ງເກົ້າຖອດບັສລົງເປັນເຈົ້າອະໄພສຸຣິຍະວົງສາ ກັບກຸງເທພຯເລີຍສິ້ນຊີພເສັກທີ່ນັ້ນ.

ອິ່ງ ເຈົ້າອ່າງເປັນເຈົ້າອຸປຣາຊ ເຈົ້າຣາຊບຸດແລະເຈົ້າເກສ ພຼະຣາຊໂອຣົສ ອົງຄ໌ໃຫຍ່ ເປັນເສນາບໍດີກະຊວງຫັມມະກາຣ. ເຈົ້າຫັບບໍ່ໄດ້ເປັນເຈົ້າແຜ່ນດິນ ດ້ວຍເຫຕຸວ່າຕົນເປັນລູກເມັຍນ້ອຍ ກໍເສັຽໃຈ ຫນີໄປພ້ອງຕໍ່ແກວ ງບໍ່ຮັບຮອງ ເຈົ້າຫັບຊ້ຳພາເອົາເຈົ້າພຼົມມານ້ອງຊາຍຫນີໄປບາງກອກຫາເຈົ້າໄທ ສົມເດັຈພຼະຈອມເກົ້າ (ພຼະຣາມາທີ່໔) ຈຶ່ງມີສຸພຼະອັກສຣເຖິງເຈົ້ານະຄຣຫຼວງພຼະບາງ ຂໍຄວາມຊ່ວຍເຫຼືອແກ່ເຈົ້າຫັບ. ສົມເດັຈພຼະເຈົ້າຈັນທຣ໌ເທພປະພາຄຸນຯ ພຼະເຈົ້າລ້ານຊ້າງຮົ່ມຂາວຫຼວງພຼະບາງ ຈຶ່ງມີສຸພຼະອັກສຣເຖິງພຼະເຈົ້າອິສສຣະເຊຕຖາງຊົງຕອບວ່າ ແກວກຳລັງຊອກຈັບເຈົ້າຫັບແລະເຈົ້າພຼົມມາຢູ່ ຢ່າພ້າວໃຫ້ກັບຄືນໄປເມືອງພວນເທີ້ອ ເຈົ້າຫັບຍ້ານກໍພານ້ອງຊາຍຄ້າງຢູ່ເມືອງຫຼວງພຼະບາງ (໑)

ພຼະເຈົ້າອິສສຣະເຊຕຖາ ສວັນນະຄົຕວັນພຸທ ຍາມແຄໃກ້ຮຸ່ງເດືອນ ໑໒ ຂຶ້ນ ໕ ຄ່ຳ ປີຣັບເປົ້າ ຈ.ສ.໑໒໒໗.

ຈ.ສ. ໑໒໒໘ ປີຣວາຍຍີ ເຈົ້າອຸປຣາຊອິ່ງໄດ້ຂຶ້ນຄອງຣາຊສົມບັດ ຊົງຕັ້ງເຈົ້າເກສເສນາບໍດີກະຊວງຫັມມະກາຣເປັນເຈົ້າອຸປຣາຊ ເຈົ້າອ່າງຍັງຄົງເປັນເຈົ້າຣາຊບຸດ.

ຈ.ສ. ໑໒໓໐ ປີກາບເສັດ ຫໍ້ເກີດຳຕີໄດ້ແຂວງຫົວພັນທັງ ໕ ທັງ ໖ ແລ້ວ ກໍລົງມາຕັ້ງຢູ່ບ້ານດອນ (ບ້ານໂດນ) ທົ່ງຊຽງຄຳເມືອງຄຳ. ພຼະເຈົ້າອິ່ງໂປດໃຫ້ເຈົ້າອຸປຣາຊເປັນແມ່ທັພ ຄຸມເອົາໄພ່ພົນຍົກໄປຕີຫໍ້ທີ່ບ້ານດອນ ເຈົ້າອຸປຣາຊຖືກປືນຂ້າເສິກທິວົງຄົດໃນສນາມຣົບວັນຈັນທຣ໌ເດືອນ ໘ ຂຶ້ນ ໑໓ ຄ່ຳ ຍາມແຄໃກ້ທ່ຽງກາງວັນ. ທັພເຈົ້າອຸປຣາຊຍັງຕໍ່ສູ້ຕ້ານທານບໍ່ໃຫ້

---

(໑) ຕັ້ງແຕ່ປີນັ້ນມາ ຄົນທັງຫຼາຍຈຶ່ງຮ້ອງວ່າໄທພວນນີ້ ຫົວຊ່ວຍແກວແອວຫ່ວຍລາວ ຂໍໂທສຢ່າໂກທເນີ.

(໑) ເຈົ້າຫັບເມັຽຊື່ໝ່ອມແພງແກ້ວ ມີລູກຊື່ເຈົ້າບຸນດີກ ເຈົ້າໂງ່ນ ເຈົ້າຕັນແລະເຈົ້ານາງທອງສີ ເຈົ້າບຸນດີກເອົາເມັຽຊື່ເຈົ້າຈັນທຣ໌ສມຸທ ພຼະທິດາເຈົ້າອຸປຣາຊຄຳບົວ ເກີດມີເຈົ້າສຸວັນແລະເຈົ້ານາງຫຼ້າຢູ່ບ້ານຫມີ່ນນາ. ສ່ວນເຈົ້າພຼົມມານັ້ນສືບຫາລູກຫຼານບໍ່ມີ.

ສັຕຣູເຂົ້າມາໃນເມືອງໄດ້ ພຣະເຈົ້າອື່ງຊີງເຫັນວ່າ ທະຫາຣພວນຈະສູ້ຫໍ້ບໍ່ໄຫວ ຈຶ່ງຂໍກອງທັພແກວ (໑) ມາຣົບຫໍ້ຊ່ວຍ ແລ້ວສເດັຈໄປນຳກອງທັພແກວເລີຍຖືກປືນສວັນນະຄົດໃນສນາມຣົບອີກ ແກວກໍ່ເລີກທັພກັບຄືນໄປເມືອງແກວ ປະໃຫ້ຫໍ້ເຂົ້າປຸ້ນ ຈູດບ້ານ ເຜົາເມືອງຂຸດກີ່ນວັດວາອາຣາມ ທາດຸ ເຈດີຍ໌ຂອງພຸທທະສາສນາຫຼາຍແຫ່ງ · ເຈົ້ານາຍບ່າວໄພ່ຣາສດອນມີຄວາມເກງກົວເລີຍອຸປະຍົກໜີໄປຢູ່ດົນເມືອງຫຼວງພຣະບາງ. ແລະວຽງຈັນທນ໌ເປັນອັນມາກ ສ່ວນບັງຄົດເສັຍດາຍຖິ່ນຖານບ້ານເກີດເມືອງນອນ ກໍ່ນຳເອົາເງິນໄປຂໍທູ້ຫໍ້ບ້າງ ພາເອົາຄົວເຂົ້າປ່າລີ້ຊ່ອນຢູ່ຕາມບູນຍະກັມມ໌ບ້າງ.

ຈ. ສ. ໑໒ມີກ ປີຣັບເຕົ້ ສົມເດັຈພຣະຈຸລຈອມເກົ້າ (ພຣະຣາມາທີ່໕) ຊົງຊາບວ່າ ຫໍ້ຍົກລົງມາປຸ້ນສາດົມແຂວງຫົວພັນແລະແຂວງພວນປາຍພຣະຣາຊອານາເຂດດັ່ງນັ້ນ ຈຶ່ງຊົງພຣະກຣຸນາໂປຼດໃຫ້ເຈົ້າພຣະຍາພຸທທະຣາໄພຍ໌ (ເວກ ບູນຍະຣັດພັນທຸ໌) ເປັນແມ່ທັພໃຫຍ່ຍົກໄປຕັ້ງຢູ່ເມືອງພິໄຊຍ໌ - ໃຫ້ພຣະຍາພິໄຊຍ໌ (ດິສ) ເປັນແມ່ທັພຝ່າຍໄທ ເຈົ້າອຸປຣາຊ (ເຈົ້າຄຳບົວ) ເປັນແມ່ທັພຝ່າຍເມືອງຫຼວງພຣະບາງ ແລະເຈົ້າອຸປຣາຊ (ເຈົ້ານ້ອຍຂູຍ) ເປັນແມ່ທັພຝ່າຍເມືອງນ່ານ ຄຸມກອງທັພຍົກອັອກຈາກເມືອງຫຼວງພຣະບາງທາງບ້ານສ້ຽວ ທ່າອູ້ຍ ທ່າໂພ ສົບວີ້ ໄປເຖິງເມືອງຜູ້ ເຈົ້າອຸປຣາຊຄຳບົວເລີຍປ່ວຍໄດ້ກັບຄືນໄປເມືອງຫຼວງພຣະບາງ ກອງທັພພຣະຍາພິໄຊຍ໌ຍົກອອກມາເຖິງບ້ານສູດ ຝ່າຍຫໍ້ໄດ້ຍົກໄປຕັ້ງຄ້າງປົດຕົ້ນທາງຢູ່ຫ້ວງນ້ຳລຳຫາຣ ແລະໂອ້ບອ້ອມລ້ອມຄ້າຍພຣະຍາພິໄຊຍ໌ ຄ້າຍເມືອງຫຼວງພຣະບາງແລະຄ້າຍເມືອງນ່ານໄວ້ ໕ ແຫ່ງ ທັງສອງຂ້າງຕ່າງແຕ່ງກອງທັພອອກຣົບຫໍ້ຕໍ່ສູ້ຢູ່ ໑໗ ວັນ ເວລາກາງຄືນຫໍ້ຍົກໄປຕີປຸ້ນຄ້າຍພຣະຍາພິໄຊຍ໌ ຄ້າຍເມືອງຫຼວງພຣະບາງບໍ່ແຕກ ແຕ່ຄ້າຍເມືອງນ່ານແຕກ ເຈົ້ານ້ອຍຂູຍຖືກປືນຕາຍ ພຣະຍາພິໄຊຍ໌ກໍ່ລ່າທັພຖອຍໄປຕັ້ງຣະວັງຮັກສາບ້ານສອດ ທີ່ເປັນຊ່ອງທາງຫໍ້ຈະຍົກລົງໄປຕີເມືອງຫຼວງພຣະບາງ ຣາຊການທັງນີ້ພຣະຍາພິໄຊຍ໌ຂໍກອງທັພມາຊ່ວຍ ເຈົ້າພຣະຍາພຸທທະຣາໄພຍ໌ ຈຶ່ງຈັດກອງທັພໃຫ້ພຣະສຸຣິຍະພັກດີ(ເວກບູນຍະຣັດ

---

(໑) ສົມເດັຈຈັກກະພັດດີຣາຊຕຶດຶກ **Tu-Duc**

ພັນຫຸ່)(໑) ຍົກຂຶ້ນມາເມືອງຫຼວງພຼະບາງຕາມໄປຊ່ວຍພຼະຍາພິໄຊຍ໌ເຖິງບ້ານສອດວັນສຸກຣ໌ເດືອນ ປີ ແຮມ໖ ຄ່ຳ. ສົມເດັຈພຼະເຈົ້າມຫິນທອນເທພນິພາກອນ(ເຈົ້າອຸ່ນຄຳ)ເຈົ້ານະຄອນຫຼວງພຼະບາງ ຈຶ່ງມີພຼະບໍຣົມຣາຊໂອງການ ໂປຣດໃຫ້ເຈົ້າຣາຊວົງສ໌ສຸວັນນະພົມມາ(໒) ຊຶ່ງຕັ້ງທັພຢູ່ເມືອງຊີມໃນນ້ຳແຊງນັ້ນຣີບເລັ່ງຍົກໄປຊ່ວຍພຼະຍາພິໄຊຍ໌ ເຈົ້າຣາຊວົງສ໌ໄດ້ຍົກມາເຖິງບ້ານສອດກ່ອນກອງທັພພຼະສຸຣິຍະພັກດີຄຸມພົນ ໓໐໐ ເສສເປັນທັພ໑ ກອງພຼະຍາສຸໂຂໄທ(ຄຸທ) ແລະພຼະສຸຣິຍະພັກດີຣວມເຂົ້າກັນມີ ໓໐໐ ເສສເປັນທັພ໑ ກອງພຼະຍາພິໄຊຍ໌ມີ ໗໐໐ ເສສເປັນທັພ໑ ກອງເມືອງນ່ານມີ ໓໐໐ ເສສເປັນທັພ໑ ຣວມເປັນ ໔ ທັພ ກອງເຈົ້າຣາຊວົງສ໌ເປັນທັພໜ້າ. ນະວັນພຸທ ເດືອນ ປີ ແຮມ ໗ ຄ່ຳ ກອງທັພ ໔ ກອງນີ້ ໄດ້ຍົກອອກຈາກບ້ານສອດ ເຂົ້າຕີທັພຫໍ້ແຕກຍັບເຍີນໄປແລະໄລ່ຕິດຕາມຫໍ້ ໄປເຖິງທົ່ງຊຽງຄຳ ພວກຫໍ້ກໍ່ອຸປະຍົກຫຼົບໜີໄປຈາກເມືອງພວນ. ແມ່ທັພໄທກໍ່ກວາດເອົາຄົວພວນລົງໄປເມືອງຫຼວງພຼະບາງ ວ່າຈະເອົາໄປບາງກອກ ເວລານັ້ນໂຣຄອະຫິວາບັງເອີນເກີດຂຶ້ນໃນເມືອງພວນຄົນຕາຍຫຼາຍ ຕິດແປດລຸກລາມຕາມຄົວພວນໄປຮອດເມືອງຫຼວງພຼະບາງ ຢ່າງຈົນຫາຍວາຍວອດ (໑) ຍັງຄົງຄ້າງຢູ່ເມືອງພວນປະມານ ໑໐໐໐ ຄົວເທົ່ານັ້ນ ເພາະວ່າເຈົ້າກ່ຳແລະເຈົ້າອິນທຣ໌ສົມຮ້ອງຄັດຄ້ານບໍ່ໃຫ້ໄທກວາດເອົາໄປ. ເຈົ້າກ່ຳຍັງຊ້ຳໄດ້ລົງໄປບາງກອກຂໍເອົາຄົວພວນຄືນໝົດ ແຕ່ບໍ່ສົມຫວັງເລີຍກັບຄືນຊຽງຂວາງຕາຍເປົ່າ.

ເມື່ອກອງທັພໄທແລະລາວໄດ້ຍົກເລີກໜີໄປແລ້ວ ພວກຫໍ້ກໍ່ກັບຄືນມາ

---

(໑)ບຸດເຈົ້າພຼະຍາພຸທທະຣາໄພຍ໌ ຕໍ່ມາໄດ້ເປັນນາຍພັນເອກພຼະຍາຣາຊວຣານຸກຸລ ແມ່ທັພໄປຣົບຫໍ້ທົ່ງຊຽງຄຳ ປີມົດ ຈ.ສ. ໑໒໔໕ ແລ້ວໄດ້ເລື່ອນຍົສຂຶ້ນເປັນເຈົ້າພຼະຍາສີຫັນນາທິຣາຊ.

(໒)ຕໍ່ມາໄດ້ເລື່ອນຍົສເປັນເຈົ້າອຸປຣາຊ.

(໑)ພວກທີ່ຍັງເຫຼືອຕາຍກໍ່ພາກັນໄປສ້າງວັດສູວັນນະຄີຣີ ເພື່ອໄວ້ເປັນອນຸສາວະຣີຍ໌ແລະອຸທິສຫາພີ່ນ້ອງຊາວພວນ. ເຈົ້າທອງສູນລູກເຈົ້າຍອດແລະເຈົ້ານາງທິພ ກໍ່ໄປໄດ້ເຈົ້ານາງທິພເກສອນ ເຈົ້ານາງສຸນທລາຄອນ ພຼະທິດາເຈົ້າ...

ເມືອງພວນອີກ ເຈົ້າກ່ຳໄດ້ພາເອົາຄອບຄົວບ່າວໄພ່ຣາສດອນເຂົ້າໄປລີ້ຊ່ອນຢູ່ໃນປ່າ ບໍ່ນານເຈົ້າກ່ຳກໍ່ສິ້ນພຣະຊົນມ໌ທີ່ເມືອງອ່າວ.

ເຈົ້າຂັນຕີແລະເຈົ້າສຸວັນພຣະຣາຊໂອຣົສພຣະເຈົ້າອຶ່ງ ໄດ້ພ້ອມກັນສເດັຈລົງໄປຫາພຣະຍາອາມາຕຍ໌ນາຍທັພໄທທີ່ເມືອງໜອງຄາຍຊ້ຳສັ່ງເຈົ້າຂັນຕີແລະເຈົ້າສຸວັນລົງໄປເຝົ້າສົມເດັຈຈຸລຈອມເກົ້າທີ່ກຸງເທພຯ ຊົງສັ່ງກັບຄືນມາຄອງເມືອງພວນ.

ຈ.ສ. ໑໒໓໘ ປີຣວາຍເຈົ້ ເຈົ້າຂັນຕີໄດ້ຂຶ້ນຄອງຣາຊສົມບັດ ຣະຫວ່າງນີ້ບ້ານເມືອງມີເສິກ ສະນັ້ນ ເຈົ້າຂັນຕີພ້ອມດ້ວຍພີ່ນ້ອງ ເຈົ້າອິນທຣ໌ສົມ ເຈົ້າອຸ່ນແກ້ວ ເຈົ້າຄຳໂງ່ນ ເຈົ້າໄຊຍ໌ວົງສ໌ ເຈົ້າພົມມະດີ ເຈົ້າອຸ່ນເຮືອນ (ເຈົ້າເຕືອນ) ເຈົ້າທ່ອງອິນທຣ໌ ແລະເຈົ້າຄຳເຣືອງ ສ້ອງສຸມຜູ້ຄົນຢູ່ໃນປ່າແລ້ວອອກມາສູ້ຣົບກັບພວກຫໍ້ຫຼາຍຄັ້ງ ແຕ່ສູ້ຫໍ້ບໍ່ໄຫວ ຫໍ້ກໍເອົາກັນລົງມາຢູ່ເມືອງພວນເພີ່ມເຕີມທະວີຂຶ້ນ ເຈົ້າຂັນຕີອ່ວາຍໜ້າໄປເພິ່ງແກວຂໍໃຫ້ມາຊ່ວຍກໍບໍ່ໄດ້ເພາະແກວກໍ່ຖືກເກນໄປຣົບເລວປ້ອງກັນບ້ານເມືອງຂອງເຂົາ ເຈົ້າຂັນຕີຈຶ່ງລົງໄປຂໍກອງທະຫານບຳເຈົ້າແຜ່ນດິນຫຼວງພຣະບາງແລະໄທ.

ຈ.ສ. ໑໒໔໕ ປີກາບມົດ ສົມເດັດພຣະຈຸລຈອມເກົ້າ ໂປຣດໃຫ້ພຣະຍາຣາຊວຣານຸກູລ ເປັນແມ່ທັພ ພຣະຍາພິໄຊຍ໌(ນິ່ງ)ແລະພຣະຍາສຸໂຂໄທ(ຄຸທ) ເປັນນາຍທັພ ເຈົ້າອຸປຣາຊສຸວັນນະພົມມາ ເປັນແມ່ທັພ ເຈົ້າຣາຊບຸດ (ເຈົ້າຄຳສຸຂ)(໑)ແລະເຈົ້າບຸນຄົງ(໒) ເປັນນາຍທັພ ຍົກກອງທັພຕີຫໍ້ໄປເຖິງທົ່ງຊຽງຄຳ ເຂົ້າລ້ອມຄ້າຍຫໍ້ໄວ້ ແຕ່ຄ້າຍຫໍ້ຄາວນີ້ໄດ້ຕັ້ງມາຊ້ານານ ຈຶ່ງເຖິງປູກກົກໄຜ່ບັງແທ່ນລະນຽດລ້ອມຮອບ ປືນໃຫຍ່ຂອງກອງທັພໄທບໍ່ສາມາຖຍິງລ້າງກົກໄຜ່ໄດ້ ກອງທັພໄທແລະລາວໄດ້ຍົກເຂົ້າຕີຄ້າຍຫໍ້ຫຼາຍຄັ້ງ ກໍເຂົ້າຄ້າຍບໍ່ໄດ້

---

ອຸປຣາຊສຸວັນນະພົມມາເປັນພຣິຍາ ເກີດມີເຈົ້ານາງຣັທທິດາ ເຈົ້ານາງສົມມາວະດີ ເຈົ້າສີສຸວັນ ເຈົ້າຈັນທຣ໌ວົງສ໌ແລະເຈົ້ານາງຄຳຫຼ້ານົງນາຣີ.

( ໑ )ຕໍ່ມາໄດ້ເລື່ອນຍົສເປັນເຈົ້າຣາຊວົງສ໌ ແລ້ວຂຶ້ນເປັນສົມເດັຈພຣະເຈົ້າສັກກະລິນທຣຣິທ.

(໒)ໄດ້ເປັນເຈົ້າຣາຊພາຄີໃນ ແລ້ວເລື່ອນຍົສຂຶ້ນເປັນເຈົ້າອຸປຣາຊ.

ດ້ວຍພວກຫໍ້ເອົາໂຮກົກໄມ້ບັງຕົວບັງປືນກວາດອອກມາຄັ້ງນຶ່ງ ພຣະຍາຣາຊວຣານຸກູລຍົກເຂົ້າຕີຄ້າຍຫໍ້ເອງ ຖືກປືນຂ້າເສິກທີ່ຂາເຈັບປ່ວຍ ຈຶ່ງສັ່ງໃຫ້ຕັ້ງລ້ອມຄ້າຍຫໍ້ໄວ້ຈົນເຖິງ ໒ ເດືອນ ທະຫານເກີດປ່ວຍເຈັບດ້ວຍຂັດສົນສບຽງອາຫານ ພຣະຍາຣາຊວຣານຸກູລຈຶ່ງຕ້ອງເລີກທັພໄປທາງເມືອງໜອງຄາຍ ເຈົ້າອຸປຣາຊສູວັນນະພົມມາ ກໍເລີກທັພກັບໄປເມືອງຫຼວງພຣະບາງ. ພວກຫໍ້ກໍແບ່ງກັນລົງໄປຕີວຽງຈັນທນ໌ ຂຸດກົ່ນທາດຫຼວງ ວັດວາອາຣາມແລະມ້າງເພບ້ານເມືອງ

ຈ.ສ. ໑໒໔໗ ປີຮັບເຫົ້າ ສົມເດັຈພຣະຈຸລຈອມເກົ້າ ໂປຣດໃຫ້ກົມໝື່ນປຣະຈັກຣົລປາກົນ ເປັນແມ່ທັພຝ່າຍໃຕ້ ພຣະຍາອາມາດຍ໌ແລະພຣະຣາຊສຸຣິນ ເປັນນາຍທັພ ຍົກອອກຈາກເມືອງໜອງຄາຍວັດຫໍ້ຊຶ່ງມາປຼົ້ນສດົມເມືອງວຽງຈັນທນ໌ ແລະໄລ່ຕິດຕາມຕີຂຶ້ນໄປເຖິງເມືອງພວນ ກັບໂປຣດໃຫ້ນາຍພັນເອກເຈົ້າໝື່ນໄວວໍຣະນາດ (ເຈີມ ແສງຊູໂຕ) (໑) ເປັນແມ່ທັພຝ່າຍເໜືອ ນາຍຮ້ອຍເອກຫຼວງດັສກອນປລາດ (ຢູ່) ແລະຫຼວງຈ່ານົງຍຸທະກິຈ ເປັນນາຍທັພ ສົມເດັຈພຣະເຈົ້ານທີນຍ ຊົງແຕ່ງໃຫ້ເຈົ້າຣາຊວົງສ໌ຄຳສຸກແລະເຈົ້າຣາຊພາຄີໃນບຸນຄົງ ຂຶ້ນໄປທຳກອງທັພໄທ ຕີຫໍ້ຊຶ່ງມາປຼົ້ນສດົມແຂວງຫົວພັນ ພວກຫໍ້ກໍ່ອຸປະຍົກທັບໜີອອກຈາກແຂວງພວນແລະຫົວພັນໄປໝົດ.

ຈ.ສ. ໑໒໔໘ ປີຣວາຍເສັດ ກົມໝື່ນປຣະຈັກຣົລປາກົນ ໃຫ້ພຣະຣາຊສຸຣິນກັບທະຫານຕັ້ງຢູ່ຊຽງຂວາງແລະຕັ້ງພຣະຍາທິ່ນເປັນຂ້າຫຼວງ.

ຈ.ສ. ໑໒໔໙ ປີເມິງເຕົ້າ ພຣະຍາທິ່ນ ຄິດຢາກເອົາເມືອງພວນເປັນຂອງໄທ ແລະວິຕົກຢ້ານເຈົ້ານາຍພວນຈະບໍ່ຍອມຂຶ້ນແລະຊື່ສັຈຕໍ່ໄທ ຈຶ່ງຈັບເອົາເຈົ້າຂັນຕີ ເຈົ້າອິນທຣ໌ສົມ ເຈົ້າທອງອິນທຣ໌ ເຈົ້າຄຳໂງ່ນ ເຈົ້າອຸ່ນແກ້ວແລະທ້າວຍະເມືອງຄຳສົ່ງລົງໄປກຸງເທພຯກັກໄວ້ ໙ ປີ ເຈົ້າຂັນຕີ ເຈົ້າອິນທຣ໌ສົມ ເຈົ້າທອງອິນທຣ໌ແລະທ້າວຍະເລີຍເຖິງແກ່ກັມເສັຍທີ່ນັ້ນ. ເຈົ້າຄຳໂງ່ນກັບເຈົ້າອຸ່ນແກ້ວພາກັນລ້ອມໜີໄປຫາຣາຊທູດຝຣັ່ງເສສຶ່ງໄດ້ສົ່ງມາເມືອງລາວ ທາງເມືອງໄຊງ່ອນ ປະເທສແກວໃຕ້ແລະເມືອງຫາຕົນ ປະເທສແກວກາງ ເຈົ້າອຸ່ນແກ້ວເລີຍເຖິງແກ່ກັມທີ່ເມືອງຫາຕົນ(໑) ຍັງແຕ່ເຈົ້າຄຳໂງ່ນອຸສາຫ໌ທຳຣາຊການຢູ່

(໑) ຕໍ່ມາໄດ້ເລື່ອນຍົສເປັນນາຍພົນຕຼີ ພຣະຍາສຸຣະສັກດ໌ມົນຕຼີ.

ນຳຝຣັ່ງ. ເມື່ອບ້ານເມືອງເຂົ້າສູ່ຄວາມສງົບເປັນຂອງຝຣັ່ງແລ້ວ ຈຶ່ງໄດ້ຂຶ້ນມາຊຽງຂວາງ. ສ່ວນທ້າວພາບເມືອງຄຳໄດ້ໂຕນໜີໄປຫາຝຣັ່ງທີ່ເມືອງແກວ ມອງຊີເອີຣ໌ ເລີມີ ເດີ ວີເລ (**Le Myre de Vilers**) ໄດ້ຕັ້ງໃຫ້ເປັນເຈົ້າເມືອງຄຳ ແຕ່ຂຶ້ນມາເມືອງຄຳຍັງບໍ່ໄດ້ ຈຶ່ງໃຫ້ພັກຢູ່ແກ້ງຂອນດິນແກວຕໍ່ລາວ.

ຈ.ສ.໑໒໕໐ ປີເປີກເຈີ້ ພຼະຍາຫໍ່ມຖືກຍ້າຍໜີພຼະນີເວສມາແທນ ກໍຕັ້ງພຼະອິນທຣ໌ຄີຣີ ພຼະພິສາຣ ພຼະພິຈິຕ ທ້າວຊຽງທິພແລະທ້າວຊຽງເພັຊ ເປັນເຈົ້າເມືອງໃນແຂວງພວນ ແລ້ວຫາຄວາມຜິດໃສ່ຈັບສົ່ງລົງໄປກຸງເທພຯ ພຼະອິນທຣ໌ຄີຣີ ພຼະພິສາຣ ພຼະພິຈິຕແລະທ້າວຊຽງເພັຊເຖິງແກ່ກັມເສັຍ ຍັງເຫຼືອແຕ່ທ້າວຊຽງທິພເມືອງຄຳຜູ້ດຽວ.

ຝ່າຍທ້າວພາບທີ່ຢູ່ແກ້ງຂອນ ວິຕົກຢ້ານໄທຈະເອົາຕົວພວນລົງໄປເມືອງໄທຕື່ມ ກໍ່ລົງໄປຫາຝຣັ່ງທີ່ເມືອງບິນບິນ (໑) ມອງຊີເອີຣ໌ລຸຊ (**Luce**) ຈຶ່ງມີໜັງສືໄປຫາມອງຊີເອີຣ໌ ປາວີ (**Pavie**) ຢູ່ທີ່ເມືອງຫຼວງພຼະບາງ ປາວີຈຶ່ງແຕ່ງໃຫ້ມອງຊີເອີຣ໌ ກູນີຍົງ (**Counillon**) ແລະນາຍຈຽມເຂມຣຂຶ້ນໄປຮັບເອົາທ້າວພາບມາຢູ່ເມືອງຄຳ.

ຈ.ສ. ໑໒໕໑ ປີຮັວງເປົ້າ ພຼະນີເວສກໍເອົາທະຫາຣໄປຈັບທ້າວພາບທີ່ທົ່ງຊຽງຄຳ ໄດ້ສູ້ຣົບກັນຂຶ້ນ ທ້າວພາບບາດເຈັບ ຖືກໄທຈັບໄດ້ແລ້ວຄຸມຕົວສົ່ງລົງໄປກຸງເທພຯ.

ຈ.ສ.໑໒໕໕ ປີກາເສົ້ ສົມເດັຈພຼະເຈົ້ານ້ອງຍາເທີ ກົມໝື່ນເທວາວົງສ໌ວະໂຣປະກາຣ ເສນາບໍດີກາຊວງການຕ່າງປຼະເທສສຍາມ ໄດ້ເຊັນສັນຍາກັບຝຣັ່ງເສສລົງວັນທີ່ ໓ ອົກໂຕບ ໑໘໙໓ ຍອມຍົກດິນຝັ່ງຊ້າຍແມ່ນ້ຳຂອງໃຫ້ຝຣັ່ງເສສ ແລ້ວໄທກໍປ່ອຍທ້າວພາບໃຫ້ຝຣັ່ງເສສ ແລະເຈົ້າຄຳໂງ່ນກໍຂໍຕໍ່ມອງຊີເອີຣ໌ ໂຊເລຣ໌ (**Soler**) ຂຶ້ນມາຊຽງຂວາງທາງຄຳມ່ວນແລະວຽງຈັນທບ໌ ຄັນເຈົ້າຄຳໂງ່ນຂຶ້ນມາເຖິງເມືອງພວນເປັນເຈົ້າເມືອງຊຽງຂວາງແລ້ວ ເພິ່ນໄດ້ຂໍໃຫ້ຣັຖບາລຝຣັ່ງຕິດຕໍ່ກັບຣັຖບາລໄທ ສົ່ງເຈົ້າຂັນຕິຜູ້ເປັນພີ່ຊາຍທີ່ໄທເອົາໄປກັກໄວ້ກຸງເທພຯນັ້ນຄືນມາເມືອງພວນ ແຕ່ວ່າເຈົ້າຂັນຕິຫາກລົ້ມພຼະຊົນມ໌ໄປ

---

(໑) ຫາຕິນ **Ha-Tinh** ຫຼືບັກ ບໍ ຈິນ **Bac-Bô-Chinh**.

ແລ້ວ ໄທໄດ້ໃຫ້ເອົາຊ້າງກສິພຂຶ້ນມາຊຽງຂວາງ.

ຣັຖບາລຝຣັ່ງສົ່ງມອງຊິເອີຣ໌ ເດີລີໂນ(Delineau)ມາເປັນຂ້າຫລວງປະຈຳແຂວງພວນ ບັງໄສ່ຊື່ເມືອງພວນເປັນຕຼານິນ(Tranninh) ໄດ້ຕັ້ງໃຫ້ເຈົ້າຄຳເຮືອງບຸດເຈົ້າອຶ່ງເປັນກວານດ້າວ(ເຈົ້າຄອງແຂວງພວນ) ແລ້ວປັນເມືອງພວນເປັນ ໖ ເມືອງຄື: ເມືອງຄູນ ເມືອງຄຳ ເມືອງຄັງ ເມືອງແສນ ເມືອງສູບແລະເມືອງໝອກ. ເຈົ້າຄຳເຮືອງໄດ້ກະທຳຜິດຕໍ່ຝຣັ່ງໆເລີຍຖອດຍົສປົດຕຳແໜ່ງອອກ ແລ້ວໃຫ້ມີແຕ່ເຈົ້າເມືອງປົກຄອງເມືອງກ່າວເທິງນີ້ເທົ່ານັ້ນ.

ຈ.ສ. ໑໒໗໓ ປີຣ້ວງເຕົ່າ ມອງຊິເອີຣ໌ ບາກເຕເລມີ (Barthélemy) ມາເປັນກອມມີສແສຣ໌ກູເວີຣ໌ເນີນອງແຂວງພວນ ທ່ານໄດ້ເອົາດິນເມືອງສູບແລະເມືອງຄັງຣວມເຂົ້າກັນເປັນເມືອງ ໑ ຊື່ວ່າເມືອງແປກ ແລະເອົາດິນເມືອງແສນຣວມເຂົ້າກັບເມືອງຄູນ ເພື່ອໃຫ້ມີແຕ່ ໔ ເມືອງຄື: ເມືອງຄູນ ເມືອງຄຳ ເມືອງແປກແລະເມືອງໝອກ ຕຼອດມາເຖິງວັນນີ້ເປັນແຂວງ ໑ ມີເຈົ້າແຂວງປົກຄອງຣວມຢູ່ໃນພຼະຣາຊອານາຈັກລາວ ພາຍໃຕ້ຣົ່ມທຸງລ້ານຊ້າງຣົ່ມຂາວແຫ່ງວົງສະຫະພັນຝຣັ່ງເສສ.

\+ +

\+

ບັງມີບຸດເຈົ້າອຶ່ງສາມພີ່ນ້ອງ ທີ່ໄດ້ໜີເລີກໄປຢູ່ພັນລຳ ຊື່ເຈົ້າສູວັນ ເຈົ້າບຸນຄົງແລະເຈົ້າດວງດີ ໄດ້ພາກັນມາຢູ່ເມືອງບໍຣິຄັນ ເມືອງບໍຣິຄັນນີ້ພຼະບາອານາດບໍ່ນາຍທັພໄທ ໄດ້ຂຶ້ນມາຕີຫົວທ່ຽງຈັນທບໍ່ແຕກແລ້ວ ກໍໄປຕັ້ງບ້ານນາແຫ່ນເປັນເມືອງ ເອີ້ນວ່າ ບໍຣິຄັນນິຄົມ ແລະຕັ້ງໃຫ້ເຈົ້າສູວັນຂຶ້ນເປັນເຈົ້າເມືອງ ທ້າວຄຳຕາອາຈານໄຖເມືອງຄັງເປັນອຸປຣາຊ

ເມື່ອເຈົ້າສູວັນນັ່ງເມືອງບໍຣິຄັນ ໄທໄດ້ມອບຄົວພວນ ໖໐໐ ຄົນໃຫ້ມາຕັ້ງຢູ່ເມືອງບໍຣິຄັນ ຄັນເຈົ້າສູວັນສິ້ນພຼະຊົນມ໌ແລ້ວ ເຈົ້າບຸນຄົງແລະເຈົ້າດວງດີກໍໄດ້

---

(໑) ນິນບິນ **Ninh-Binh**.

ເປັນເຈົ້າເມືອງສືບຕໍ່ໆມາເຖິງເຈົ້າຄຳຮຸ່ງ ດຽວນີ້ຕາແສງປົກຄອງ ເອີ້ນວ່າ ຕາແສງບໍ່ຮຄັນ ຂຶ້ນກັບເມືອງປາກຊັນ.



ຮູບທີ່ ໑ - ເຈົ້າໄຊບ໌ວົງສ໌ ອາຍຸ ໘໘ ປີ

# ລຳດັບກະສັຕິຍ໌ເມືອງພວນແລະຜູ້ສືບສາຍສກຸລ

ເຈັດ ເຈືອງ
" ຈອນ
" ຈອດ
" ຈິວ
" ຈັນ
" ບອດບໍ່ຄຳ
" ບີ (ເຈົ້າພຼະບີຫີນ)

- ເຈົ້າ ພຼະຄື
  " ຄຳລູນ
  " ຄຳເພັງ
  " ຄຳຂອດ
  " ຄຳຮອງ
  " ຄຳແຈັກ
  " ຄຳຝັ້ນ
  " ຄຳໝິນ
  " ຄຳຫີນ
  " ຄຳຕິດສາກ
  " ຄຳຄວນ
  " ຄຳລ້ວນ
  " ຄຳໜ້າ
  " ຄຳຫ້າວ
  " ຄຳເຄົ້າ
  " ຄຳຜິງ
  " ຂຸນຄຳບໍ່
- ເຈົ້າສັ້ນ
  - ເຈົ້າເຮື້ອ
  - ເຈົ້າເຮືອງ



ຮູບທີ່ ໑ - ເຈົ້າສາຍຄຳ ສຸທະກະກຸມາຣ ເຈົ້າແຂວງພວນ

# ປະວັດ ເຈົ້າສາຍຄຳ ສຸທະກະກຸມາຣ

ເກີດວັນທີ່ ໒໕ ມາກສ໌ ໑໙໑໘ ທີ່ຊຽງຂວາງເມືອງຄູນ ແຂວງພວນ ເປັນບຸດເຈົ້າໄຊຍ໌ະວົງສ໌ແລະຫມ່ອມດວງດີ. ເມື່ອ ອາຍຸ ໘ ປີ ໄດ້ເຂົ້າໄປສຶກສາຢູ່ໂຮງຮຽນຊຽງຂວາງ ເສັງໄດ້ຊັ້ນປະຖົມສຶກສາແລ້ວອອກໄປຮຽນຢູ່ເມືອງຫາໂນຍ ປະເທດແກວເໜືອ ກັບຄືນໄປຮຽນຢູ່ໂຮງຮຽນຣັຖປະສາດລາວເມືອງວຽງຈັນທນ໌ ສຳເຣັຈວິຊາກົດໝາຍທ້າຍປີ ໑໙໔໔ ອອກມາເປັນສມຽນຝຶກຫັດໄປປະຈຳການຢູ່ເມືອງຊຽງຂວາງ. ວັນທີ່ ໑ ເສັບຕອມ ໑໙໔໖ ວ່າການເຈົ້າແຂວງງພວນ ໄດ້ທຳການວິວາຫະມົງຄົລເອົາກັບນາງແກ້ວອູດອນ ເມືອງສວັນນະເຂດ ມີລູກຍິງຊື່ເຈົ້າສາຍມະນີລາ ໄດ້ເຄື່ອນຍົສໂດຍພິເສສເປັນອຸປຣາດຊັ້ນທີ່ ໑ ໃນສະຖານມີຄວາມອາລີອາລອບຕໍ່ຊາວເທົ່າກັບເນັ້ນໃຫ້ຖືກຕ້ອງຄ່ອງກັນ. ໄດ້ຮັບເຄື່ອງອິສສຣິຍາພຣເປັນບຳເຫນັຈທີ່ໄດ້ຈັດການບ້ານເມືອງໃຫ້ຄືນສູ່ຄວາມສງົບ: ຕາລ້ານຊ້າງຮົ່ມຂາວຊັ້ນທີ່ ໕ **(Chevalier du Million d'Eléphants)**, ຕາສົງຄາມປີ໑໙໓໙ **(Croix de guerre 1939)**, ຕາຕໍ່ຕ້ານສັຕູຂອງຝຣັ່ງລາວ **(Médaille de la résistance Franco-Laotienne)** ຕາທີ່ຣະລຶກມຫາສົງຄາມໂລ້ກ **(Médaille Commémorative de la guerre)** ຕາອະນານິຄົມ **(Médaille Coloniale)** ຕາສົງຄາມຂອງກອງທັພພາຄອາຊີຕາວັນອອກ **(Croix de guerre T.O.E.)** ຕາກະເສຕາທິການອານາຈັກຣ໌ຊັ້ນທີ່໕ **(Chevalier du Mérite agricole du Royaume)** ຕາຊັ້ນສູງຂອງຝຣັ່ງເສສຊັ້ນທີ່໕ **(Chevalier de la Légion d'Honneur)**.

# ກົງດິນເມືອງພວນ

ເມື່ອນັ້ນຂຸນລໍເຈົ້າກະສັດາຕິນພີ່ ພຼະກໍເສວີຍເມືອງລ້ານຊ້າງບູສ້າງຢູ່ກະເສີມ. ກໍຈຶ່ງຄຶດເຖິງນ້ອງເຈັດເຈືອງພົງສ໌ກະສັຕິຍ໌ ອົງຄ໌ເສວີຍເມືອງພວນຜ່ານນະຄຣເປັນເຈົ້າ. ເຫຕຸວ່າສເນຫາເຈົ້າສອງພຼະອົງຄ໌ຮັກຍິ່ງ ນັກໃຄ່ເຫັນໜ້ານ້ອງແພງລ້ານທີ່ເຊັງ. ພຼະຈຶ່ງໃຊ້ຂຸນໃຫຍ່ຕາງຕົນໃຫ້ໄປເຊີນອົງຄ໌ນ້ອງເຈັດເຈືອງສເດັຈດ່ວນ. ເມື່ອນັ້ນພຼະກໍສເດັຈຈາກຫ້ອງພົນລ້ານແຫ່ແຫນ. ກໍຈຶ່ງໄປເຖິງເຈົ້າຂຸນລໍຕິນພີ່ ພຼະພີ່ເຈົ້າມາຕ້ອນແຕ່ໄກ. ພຼະກໍມາພົບເຂົ້າໃນເມືອງເຊົາຈອດ ໃນທີ່ພູເຂົາກ້າກາງຫ້ອງເຖິງເມືອງ. ສອງພີ່ນ້ອງຈາຕ້ານຊື່ນຊົມ. ເມື່ອນັ້ນອາມາຕຍ໌ພ້ອມທັງຂ້າໄພ່ເມືອງ ບອງກັນມາເບີກບະສີເຈົ້າສອງພຼະອົງຄ໌ສຖິດແທ່ນ ຈາຖືກຖອຍປະໂຍຄພຼະໃຫ້ທັງສອງ ພຼະອົງຄ໌ບານລູກພົມພາຍຟ້າ. ເມື່ອນັ້ນຂຸນລໍເຈົ້າເມືອງຊວາກອຍກ່າວ ເຮົານີ້ເປັນພີ່ນ້ອງພົງສ໌ເຊື້ອພໍ່ແມ່ດຽວ. ເຮົາກໍໄດ້ຢູ່ສ້າງເສວີຍຣາຊຫົງເມືອງນີ້ແລ້ວ ເປັນເມືອງຖັດຕໍ່ກັນຈົນໃກ້. ໃຫ້ປະກອບດ້ວຍໄມຕີຢ່າຂາດ ໂດຍດັ່ງພຼະພໍ່ເຈົ້າສບິດນໍ້າແກ່ເຮົາຫັ້ນຫ້ອນ. ອັນນຶ່ງ ກໍຄວນກິດໝາຍໄວ້ແດນເມືອງຕິດຕໍ່ກັນນັ້ນ ເປັນເຂດໄວ້ປ່າໃຫ້ລ່າຄໍາຊອບແທ້ດາຍ. ແຕ່ນັ້ນຂຸນລໍພ້ອມຣາຊາເຈັດເຈືອງ ພຼະກະສັຕິຍ໌ພີ່ນ້ອງປັນໃຫ້ເຂດເມືອງ ສອງພຼະອົງຄ໌ເຈົ້າຕອງຕາດູເຂດ ເມືອງພວນແລະເມືອງລ້ານຊ້າງໝາຍໄວ້ເຂດແດນ. ເພື່ອໃຫ້ຕັ້ງຢູ່ໝັ້ນເຖິງເຂຕນຫາກັປ ສອງກະສັຕິຍ໌ປັນເຂດກັນສັ້ນນີ້ ເຈົ້າກໍບໍ່ໃຫ້ລ່າມ້າງຍັງເຂດບູຣີເມືອງ ເພື່ອໃຫ້ເປັນຫຼັກສິນໄປເຊັ່ນພົງສ໌ແຫນເຊື້ອ. ເຊັ່ນລູກໄວ້ແກ່ເຊັ່ນຫຼານ ເຫຼັນລໍາດັບຫຼານກອດກາຍເມື່ອໜ້າ. ສອງກະສັຕິຍ໌ເຈົ້າຈຶ່ງປູນແຕ່ງໃຫ້ຂຸນໃຫຍ່ທັງ ໗ ໄປໝາຍເຂດຫ້ອງເມືອງລ້ານຊ້າງເມືອງພວນໄວ້ເຂດດິນ .

ຕັ້ງແຕ່ນໍ້າຄານຂຶ້ນເຖິງພູເຂົາຫຼູບ ຕັ້ງທີ່ນັ້ນເປັນຫຼັກໄວ້ເຂດເມືອງ. ແລ້ວເລົ່າຕັ້ງໄຕ້ຂຶ້ນນໍາບິວພູເຂົາຫຼູບ ຕັ້ງແຕ່ນັ້ນຂຸນທັງ ໗ ກໍຍັ້ງເຊົາຫັນ. ແຈ້ກແບ່ງກັນ ໓ ຂຸນ ໄປທາງໃຕ້ໝາຍເຂດບູຣີເມືອງ ໔ ຂຸນ ໄປທາງເໜືອຈີ່ແດນໝາຍໄວ້. ພ້ວກໝູ່ໄປທາງໃຕ້ຕັດໃສ່ພູໂຫມ ຕັ້ງແຕ່ພູໂຫມລັດລ່ວງລົງໄປຫາບ້າ ທັງແກ່ວກັບແກ່ວກ່ອ· ລັດໃສ່ພູນອນ ໄປເຖິງກະແຫທິງຮ້ອດກະເຊິງພາຍໃຕ້. ແຕ່ນັ້ນໄປບ້ານດ້ວງລັດໃສ່ເມືອງກາຍ ເມືອງຊອງເຖິງນາງງາປ່າ

ແຄເທິງບ້ານ. ບ້ານຫີນນ້ອຍເທົ້າຮ້ອດນາຂີມ ລັດໃສ່ເມືອງພູນ ຂວາງຮ້ອດ ນາປູນພຸ້ນ. ນັບແຕ່ບ້ານຊ້ອນໃຫ້ລັດໃສ່ສົບເມີຍ ລົງໄປຕາມງື່ມນັດທີວັງນ້ຳ. ນັບແຕ່ທ່າຫ້ວຍນ້ຳນັດທີ່ງື່ມວັງຫຼວງ ລັດໃສ່ພູທິງໄປຕໍ່ນຳນີວຂົ້ນ. ແຕ່ ນັ້ນໄປຊ້ຳກ້ານບ້ານຫີນຄອນເຖິງຊະແວກ ນັບແຕ່ຊຽງຊອນ ຊຽງຄອນເທົ້າ ເຖິງໃຕ້ປາກຊວາ. ລັດແຕ່ນັ້ນໄປຮ້ອດແຄມຊັນ ເຖິງຊາຍພວນ ຊາຍລາວ ຮ້ອດຊຽງຕອນພຸ້ນ ຕັດໃສ່ຫ້ອງແກ່ວໃຕ້ເຖິງພະນອມບ້ານແດ່ກ ລັດແຕ່ນັ້ນ ເຖິງນ້ຳຊີ່ຊະດິງ. ນັບແຕ່ຊະດິງຂຶ້ນເມື່ອເໜືອຕາມກະແສຮ້ອດທີ ດິນກ່າວ ເວົ້າໝ່ອນເທົ້າທ່າເພັຍຫັນແລ້ວ. ນັບແຕ່ທ່າເພັຍໄປເຖິງເທົ້າແດນເມືອງຄຳ ເກີດ ທີ່ນັ້ນເປັນເຂດຫ້ອງຫີນໃຕ້ແຫ່ງເມືອງແຫ້ແລ້ວ. ນັບແຕ່ບອດທາໄສ ໄປຮ້ອດປ່າຊູນພຸ້ນພັນໂກ ໄປເຖິງພູແສດ ດອນດິງກວ້າງ. ໄປຮ້ອດຜາດັບເທົ້າ ເຖິງຊູນຫ້ວຍເພືອກ ລັດລ່ອງນ້ຳເຖິງຫ້ວຍຫາດດາວ. ຂ້າມນ້ຳໄນ້ຕັດໃສ່ຜາຫຼວງ ໄປນ້ຳນີວລ່ອງລົງມີຊ້າ. ນັບແຕ່ນ້ຳໄນ້ເທົ້າຮ້ອດສິບສວ່າງ ລັດຂຶ້ນນີວພູຫຼວງ ຜ່ແດນດິນກວ້າງ. ໄປເຖິງແຄວນເຮ້ວພຸ້ນເມືອງຕາ ເປັນເຂດຫ້ອງກິງ ຣາຊບູຣີ ມີຫີນບິວຣະພາວັນອ້ອກແມ່ນເມືອງພວນແລ..

ອັນວ່າຊູນທັງ ໔ ຂຶ້ນທາງເໜືອໝາຍເຂດເມືອງນັ້ນ ຕັ້ງແຕ່ພູເຂົາຫຼູບ ຫັ້ນໝາຍນ້ຳບ່ອນດຽວ. ຕັ້ງແຕ່ນັ້ນເທົ້າຮ້ອດສິບສາຍ ລັດໃສ່ຈັນນີວພູເນົ້າໄປ ພາຍໜ້າ. ໄປເຖິງເທົ້ານີວາບູດັ້ນໄມ້ມ່ວງ ທີ່ນັ້ນມີມ່ວງໄມ້ລຳດົ້ວໃຫຍ່ສູງ. ຕັ້ງ ແຕ່ກົກມ່ວງຂຶ້ນວາເມື່ອເຖິງງ່າຊູນນັ້ນ ສັງຂະບາວ່າໄວ້ປະມານໄດ້ ໕ ວາ. ລວງ ໃຫຍ່ໄດ້ ໔ ອູ້ມມີງ່າສອງອັນເປັນສອງພັນຕ່າງກັນຈິ່ງແທ້. ງ່ານຶ່ງເປັນມ່ວງປ້ານ ຣິສອ່ວງນັດທຸຫວານ ຄືດັ່ງເທະນານາປູກແປງໝາຍໄວ້. ງ່ານຶ່ງດູຕະການຜຽງ ຜະລາເຫຼືອງຫຼາກ ເປັນໝາກມ່ວງເຂັ້ນຄຳແທ້ທ້ຽງຈິງ. ອັນວ່າລຳພາຕົ້ນລກໄຂ ໄມ້ມ່ວງລຳນັ້ນ ຊູນກໍ່ໝາຍຈີ່ໄວ້ເປັນໝັ້ນເຂດເມືອງ. ລັດແຕ່ນັ້ນຫຼາຍລົ່ນອະຣັນ ຍາ ເຖິງທີ່ເມືອງຄຳເກິງຜ່ານພູນະຄອໄປຫນ້າ. ໄປຮ້ອດບ້ານເຖິງບ່ອນພະລານ ພຽງ ເຣວລັ່ນເຖິງເຕີ່ອນພິງໄພກວ້າງ. ລັດໃສ່ຫ້ວຍນ້ຳສຽນເມືອງສັບ ເຖິງສິບ ຊີວລ່ອງລົງນ້ຳຫ້ວຍ. ໄປເຖິງຫ້ວຍນ້ຳຫຼວງໄຫລ່ອງລົງຮ້ອດຫ້ວຍບາງແລ້ວເລົ່າ ໄປ. ເຖິງນ້ຳເນີນນອງບ້າທີໃຫຍ່ ຊູນກໍ່ຊ້າງໄທ້ໝາຍໄວ້ເຂດດິນ. ຕ້ານ ຕໍ່ເທົ້າແດນເຂດເມືອງພະກັນ ຊູນກໍ່ກິດໝາຍເມືອງເຂດດິນພາຍພຸ້ນ. ທີ່

ນີ້ເປັນເຂດທ້ອງນະຄຣຣາຊເມືອງພວນແທ້ແລ້ວ. ພາຍຫີນເໜືອແຫ່ງເມືອງພຣະເປັນເຈົ້າ.

ເມື່ອນັ້ນຂູນໃຫຍ່ເຈົ້າທັງ ໓ ຄືນມາ ຖວາຍຄຳຄວນເຂດດິນຫູນເຈົ້າ. ເມື່ອນັ້ນຂູນລໍພ້ອມກະສັດາເຈັດເຈືອງ ຈາຖືກຖ້ອຍຄະດີແນ່ງຕໍ່ກັນ. ອັນວ່າອີງເຂດຫ້ອງເມືອງລ້ານຊ້າງ ເມືອງພວນປັນເຂດກັນນີ້ ໃຫ້ຈື່ແຈ້ງຈຳໄວ້ສູ່ທາງ. ໃຫ້ເປັນໝັ້ນຫຼັງໄວ້ເຖິງເຂດນທາກັປ ໃຜຜູ້ໃລພາເຫັງໂຄບຊີງເມືອງບ້ານ. ລຶບເຊັ່ນລູກໄວ້ເມືອເຊັ່ນຫຼານ ເຫຼັນ ໄປເຖິງຫຼ້ອນກອດກາຍແຫນເຊື້ອ ອັນວ່າຜາຄະໂລນ້ຳສມຸທຫຼວງເຂີນຂາດບານໃດ ຊາຍມູ້ນມ້າງປິວຂຶ້ນໂລ້ກທະລາຍ. ເຂົາສເນັບລົມອຳລະທາຍທັງໂລ້ກ ໄຟເກີດໄໝ້ກັປພູ້ນ ຈິ່ງໃຫ້ຫາຍນັ້ນເນີ. ຍາມໃດກັບໄປມ້າງຕັ້ງປູ່ເຫັຍລະຄາ ໃຜກໍຍັງຊີງແຫນສິບເມືອງແຫນຫ້າວ. ປ່າໄດ້ມ້າງໃຫ້ລ່າຄ່າກະສັດີຍ໌ ໃຫ້ຄ່ອນປິວລະບັດໄປດັ່ງຣາປັນໄວ້. ໃຜຜູ້ໃລພາພົ້ນໄປຊູຊີງຍາດ ໃຫ້ລາມ້າງຄຳຕ້ານແຫ່ງຣາ ໃຫ້ມັນດັບມ້ອດມ້ວຍສ້ວຍຍ້ອດດວງປີ ອິນຕາຍສິບປະການເກີດມີເມືອໜ້າແຫ້ງເນີ. ແມ່ນວ່າດັກໄປໃໝ່ອະເວຈີໝົ້ໃຫຍ່ໝູ້ນຫ້ອນແສນປີມັນປູ່ຈົມໃນໝໍ້. ບ້ານໝື່ນຊັ້ນເຖິງຊົ່ວປ່າຣີ ປີເດືອນມັນປ່າບິນຍາວກ້ວາງ. ມັນປູກໄມ້ປ່າໃຫ້ທັນປີ່ງເປັນໃບ ມັນປູກຫວາຍປ່າໃຫ້ເຄືອທັນຫຼ້ອນມັນ ແຫງນໜ້າເມື່ອບິນໃຫ້ຟ້າຜ່າ ມັນໄປປ່າໃຫ້ເສືອຄຸ້ງວຄ້າບກິນ. ມັນໄປທາງນ້ຳໃຫ້ເງືອກໃຫຍ່ກິນມັນ ຄອງຈິບຫາຍເຖິງສູ່ວັນປ່ານ້ອຍ. ຕັ້ງເຊັ່ນລູກເມືອເຊັ່ນຫຼານ ເຫຼັນຫອນຫອດກາຍພາຍໜ້າ. ໃຜປ່າໂລພາເພັ້ນໄປຈຳທ່ານຊ່ວຍ ປ່າໄດ້ອ້າງຕ້ານກ້ຳເລວອ້າວອິນກັນ. ແມ່ນວ່າໃຜນ້ອຍດັກເມືອງໃຜໃຫ້ກູນາຂື່ນສິ່ງຊ້າງນ້ຳລັກທີ່ງກວ້າງຂື່ນໃຫ້ແກ່ກັນ. ເມືອງໃຜໄວ້ເມືອງມັນປ່າລ່າເດືອນພີ່ນ້ອງໄດ້ກິນນ້ຳສະບົດໃຫ້ແກ່ກັນ. ຄຳຈາລຶກໃຫ້ໝັ້ນແທ້ເຖິງເຂດນທາກັປ ໃຫ້ເປັນຫຼັກສີນແກ່ພົງສ໌ແຫນເຊື້ອ. ໃຜຜູ້ບໍ່ຟັງຄຳອັນກ່າວມານີ້ ສັພເພຣະພູເຈົ້າເກີດມາແທ້ກໍປ່າໃຫ້ຜໍ່ເຫັນ. ອັນວ່າສອງກະສັດີຍ໌ເຈົ້າສະບົດຄຳແລ້ວປ່າ ເມື່ອນັ້ນ ເຈັດເຈືອງເຈົ້າເວີຍຕ້ານສັ່ງເມືອ. ຂ້ອນຂໍລາພີ່ເຈົ້າພະບາທຂູນລໍກ່ອນແລ້ວ ທັງຊາວເມືອງປູ່ບີບຍາວໝັ້ນ. ຍາມດີແລ້ວຣາຊາສເດັຈດ່ວນຫຼາຍພ່ຳນີ້ມາແທ້ຮອດເມືອງ.

# ສານເຈົ້າສາລີເຣັດໄປເກື່ອຍໄທ

## ( ເຈົ້າຫນອງຄາຍ )

ຍາມນັ້ນເມືອງພວນກວ້າງ　　ສີແສງເຮືອງຮຸ່ງ
ວັດວາອາຣາມເຈດີຍ໌ພຽນກໍ່ສ້າງ　　ເຮືອງເດຊລັງສີ
ເລີຍເລົ່ານິສັຕູທວານເຖິງ　　ເປ່ເພຄອງແກ້ວ
ຂຸດກິນນ້າງພຣະທາຕຸແກ່ນໃຈເມືອງ　　ທັງອາຣາມຫຼວງ
ຄອງເມືອງຍຸບທະລາຍສູນເສົ້າ
ຄວນທີ່ເຮົາຣີບໃຊ້　　ສານສິ່ງເອົາເສີກ
ຄວາມລະຫັດປ່າເອົາມາເວົ້າ　　ດີຕໍ່ເຈົ້າແລະ
ຂ້ອຍຈາຕ້ານຕໍ່ກັນ.

ຫນ່ອຍບໍ່ນານ　　ແປງສານເລີຍແລ້ວ
ຫາບ່າວແກ້ວ　　ໄປເພື່ອນພໍສານ
ໄປຕາມໄປ　　ເຖິງໄພປ່າໄມ້
ຂ້າມເຫສໄຫ້　　ໄປຮ້ອດແຄນຂອງ
ຮ້ອດໜອງຄາຍ　　ບໍສານຖວາຍບາທ
ພຣະຣາຊສູວໍ່　　ເຄື່ອງພ້ອມຂອງພໍ ຖວາຍບາທພູມິນ
ພຣະຣາຊສູຣິນ　　ຈິ່ງແປງໜາຍບ້ອກ
ບ້ານນ້ອກເນີນາ　　ມາຕາປັດຂອດ
ນັ້ປອດຍາມດີ　　ໃຊ້ຍາດີຖີ
ດາດີທຸກໝູ່　　ຢ່າຄ້າງຢ່າຄາ
ຫ້າງດາກາຣທັພ　　ນັບໄດ້ພັນປາຍ
ຊູນນາຍທັງປວງ　　ປາກຊວນຫ້ວຍຫຼວງ ຊະງ້ຳໜອງເກີນ
ບ້ານພອກເມືອງເພັງ　　ອະລືນພານດ່ານ
ເຂົ້າສາຣໜອງເຂັ້ງ　　ປາກເປັ້ງປາກເປ່
ບ້ານຕັງຫັນຫອງ　　ແຄນຂອງປັດຂ້ອດ
ໝາຍຮ້ອດໂດຍກາຣ　　ເຂົ້າສຸກເຂົ້າສາຣ

ບັ້ງແຈ່ວກັບເກືອ ຫ້າງເມືອຢ່ານານ
ເອົາກາຣເລັ້ງເລັວ ຂ້ອຍພຼະກະໂຍນສັ່ງ
ຢ່າລັບຢ່າບັງ ຄັນສັ່ງໂອກາສ
ຍົກທາສເອົາໄປ ບໍ່ອັບບໍ່ໄພຍ໌
ຈັດໄປຢ່າຢູ່ ພໍ່ໝູ່ນາຍກອງ
ປູນປອງເລີຍແຕ່ງ ທຸກແຫ່ງນຳມາ
ຊະຣາເພກາຣ ແຕ່ງໄວ້ເຕີມຫຼັງ
ໄທກາຣໄທຄັງ ຫຼ່ຍັງບໍ່ນ້ອຍ
ໄປໂກຫກ້າ ເກັບເອົາມາໂຮມພ່ຳພ້ອມ
ບ້ານຫ້ອມບໍໃອ ພັກໄດເມືອງໜີ່
ຊິງຂີ່ຊ້າງຊຽນ ສະລູມມາຮ້ອດ
ເຂາະຂ້ອດຄົນຊາຍ ກຳໜົດກົດໝາຍ
ຫນອງຫັນຫນອງຄາຍ ພັນປາຍບໍ່ນ້ອຍ
ພໍຮ້ອຍນາຍຄັນ ລ້ວນຂັນຂັນແຂງ
ແຕ່ງທັພດັບເສິກ ຍັບຍ້າຍລີລາ ປ້ານໝູ່ປັຈຈາມິດ

---

ເຈົ້າໜອງຄາຍເກັບກຳລັງທັພແລ້ວກໍ່ຍົກ
ຂຶ້ນໄປຊຽງຂວາງຕາມທາງເສັ້ນບ້ານຊ້ອນເມືອງເລີກ

---

ບູຣິມມະບາດ ພຼະຣາຊສູຣິນ ພູມິນຍ້າຍຍົກ
ຍາມໂຊກໄຊຍ໌ໃບ ປາໂຕແຕ່ເຊົ້າ ຊູ່ນເຜົ້າລາລົງ
ພຼະອົງຄ໌ລີລາ ເສນາຖ້ານແກ່ ແຫ່ຊັ້ນພູບານ
ອົງຄ໌ກາຣລິເດຊ ຮ້ອດເຂດຄາເນ ເຄເຄໄປຫນ້າ
ໄພ່ຟ້າເບື້ອງບອງ ຂ້າມຂອງບີຍ້າບ ທ້ອກດ້າບທັງປືນ
ລູກຊືນມີມ້າກ ຍ້າຍຈ້າກແຄມຊິບ ແຫ່ເຈົ້ານຳຕືນ
ຂ້າງຊ້າຍຂ້າງຂວາ ຂີ່ມ້າຂີ່ລວາ ກາຍເຂດກາຍນາ
ມັກຄາໄຕ່ເຕົ້າ ເດີນເຊົ້າທຸກວັນ ຈາກັບທຸກເມື່ອ

| | | |
|---|---|---|
| ເຊື່ອໄດ້ສິ່ງຂອງ | ແມ່ງົວຄົວຄວາຍ | ຝູງຂ້ອຍບີງຊາຍ |
| ເຂົ້າຂອງສິນບັດ | ຫັດຖີອັດສາ | ວັດຖາພົນແຜ່ນ |
| ລູກແລ່ນບິບດີ | ເຂົ້າປ່າຄີຣີ | ດອກຈີຈູນຈໍ່ |
| ຊ້ອງຊໍ່ບານເຣືອງ | ແດງເຫຼືອງຫຼາຍຊ່ຳ | ແຫຼ້ພ່ຳຫຼາຍພົວ |
| ລີວລີດັ້ນປ່າ | ຂ້າມທີ່ກາຍແດນ | ພັນແສນໄປກ່ອນ |
| ຂຶ້ນງ່ອນພູດອຍ | ຄອຍເຫັນຊູ້ຊ້ອນ | ແດດຮ້ອນຣົນຫວາຍ |
| ພຼະບົກາຍກົນງາຍລວດແລ້ວ | ລ້າງແຂ້ວສີຟັນ | ເອົາກັບຍ້າຍຍົກ |
| ເຖິງໂຄກແຄນຊັບ | ບໍ່ຄ້າງບໍ່ຄາ | ກາຍບາເມືອງເລີກ |
| ເອົາເສີກມາເມືອງ | ຄຶດເຄືອງທັງປີ | ພໍດີພໍແດນ |
| ພັນແສນເລີຍລ່ວງ | ເຖິງຂວາງຊຽງດີ. | |

ຮ້ອດເຈົ້າວັງແສນ   ຄັນໄດ້ເຂົ້າເຝົ້າເຈົ້າວັງແສນແລ້ວ
ກໍກາຍເຂົ້າໄປຊຽງຂວາງໃນຄືນນັ້ນ

| | | |
|---|---|---|
| ເຊີນສີເສວີຍໂພຊນ໌ | ພຼະໂສດຈີນດາ | ເສີກຣາຊາລ່ວງມາບໍ່ ນ້ອຍ |
| ສັງກາດ໑໑໓໕ | ຕົກເດືອນຍີ່ | ເຖິງທີ່ພາຍແຣມ |
| ແຕ່ນັ້ນພູນົບ | ພຼະຣາຊສຸຣິນ | ໃສ່ຫວ້ານໃສ່ຄີງ |
| ພຼະອົງຄ໌ຍູເບຫ | ກາຍເຂດຊຽງດີ | ແສງສົດກົດຕ່ຳ |
| ແຂວຄ່ານ່າເມືອງ | ຖີບເປືອງເຣວຣ້ອດ | ເຂົ້າຈ້ອດຊຽງຂວາງ |
| ແຕ່ນັ້ນນີນານ | ເຈົ້າສາຣໄປເຝົ້າ | ສູ່ເຂົ້າອາຫານ |
| ເຊີນພຼະອົງຄ໌ກາຣ | ໂຫສທານຊີວິດ | ທັງຈິດທັງໃຈ |
| ຖວາຍບາທປາເທາ | ຕາງດອກມາລາ | ບູຊາຍ້ອດແກ້ວ |
| ໄຫວ້ແລ້ວທຸກອັນ | ຈອມທັບພຼະບາທ | ພຼະຣາຊສຸຣິນ |
| ຮໍາພຶງພາຍຕົວ | ບໍກົວເກງຂາມ | ເຖິງຍາມໃກ້ຮຸ່ງ |
| ເຈົ້າມຸ່ງເມີນພລັນ | ໄກ່ຂັນສາມທີ | ແຕ່ງດີທຸກຄ້າຍ |
| ປຶກຊ້າຍປີກຂວາ | ໂຍທາໄຫຼ້ອອກ | ຫ້ອກງ້າວທັງປືນ |

ລຸກແມ້ງຕໍາໂດນ   ເຂົ້າໂດນອອກຕ້າຍ   ຄົນຮ້າຍໄລ່ຟັນ
ໄທຂັນໄລ່ຕ້ອນ   ເລືອດຂ້ອນໄຫຼນອງ   ກອງຕາຍໄມ້ລົ້ມ
ພ່ອງລົ້ມຄານໄປ   ເປັນໝູ່ເປັນກອງ   ລະວອງລະວູ່
ຕາຍປູ່ກາງຄັງ   ພ່ອງບັງໜີໄດ້   ຮ້ອງໄຫ້ຫາເມັຍ
ເສັຍທີເວັ້ນຫຼີກ   ບໍຕໍ່ສູ້ກາຣເລວ   ເລີຍໜີປະເປົ່າ
ແຕ່ນັ້ນເສນາເຈົ້າ   ທັງປວງຂຸນຫຼວງຜູ້ໃຫຍ່   ຝ່າຍກ້າໜອງຄາຍ
ປຶກສາພົນໄພ່   ຈັກໄລ້ຄືວລີງ   ຈີ່ງປົງຄວາມຍ້າກ

## ຊື່ບ້ານໃນວົງນກວາງ ວົງນແສນ ວົງນສູບແລະວົງນຄໍາ ທີ່ໄທກວາດຄືວໄປ

ບ້ານບ່ອກເນີນາ   ລາດຮ້ວງພູປາ   ບ່ອກນາທັງຄ້າຍ
ວົງນທ້າຍແລະແສງ   ບ້ານແລງນາຄວນ   ບ້ານມ່ວນບ້ານຮ້າງ
ບ້ານແກ່ວຊາຄາຍ   ບ້ານປາຍບ້ານຖິດ   ບ້ານພິດບ້ານທງັນ
ບວນໜັນຄັງວຽງ   ບ້ານໜັ້ງງສີລຸນ   ຂູນນາງປັດກວາດ
ວົງນທາຕຸຊຽງຄໍາ   ຈໍານໍາເອົາຕົວ   ງົວຄວາຍໃສ່ຕ່າງ
ບ້ານກາງບ້ານດ່າວ   ຄົນລາວແປກປົນ   ເອົາຄົນໄປໄລ່
ບ້ານໄພ່ເມືອງພານ   ພາງຊານຊັບນ້ອຍ   ລູກຫ້ອຍຊຽງລຸນ
ໃຫ້ສູນເສັຍເປົ່າ   ບ້ານເຫົ້າເມືອງສາຍ   ນ້ຳຈ້າງນ້ຳຮວາຍ
ເມືອງບ້ານເມືອງດ້າ   ເມືອງດາວໄປລາວ   ແກນຮາດ
ຈັກກວາດຄືວລີງ   ດົນອີງດ໌ປ່າປູ່   ເຂົ້າສູ່ສິນພານ
ບ້ານຮ້ານບ້ານລວງ   ບ້ານຄວງນາເມນ   ພັນຍຽງຝຽງແສນ
ບ້ານດູນບ້ານມ່ວນ   ຈັດດ່ວນເອົາມາ   ບ້ານພານາເມືອງ
ບ້ານຫວງບ້ານເຫຼັກ   ບ້ານເຮັກນາຣະ   ບໍາລະບໍໄລ
ບ້ານໄຊບໍ່ນາບົ໊   ຜູ່ງບົບໍວາງ   ບ້ານຊ້າງບ້ານໜອງ
ບ້ານໜອງບ້ານນາບ   ປ່ວນານເອົາໄປ   ຝູງໄຝນາຂານ
ບ້ານນານນາເພີງ   ລັດລີງສູ້ດ້ານ   ທ່າລ້ານເມືອງມຽນ

ປາກຽບທຸກແດນ　ບ້ານແປນສອງຮັກ　ບ້ານພັກຂາຍເຫຼັກ
ເຕັກໄປຍ້າຍຍ່າງ　ບ້ານອ່າງຊາຍຄ່າ　ແບບບຳໄປເຜົ້າ
ສຸມເສາບາບົວ　ບຳກົ່ວເອົາໂທສ　ເມືອງໂປດເມືອງປາງ
ລົງທາງກ່ອນໝູ່　ຜາທັ່ງໄຂ່ປູ່　ບາຊູບາເຫີ
ບ້ານເສີບ້ານສີ　ໜອງກ້າພູມີ　ຊ້າງສີພັນເທື່ອ
ລົງທາງພູອ້າວ　ສັ້ງສ້າວຄັ່ງເມືອງ　ເຄືອງໃຈມີງມີ່
ສິນລືໜອງຫ້າງ　ເຂດຂ້າງສູບເມືອງ　ຮູ່ງເຮືອງເລີບເສົ້າ
ເຂົ້ານ້ຳອາຫານ　ເປັນຂອງສະຫານ　ເຂົາຕີເຂົາຟ້າດ
ໂອກາສເມືອງນາງ　ຮ້ອງຄາງຫົວໄຫ້　ເສີກໄດ້ຄົວລົງ
ເຂົາປົງຄ່ຳຄ່າ　ເຂົາຜ່າເອົາຄົວ　ເອົາຕົວເປັນຂ້າ
ກົຫບ້າຄັ່ງໂຫມ　ເສິກໂຈນແພ່ບ່ານ　ໄຫມ່ານໄຫຍວນ
ທັງພວນທັງລາວ　ຍິງສາວຮ້ອງໄຫ້　ເສິກໄດ້ປັນກັນ
ນ້ຳເນກນອງຕາ　ຊຽງແດດຊຽງງາ　ວັດວາສູນເສົ້າ
ບ້ານເປົ້າບວນພໍ　ບໍຄົວໄປຊ້ຳ　ລົງກ້ຳເມືອງຫຼວງ
ແຕ່ນັ້ນທັງປວງ　ຂູນຫຼວງຝ່າຍພີ້　ເມືອງນີ້ຫຸ່ງວທັນ
ເພັບພັນຜູ້ອາວ　ຕັດຂາດໂຮມຄົວ　ບ້ານບົວບ້ານຖ້ຳ
ຈະນຳຊຽງປາ　ບ້ານຊານ້ຳຈັ້ງບ　ໄປລັ່ງບເກັບເອົາ
ບ້ານງິວບ້ານເຕົາ　ຂອງເຮົາແຕ່ພໍ່　ບ້ານກ້ະເຜງຄົວ
ຊົວຍານບ້ານຊ່າວ　ບ້ານມ້າວສວນຖູ　ພູຊ້າວບ້ານຫວດ
ໄປກວດຄົວລົງ　ນາພົງສານຫຍ້າ　ທັບຟ້າໄທຂັນ
ຫຼງວທັນໂດຍຕ່ານ　ບ້ານໜານບ້ານໜີ　ແລ້ງລີ່ນາຈອນ
ບ້ານມ່ອນເມືອງກັດ　ໄປຈັດຄົວລົງ　ດົນອົງຄ໌ປ່າປູ່
ເຂົ້າສູ່ສົມພານ　ແຕ່ນັ້ນມີນານ　ເຈົ້າສາຣບົກຍ້າຍ
ທັງຄ້າຍທັງຜອງ　ສອງອົງຄ໌ພຸ່ວະບາຖ　ລັດກວາດຄົວລົງ

## ເຈົ້າສາລີແມ່ນພີ່ອ້າຍເຈົ້າສະນ້ອງຊາຍກໍໄດ້ລົງ ພ້ອມກັບນາຍໄທ

ບະບົງບະບ້ານ
ຄາດຄ້ອຍຄາໄປ
ງົວຄວາຍທັງຄົນ
ອອກເມືອງຫຼວງພໍ່
ຄັ່ງຄ້ອຍເນີທວງ
ພ່ອງກົວຄຳຕາຍ
ຈຳເຈົ້າເລີງເລີງ
ກາງເຫນືອຫາງຕ່ຳ
ຫາເຮືອທັງແພ
ປົດຝັງປາກນ້ຳ
ເຈົ້າຫົວຫນ້າເນຣ
ຫີວຫຣດຄາງແຄນ
ຊຸມນາຍທັງປວງ
ພ່ອງໜີພ່ອງບັງ
ໄປຊອດໄປແພວ
ເມືອງແທ້ເມືອງພານ
ຄົນດີນເຂົ້ານວຊ
ຊຸບຂີ່ດລາຍຄົວ
ບ້ານລັບເມືອງໂຄມ
ປັດກວາດລົງໄປ
ປະສົງເມືອງກວ້າງ

ດີຫານເຫຼືອເຣງ
ຕາມແຕ່ວິໄສ
ລີພົບໄຫຼຫຼັ່ງ
ຕ້ານຕໍ່ຈາກັນ
ທາງຫຼວງລະໄວ້
ລາງພ່ອງເສັຍຄ່າຍ
ຄອບຄົວລົງໂຮມ
ຫຸຂສ່ຳຂົນຂວາຍ
ຫຼີງແລປ່າໄມ້
ຄຳຫຸຂຂມອດຂ້ອນ
ເຂົ້າເພນບໍທັນ
ຫມື່ນແສນພາຍນອກ
ເຫຼືອທວງຫຸຂອ່າວ
ເພະພັງແຕ້ກມ້າງ
ລີ້ຢູ່ພັກນອນ
ພາງງານຊັບນ້ອຍ
ຝູງປວດເປັນນາຍ
ເອົາງົວໃສ່ຕ່າງ
ທ່າໂຫມຊຽງແລ
ເຊື່ອໄທຄວາມຍັວກ
ມັກສ້າງນາເທ່ນ

ລູກແພງຍັງນ້ອຍ
ທາງໄກມ້າກມາຍ
ຄັບຄັ່ງເມືອງນອງ
ນີ່ນັບເດັກນ້ອຍ
ພ່ອງໃຫ້ພ່ອງຫົວ
ກົວຕາຍອຶດເຂົ້າ
ທ່າໂຫມທ່າເຮືອ
ຫາເຂົ້າທັງເກືອ
ແຕ່ງໄດ້ເລີຍລົງ
ເຖີງພັວກຊາວຄົວ
ຈັ່ງຫັ້ນບໍຮ້ອດ
ແມ່ອອກທັງຫຼາຍ
ຈັກກ່າວພາຍຫຼັງ
ຕົກຂ້າງເມືອງແກວ
ລ້ຽງລູກທັງຫຼານ
ພໍຮ້ອຍນາຍສິບ
ເສັຍຄາຍເອົາຈີ່ດ
ເມືອງພ້າງເມືອງຕານ
ທ່າແພນາຫາດ
ເບົ້າຄົວລົງ
ບໍຍັກບໍແຄນ

## ນາ່ຍໄທຍ້ວກເບົ້າເອົາຄົວລົງໄປວ່າຈະເອົາໄປສ້າງຫັງ ນາແຫ່ນ ຄັບມາຮ້ອດແລ້ວເລີກຕີ.ຄົວຂ້າມຂອງ

ຍ້ວເບົ້າເສັຍຄາຍ
ເຖິງຂອງນ້ຳໃຫຍ່
ຄັບຄ້າຍຄາໄປ
ລຳນາເດືອນຫົກ
ຂອດຂ້ອນຄົນຕາຍ
ເສັຍຄົນນໍຣະບາດ
ທຸຂເຣັງກ້າ
ງົວແລະຄວາຍ
ເປັນປ່າຜັກຫົມ
ຜູ້ປູ່ບ້ານ
ເພິ່ນຫັກເອົາເສັຍ
ຫັງເຄື່ອງປ້າວ
ເອົາລູກນ້ອຍ
ເຈົ້າເຮືອນມາຮ້ອດ
ມາຍິນທຸຂຫມົ່!
ໄດ້ຂໍເຊົາບ້ານ
ຫນ່າຍບໍ່ແພ້
ເລົ່າມາພົບພໍ້
ຫນ່າຍໄທເຫນືອ
ຄ້ຽວໝາກະບັຍເບັຍ
ຮີດແຕ່ເຄົ້າ
ຮີດມີ້ດາຍ
ສາຍຫຼຸດພາຍໃນ
ໂລ້ກປີ້ນແປ້

ພອຍຈັດຄົວກາຍ
ເຣັດໄຮ່ທຳສວນ
ນາຍໄທຊ້ຳບອກ
ຜົນຕົກທີ່ທິ່ນ
ໜອງຄາຍລຳເລີດ
ຝູງໄທຄົວ
ອຳເຂືອກເຫຼືອຫາຍ
ຈິບຫາຍເສັຍເປົ່າ
ອົມມະໂນ
ຂາຍເຂົ້າເອົາເງິນ
ເຂົ້າເຕັມເງັຍ
ປັດແຜ້ວບໍ່ຄາ
ມາປູ່ແຫນເຮືອນ
ໄດ້ຂໍແວ່ຈອດ
ໄດ້ຂໍເຊົາເຮືອນ
ມາຂີ້ຄ້ານຂໍເຂົ້າເງັຍໂດ
ເວນຫ້າກພາເປັນ
ໜ່າຍໄທຫໍ້
ຂາຍເກືອແລະຜ້າ
ລະໄລເສັຍ
ຄັດຜ້າຝັກຫວາຍ
ພາຍຄຶຄົງປຽດ
ເປັນໂຊນໂກນ
ດູຫຼາກຫຼາຍອັນ

ຄົນຫຼາຍກ້າໂກດີ໌
ບໍ່ຣະບວນຈຳຍ້າຍ
ຫນີອອກພັນລຳ
ລະງົມເດືອດຮ້ອນ
ບັງເກີດກົນລະຫົນ
ເຂີນຂາດເຂົ້ານ້ຳ
ກິນແຫນງພາຍຕົວ
ບ້ານເກົ່າເຮືອ
ໃນໃຈໂສກເສົ້າ
ເຂົ້າເຕັມເລົ້າ
ເພິ່ນກໍເອົາແລ້ວ
ສາລີກາຈາຜົວຄືຄ້ອຍ
ສອງສາມເດືອນ
ເຊົາປ້າວເຊົາເຮືອນ
ມາຍິນເອືອນ
ໜ່າຍເດ!
ບໍ່ປາກເຫັນ
ຖືຫາບຂາຍເກືອ
ໜ່າຍໄທອ້າ
ໄມ້ເຈັຍເໜັນເກົ້າ
ຮີດມີ້ຣວາຍ
ບ່ຽງແຕ່ຕ່ຽວ
ສັງມາຄ້ຽວໝາກ
ເປັນດາວຄົວນ

ແຜ່ນດິນໄຫວຫວັ່ນ ພູລັ່ນກ້ອງ ສຽງສນັ່ນທັງເມືອງ
ຫມາບັນເບືອງ ກາງຄືນຫອນເຫົ່າ ເມືອງແລະບ້ານ
ສູນເປົ່າບາງບົກ ຝົນຕົກຮຳ ແຜ່ນດິນກາຍເນືອ
ດາວເຮື່ອແຈ້ງ ເຫັນແດກກາງຄືນ ເຂົ້າປູຄົກ
ມາເຕັມຂຶ້ນສູງ ເຂົ້າປູ່ບູງ ບິນໄປຊິ່ຊວ່າ
ສັດວ໌ຢູ່ປ່າ ມາບ້ານບໍ່ຫນີ ເນືອຣາດີ
ເຫັນຮູງກິນນ້ຳ ເຜິ້ງຢູ່ຖ້ຳ ຈັບກິ່ງສາຂາ
ເຜິ້ງຢູ່ຜາ ແປງຮັງງ່າໄມ້ ຄົນທຸຂໄຮ້
ເລີຍເກີດເປັນດີ ບີງສິບປີ ເອົາກັບເວົ້າຊູ້
ຝູງຄົນຮູ້ ທ່ານບໍ່ເອົາຄວາມ ໄຟລຸກລາມ
ບັງເກີດພົ້ນນ້ຳ ທຸຂເຮັ້ງກ້ຳ ຂຳເຂືອກໂຂນມາຣ
ລັກຂອງພຼະ ມາໄວ້ເສັບກາຣ ລັກຂອງທານ
ມາລ້ຽງລູກເຕົ້າ ເອົາພຼະເຈົ້າ ມາຫຼໍ່ເປັນເງິນ
ລັກຂອງຄົນ ໄປຂາຍໃນລາວ ຂຸດພຼະທາຕຸ
ທັງກິນຫຼັກສິນ ບັງຈັກເຫັນ ຕໍ່ເຕີມໄປເລື່ອຍ

---

ຊາວຄົວທັງຫຼາຍໄປຮອດຫນອງຄາຍໄດ້ເຫັນໄທປັນກັນເຮັດຂ້ອຍພ້ວກເຈົ້ານາຍ ເອົາຜູ້ສອງສາມຄົວ ຄັນເຫັນເປັນການດັ່ງນັ້ນກໍພາກັນຄິດກະບົດໂດນຫນີລັດປ່າ ລັດດົງຄືນເມືອຫາບ້ານເມືອງ .

---

ບັດນີ້ຈັກຈາ ຈັກຫາໃຫ້ກວ້າງ ສິບສ້າງສິບທານ
ຕາມແຕ່ໄວຫາຣ ແປງສານໂຄງການ ໂສພາບພາທີ
ປ່ານີ້ໂພຍຕ້ອງ ຂອດຂ້ອງເຖິງຕົວ ສ່ວນດັ່ງໄທຄົວ
ນົວເນົາອຶດປາກ ເປັນພາດເປັນໄພ ຕາມແຕ່ວິໄສ
ຊອກເຂົ້າຫາປາ ຜະລາຜະລັງ ທຸຂຂັງເຂາະຂອດ
ຄິດຮ້ອດຄ່ຳຕາຍ ດັບວາຍສິ່ງຂອງ ພໍ່ຫມູ່ບາຍກອງ
ຖືຄອງອຳນາດ ຫາອຸບາສທຳກົນ ຄຶດຄົນງີ້ບ້າ

ຊະໂລຊະລາ ຮັກສາພົວກໄພ່ ຈັດໄລ່ໂຮມກັນ
ຫຼາຍວັນບໍ່ດົນ ພ່ອງຫຼົບໄປມາ ພ່ອງຄາປູ່ຢ້າວ
ພ່ອງພ້າວໂຕນໜີ ພ່ອງມີຄົນໄຂ້ ພ່ອງໄວ້ກົນໄຊ
ໂຣຄາບຽດຕ້ອງ ພ່ອງບັງບີປ່າ ໄປຄວ່າໂຄຈອນ
ໂດຍອາຈາຣຍ໌ທອນ ໂພດທານຊີວິດ ບຸພພິດປານີ
ແຕ່ບັ້ນຣາຕີ ລັງສີຄາບຄ້ອຍ ໄພ່ນ້ອຍຊາວຄົວ
ບິນກົວຢ້າກເບື້ອນ ປູ່ຈ້ຳກິນ ແຜ່ນດິນໜອງຄາຍ
ກາຍເກີດເປັນທຸຂ໌ ເກີດຄີບຸກນ້າກຫຼາຍ ຄົນຕາຍທຸກມື້
ຊຸ້ເຂົ້າຊ້ຳແພງ ນາແຊງໄປ່ແກ່ ກົນແຕ່ໝໍ່ໄມ້
ນາຍໄທທຽວທ່ອງ ເວົ້າປ່ອງຄວາມມາ ທຸລະທຸໄລ
ຈັດກວາດເຂົ້າໄປ ບໍ່ໄດຄ້າດແຄ້ວ ກວາດແລ້ວຄົວລາວ
ສົ່ງຄາວໄປໜ້າ ບາດທ້າພາຍລູ່ນ ດິດປູນດູດີ່
ຫນ້າທີ່ແວນດີ ໂຕນໜີແວນເປື້ອງ ເຖິງເມື່ອງຈິ່ງເຊົາ
ຮີບເດົາດາຖ້າ ດູໜ້າບິງຊາຍ ຊັພສີນອານັດ
ລະຫັດອຳດີ ຣາຕີຫົ່ງງຄ້າຍ ຮີບຍ້າຍລົງເຮືອ
ເບື້ອງໄຕ້ເບື້ອງເໜືອ ພາຍເຮືອລ່ອງໄຫຼ ລົງໄປແລ້ວຈອດ
ໃສ່ຖອດເຮືອລົງ ພາບຖົງຄັດໃຫ່ ແລ້ວໄລ່ຄົວຄືນ
ເຂົ້າໄພເຖິງເຖື່ອນ ລະເລື່ອນເລີບຕາຍ ໜອງຄາຍຖ້ວງຕື່ນ
ເອົາຄືນເມື່ອງນອງ ແຕ່ງກັບເຮວຣີນ ເຂົ້າຖີບນຳຄົວ
ຜົວເມັຍຜັດພ້າກ ໜີຈ້າກຄົນທາງ ລາງຄົນເຂົ້າໄດ້
ຮ້ອງໄຫ້ໃນດົງ ລາງຄົນຫຼົງ ໃນດົງປ່າໄມ້
ລາງຄົນໄດ້ແລ້ວ ເລີບລັກໂຕກໜີ ເກຈີຈະນາ
ຄ້າງຄາໃນປ່າ ລາງພ່ອງນັ້ນ ເສີກຜ່າໃນເຮືອ
ເຂົ້າແລະເກືອ ວາງເສັຍມ້າກລົ້ນ ຝູງພ່າງພົ້ນ
ພໍຫມູ່ເລີຍໄປ ເຖິງຂັບໄດ ຫາປະຕູຫົ້
ຈິ່ງພົບພໍ້ ຝູງແຕ້ກໂຮມກັນ ລົງຂັບໄດ
ເປັນຫີນກ່າຍກ້ອນ ຟ້າແດດຮ້ອນ ພີນເລົ່າເລີບຄົກ

| | | |
|---|---|---|
| ຕົກຫາງໂຮນ | ປົກເປັນຫາຍເສັ້ນ | ຜູ້ນັກເວັ້ນ |
| ຫຼັງປຸ່ມໃບດົງ | ໝົດເຂົ້າດົງ | ຫາກິນລູກໄມ້ |
| ຫາບໍ່ໄດ້ | ຕາໆຕຸ່ມທັງຄົວ | |

## ເສັຍຄົນໝົດຫຼາຍໃນເວລາເຂົາເຈົ້າເບື່ອໝາກໜ້ອງ ຕາຍໄປເປັນລອງສ່ວນສາມ

| | | |
|---|---|---|
| ບາພ່ອງບັ້ນ | ເສັຍຜົວທັງລູກ | ລາງພ່ອງບັ້ນ |
| ເສັຍດູກທັງຂອງ | ລາງຄົນບັ້ນ | ປອງໄປເຈັບລະຈາກ |
| ຂ້າມປ່າໄມ້ | ບຸນຫາກຍັງຊູ | ຂຶ້ນເມືອພູ |
| ເລີກຢູ່ບຳກິນ | ຂຶ້ນພົ້ນແລ້ວ | ຈັດຈິ່ງຫາກັງ |
| ເຂົ້າປ່າໄລ່ | ເລີກບຳບໍ່ທັນ | ເຂົ້າປ່າຫັນ |
| ເລີກບຳບໍ່ໄດ້ | ເຂົ້າປ່າໄມ້ | ຫຼັງຝ່າຍພູໂຮງ |
| ຜັດກັບຫຼັງ | ໃບດົງພໍໝູ່ | ລາງພ່ອງບັ້ນ |
| ຄ້າງຢູ່ໃນໄພ | ຕາມວິໄສ | ໄຕ່ຮອຍບຳຊ້າງ |
| ຂ້າມຍັງກ້ວາງ | ເດີງທີ່ເຊົາບອນ | ໄປໂດຈອນ |
| ເລີຍເຫັນໝາກໄມ້ | ເກັບໄດ້ແລ້ວ | ນາຜ່າຊີນດູ |
| ແຊ້ບຫອມຫວານ | ມັທຸປຸບປານແປກ | ຂ່ອງແຊ້ບແທ້ |
| ເຮົາຈູບດີຫຼີ | ບູນພາຍຫຼັງ | ເຮົານີ້ຈິ່ງໄດ້ |
| ກອງໄວ້ແລ້ວ | ໄປຫາບເອົາມາ | ກິນຜະລາ |
| ນີ້ແຮງອີ່ມທ້ອງ | ບູຫາງຍັ່ງ | ໄປຫນ້າເປັນສັງ |
| ຫມູ່ນາຫຼັງບໍ່ໄຫ້ | ໝູ່ນາຫຼ້າ | ຖານຊີ້ວ່າແພງ |
| ສີແດງງ | ບໍ່ຄອຍຕາລ່ຳ | ໝາກຄ້ຳຕ່ຳ |
| ຂາຍໃຫ້ບາດສານ | ໜ່ອຍບໍ່ນານ | ອາຫານລຳເລີດ |
| ໄສ້ຢູ່ທ້ອງ | ກາຍເກີດເປັນໂຜຍ | ເປັນໂຮງໂຮຍ |
| ຄືລີງເມົາະໜ້ອງ | ໄສ້ຢູ່ທ້ອງ | ບັງເກີດໂງເງ |
| ເປັນຮວ່ານເຮ | ເໝືອນໄກ່ບ້າຄ້ອນ | ພິສພູ່ງຮ້ອນ |

ຈຸຕິຕາຍໄປ
ຜູ້ກິນຫຼາຍ
ທັງໝູ່ຕາຍກອງ
ຫອກແລະງ້າວ
ອັນແຜງຂນາດ
ປະເສັຍຖິງ
ເປັນເພດເປັນຜີ
ດັບຊີພເຊື້ອ
ຕາຍຫມົດບໍ່ຍັງ
ຍິນທຸຂຄ້ອຍ
ເພິງກົວຝັ່ງຟ້າວ
ກາງໄພລົນ
ບໍ່ຮູ້ປ່າກິນ
ມານຸດມູ້
ຄົນຕາຍມາກລົ້ນ
ເຫມືອນດັ່ງຄວາມ
ຫນີມາຈ້ວນໄຊ
ພ່າຍແບ້ນລ້ານ
ທັງປວງກ່າວໄວ້
ເວນນຳທັນ
ວິບາກພາຍຫຼັງ
ຫນ້າຍແລະຮ້າງ
ຢູ່ດົງດອນໄມ້
ຕາຍຢູ່ໃນພູໃນຜາ
ບິນຸຫນ່າຍອາເບືອງ
ເບິງພຸ້ນພີ້
ແຮງຊ້ານີຫຼາຍ

ຜູ້ກິນນ້ອຍ
ໄປນໍຣະນາກ
ປະເສັຍຂອງ
ຖົງເຄື່ອງອັນດີ
ເສັຍຄຸຫຄ່າ
ເງິນຄຳບໍ່ເບື້ອ
ເສັຍຄົນດີ
ຫຼານເຫຼັນບໍ່ຫຼໍ
ຫມູ່ມາຫຼັງ
ຮ້ອງໃຫ້ຫາກັນ
ປືນແລະງ້າວ
ກິອິຂົງເຂດ
ຂອງຕ່າງດິນ
ອິດປາກມົວຕາຍ
ຫນີເສິກພົ້ນ
ນິຍາຍກ່າວໄວ້
ພ່າຍຫນາໃນ
ມາຈ້ວນຄວຍຫຼວງ
ກໍ່ຫາກໄດ້
ລີຜັນພ່າຍຫຼີກ
ຜົວເພິ່ນຍັງ
ມັນຫາກເລິງມີ
ຕາຍຄ້າງໄດ້
ບໍ່ມີຄົນມ້ຽນ
ຄົນທັງເມືອງ
ເຫັນຢູ່ເອືອເລືອ
ກົກໄມ້ຕາຍ

ຍັງອ່ວນນານຕາຍ
ເພັຍຊາມາຕຍ໌
ກາງດົງດ້ານດ້າວ
ນິຄຸຫແສງ
ອາກາສອັນຄົງ
ຕາຍຢູ່ເຮື້ອ
ກວານຫຼວງເຈົ້າເສັນ
ຫມູ່ມາກ່ອນ
ສ່ວນຍັງແວນນ້ອຍ
ສຽງມີ່ນັນ
ອິນໄຂ່ວວາງໄປ
ຂອງຕ່າງເທສ
ບໍ່ຮ່ອນເຄີຍຮູ້
ມາເສັຍດາຍ
ມາຈ້ວນຄວາມຕາຍ
ພ່າຍສອັນແລ້ວ
ມາຈ້ວນຫນາບ້ານ
ຝູງຕານາຍ
ຄື່ດັ່ງດຽວກັນ
ທີ່ວລະຄິກ
ຜົວໂຕຕາຍຈ້າກ
ຕາຍເປັນຜີ
ເປັນເຫຍື່ອປາຝາ
ຫຸຂທີ່ຫ້ຽນ
ບໍ່ເລິງສິງນີ້
ກົກໄມ້ໃຫຍ່
ດູຫຼາຍຂອນໄຂວ່

ເບື່ອລູກໄມ້ ໝາກໝ້ອງບີເວນ ໂອນບໍ່!ຝູງບໍຕາຍ
ເລີຍຫນີເສັຍຈ້າກ ພ້າກທີ່ນັ້ນ ໄປປ່ອງຫາງຄີນ
ເຈົ້າສາລີ ຕີຄິວໝູບໝູ່ ເຈົ້າສະນ້ອງ
ຍັງຢູ່ຫນອງຄາຍ ຝູງຄິວລາວ ກວາດກາຍໄປໜ້າ
ເດືອນ ໕ ຄ້ອຍ ແຮມຄ້າງເພື່ອນດາວ ພະຍາລາວ
ຈຳກິນນ້ຳປ້ອຍ ຊູນໄຫຍ່ນ້ອຍ ຫັງອາຈຫັງຍາ
ຈັດເອົາມາ ກິນນ້ຳສັຈຈະ ເຈົ້າສະຮ້າຍ
ເລີຍລະຄິວໜີ ຕາວັນຕິກ ເຂົາຣິບກິບແລງ
ຕາວັນແລງ ເຂົາມາລ້ຽນຕ້າຍ ເຈົ້າສະຮ້າຍ
ມີບ່າວພໍ່ມີ ເປັນອີລີ ຄີຄິນຜີບ້າ
ໃຜບໍ່ຢ້ານ ຕາຍຊ້ຳຄອບມັນ ຕາວັນຂຶ້ນ
ປອມພູຜ່ອນຜູ່ ເຈົ້າສະອວ້ານ ຄິວສູ່ນາວາ
ເອົາເຮືອງຊາວ ລີງໄປລີວລີ່ ຮອດຝັ່ງນ້ຳ
ເຖິງທີ່ແດນຊີນ.

## ເຈົ້າສະຫນິມາບໍ່ເປັນເທື່ອທີ່ສອງ
## ແຕ່ກໍຕາມຫຼັງກັບມາຫັ້ນ

ເອົາຄິບຫນູບຫຼັງພໍຫນຸ່
ຄ້າວຄູ່ໄວ້ດີຫອກແລະປືນ
ໝູ່ໜີກ່ອນບໍ່ເປັນທາງ
ໝູ່ຫນີກາງເປັນຄໍ້ແຄ້
ໝູ່ຫນີຫຼ້າທາງແຫ້ບໍ່ຫົງ
ຂຶ້ນເມືອດົງຫຼຽວລົງອໍ່າຄ່ຳ
ຫຼຽວເຫັນນ້ຳສຸດຊິ່ວຕາແລ
ນົກກາງແກສອນກາແອ່ນເຄົ້າ
ນົກແຂກເຕົ້າເປັນໝູ່ມາກາຍ
ເຫັນຄົນຕາຍໃນດົງປ່າກວ້າງ
ໝ້າດ່ານຊ້າງເຖິງທີ່ເຊົານອນ
ໄປຄອນ ໆ ສູ່ວັນເດີນເຊົ້າ
ຟ້າຄື່ນເກົ້າປີໃໝ່ຝົນຮວາຍ
ດອກກະຈາຍບານຫຼາຍຍ້ານ
ງົ້ວກ່າຍກ້ານເຮືອງເຮື່ອສາຂີ
ເຫັນນາງນີ້ຍິນດີຫູຍຮ້ອງ
ຂ້າມເຫສທ່ອງເຖິງເດີ່ນຕັກແດນ
ຈັກເຊົາແດນທີ່ແດນກົກໄມ້
ເຊົາບໍ່ໄດ້ເຫນັບເດືອນຄາວຂີ
ເຈົ້າສາລີໜີມາເດືອນ ໒
ຝົນສວາດເອີ້ຍຟ້າແດດສອນວອນ
ເຫັນຫົວກອນກອງກັບເດັບລະດາດ
ປາດແຊ່ນ້ຳຈົມໄວ້ຮູ່ງຄືບ
ມືນຕາເຫັນອັນໃດປາກເອົ້າ
ຕື່ນແຕ່ເຊົ້າກີນເຂົ້າເຫນືອດກອຍ
ເປັນວອຍ ໆ ບໍ່ຈີດ
ເປັນອີດລີດໃນທ້ອງໃນກີງ
ຜູ້ກີນຫຼາຍບໍ່ຕີງຕົນໄດ້
ເບິ່ງປ່າໄມ້ເປັນໝອກນົວຕາ
ເຖີງເວລາພໍງ່າຍຈິ່ງສ່ວາງ
ຍົກຍ່າງຍ້າຍດີແລ້ວເລົ່າໄປ
ຂ້າມໄພຂວາງໄຫຼດີນຄາວເຄົ້າງ
ເບິ່ງເຂົ້າໄຖ່ ໆ ກໍລົງ
ເບິ່ງເຂົ້າຖົງ ໆ ກໍສຽງ
ກັບແຈ້ວກຽງງ້າຜີໃພງເລັບ
ຜົວແລະເມັຍວາງເສັຍແມ່ເຖົ້າ
ຝູງລູກເຕົ້າໜີປະມາຣດາ
ສາລີກາຈານົວດີດ້ອຍ
ປະລູກນ້ອຍຍັງບໍ່ທັນຕາຍ
ອີນດູແດ່ສາຍຄໍເຈົ້າຫຼ້າ
ເປັນກໍ່າພ້າໃຫ້ຢູ່ຄົນດຽວ
ໃນໄພຊຽວບໍ່ມີພີ່ນ້ອງ
ຂ້າມເຫສຫ້ອງເຖີງເຂດຄີຣີ
ເຈົ້າຜູ້ດີຍັງດີທັງຄ້າຍ
ສ່ວນຜູ້ຮ້າຍປະປ່ອຍເສັຍກັບ
ເຖົາຊະຣາໃພຄາຫມົດສຽງ
ລູກເອີ້ນລຽງຄອງແຕ່ເອົາບູນ
ລູກເອີນຕາຍລູກຊາຍຍັງເຝົ້າ

ຄ່ອຍຄິ່ມເຫົ້າຫນັກເຫນື່ອຍເຫຼືອແຮງ ເຂົ້າ ໆ ແມ່ນມັນ
ປາຖ້ວນແມ່ນເອື້ອງ ເງີນບາດເຟື້ອງຊື້ບໍ່ພໍງາຍ
ຕົວບໍ່ຕາຍເສັຍຂອງຫຼາຍແລ້ວ ແກ້ວແຕ່ຟ້າຊີ້ຊູ່ກັນກີນ
ຂອງຕືນນືຍັງຮູ້ອອກບໍ່ ພໍ່ແມ່ໄດ້ກາງຕໍຫາຍເສັຍ
ປູງໄຫລຄົວເໜັບໆຫນ່ຳເວົ້າ ເລີຍລ່ວງເຫົ້າເຖີງເກີ່ນດອນກອຍ
ເປັນສອນວອນຄືບີນສວ່າງ ຫຸກຊ່ຳໄມ້ຫຼາຍຕ່າງນາງ
ດວງມາລາຫອມຣວາຍຣວາດເຣົ້າ ດອກຄັດເຄົ້າກັບດອກກຽງລີບ
ສຽງລະງີມໃບໄຜເຄື່ອນຫ້ອງ ຈັກຈັ່ນຮ້ອງສຽງສ່າຍູງງຽວ
ນົວງສຽງແລ້ວກຽງແຂກເຕົ້າ ເປົ້າກາງກີຊີນດອກອາຣວນ
ດອກດຳດວນຄືສວ່ນຄີນສ້າງ ດອກກາບຮ້າງເປັນຖີ່ນສອນລອນ
ດອກຈ້ຽງກອນຄືຄີນຮ້ວດຮ້ອຍ ຕາວັນຄ້ອຍລັບເລົ່າເສັຍແສງ
ຕາວັນແລງບາຄານກັບອງພົນຫຼວງຕ່າວຄືນມາບ້ານ.

# ພົງສາວະດາຣແມ້ວເມືອງພວນ

ຍັງມີຊົນຊາຕິຈີນຈຳພ້ວກນຶ່ງ ເອີ້ນວ່າ ແມ້ວ ຊ້ອນຢູ່ແຕ່ຈອມພູຈອມດອຍ ດິນສູງໃນມົນທົນຢູນນານ ເສສວນ ກຸຍຈິວ ກວາງສີ ປະເທສຈີນພາກໃຕ້ ເພື່ອອາໄສປູກຢາຝິ່ນເປັນອາຊີພ ນານໆ ເຂົ້າ ຊົນຈຳພ້ວກນີ້ມ້າກຂຶ້ນ ແລະ ພູດອຍກໍ່ບໍ່ພຽງພໍກັບຄວາມຕ້ອງການ ເຫັນວ່າດິນແດນຕອນໃຕ້ປະເທສຈີນລົງມາມີພູດອຍຫຼາຍ ຈຶ່ງພາກັນອົພຍົພເຂົ້າມາຢູ່ດິນສິບສອງພັນນາ ສິບສອງຈຸໄທ ເມືອງຫຼວງພຣະບາງ ຫົວພັນ ໕ ທັງ ໖ ຕົກເມືອງພວນ ປີກົດເສັຈ ຈ.ສ. ໑໒໑໒ ນັບໄດ້ຮ້ອຍປີມານີ້ປະມານສາມໝື່ນ.

ເມື່ອເຂົາມາຢູ່ດິນເມືອງໃດ ແຂວງໃດ ເຈົ້າເມືອງ ເຈົ້າແຂວງກໍ່ຕັ້ງພ້ວກເຂົາເປັນຜູ້ປົກຄອງກັນເອງ ໂດຍຂຶ້ນສັມມະໂນເສັຍສ່ວຍໃຫ້ເມືອງນັ້ນແຂວງນັ້ນ ເຂົາຢູ່ບ້ານເຂົາໆຖືກົດໝາຍປ່າຂອງເຂົາ ຮີດຄອງຂອງເຂົາມີຢ່າງໃດ ເຂົາກໍປະຕິບັດໄປຕາມຂນົບທຳນຽມປະເພນີຂອງເຂົາ ບໍ່ມີໂຮງຮຽນ ບໍ່ມີໜັງສືຮຽນ ບໍ່ມີສາສນາ ຖືແຕ່ຜີຟ້າ ເກີດມາເວົ້າຮ້ອງລຳຂັບຂານຕາມພາສາຂອງເຂົາໄດ້ແລ້ວກໍ່ເປັນດີ. ການທຳນາຫາກິນດຸໝັ່ນເຕັມທີ ເຮັດກິນ ເຮັດນຸ່ງ ເຮັດຢູ່ເອົາເອງ ເຖົ້າແກ່ຊະຣາມາເທົ່າໃດແຮງເຕັກວຽກໃສ່ ເຂົາວ່າຕາຍແລ້ວຈະບໍ່ໄດ້ໃຊ້ກົນແຮງ ຊາຕິແມ້ວດິນພວນມີສອງຈຳພ້ວກ ຄືແມ້ວຂາວແລະແມ້ວລາຍ ກັບມີສອງສກຸລໃຫຍ່ເອີ້ນວ່າສກຸລລີແລະສກຸລລໍ. ຂ້າພເຈົ້າຮູ້ຈັກແຕ່ສກຸລລີ ທີ່ເປັນສກຸລມີບຸນວາສນາແລະສີວິໄລທັນສໄມ ແລະອອກຊື່ລືນາມໂດ່ງດັງມານານແລ້ວ. ຜູ້ເປັນຕົ້ນສກຸລນີ້ມີນາມວ່າ ລີປາວ(ນາມສກຸລລີຕາງປາວ) ລີປາວມີບຸດຊາຍຄົນ ໑ ຊື່ລີຟຸງ ເກີດຄ.ສ. ໑໘໘໘ ລ່ວງເຂົ້າປຖົມໄວຍ໌ ໄດ້ທຳການສົມຣົສກັບນາງສາວປາວ້າລູກແມ້ວທັມມະດາ ຄັນອາຍຸໄດ້ ໒໐ ປີ ກໍ່ໄປຈ້າງຈາຣຍ໌ອຸດມາສອນໜັງສືລາວໃຫ້ຢູ່ທີ່ບ້ານຄ່າງຫຸ້ນ ຕາແສງພັກບູນ ກອງໜອງແຮ້ດ ເມືອງຄຳ. ລີຟຸງເປັນຜູ້ຮູ້ໜັງສືລາວກ່ອນແມ້ວທັງຫຼາຍ ໄດ້ເຮັດການພ້ອມກາຍຕົງ(ນາມສກຸລລໍເປຼັຍປ້າວ) ຍ້ອນຄວາມສລຽວສລາດ ກາຍຕົງຈຶ່ງຍົກລູກສາວຊື່ນາງລໍໄຫຼໃຫ້ເປັນພຣິຍາ. ໄດ້ໄປກຳກັບສ້າງທາງແຕ່ໜອງແຮ້ດໄປຫາບ້ານນານຽວນັ້ນ.

ຄ.ສ. ໑໙໑໙-໒໐ ໄດ້ພ້ອມກັບກາຍຕົງຈັດການໃຫ້ແມ້ວຊຶ່ງເກີດຈຸລະຈົນ ນັ້ນສງົບ.

ຄ.ສ. ໑໙໒໔ ນາງລໍໄໜກິນປາເບື່ອຕາຍ ກາຍຕົງພໍ່ເມັຍຫາເຣື່ອງໃສ່ໄດ້ ຮັບຄວາມທຸກຂ໌ຄາວນຶ່ງ.

ຄ.ສ. ໑໙໒໕ ໄປຈ້າງນາຍຄູຄຳຜັນ ມາສອນໜັງສືສາວໃຫ້ລູກແລະເດັກ ຊາຍແມ້ວຫຼາຍຄົນ ຢູ່ທີ່ບ້ານຍ້ອດຄານ້ອຍ.

ຄ.ສ. ໑໙໒໗ ຍ້າຍໄປຢູ່ບ້ານພັກແຄະ ຕາແສງເກົ່າພັກບູນ ຍັງຈ້າງ ນາຍຄູຄຳຜັນມາສອນອີກຕໍ່ໄປ.

ຄ.ສ. ໑໙໒໙ ສົ່ງລູກໄປເຂົ້າໂຮງຮຽນເມືອງຊຽງຂວາງ.

ຄ.ສ. ໑໙໓໒ ກອມມີສແສຣ໌ ກູເວຣ໌ເນີນອງ ແຂວງພວນ ມີຄຳສັ່ງ ໃຫ້ທ້າວຜັນ ເຈົ້າເມືອງຄຳ ຕັ້ງເປັນຣາຊາວ່າການແມ້ວ ດົນຕາແສງພັກບູນ ແລະຕາແສງພູສະບົດ ກອງໜອງແຮ້ດ ເມືອງຄຳ.

ຄ.ສ. ໑໙໓໔ ກາຍຕົງພໍ່ເມັຍຕາຍ ພວກລູກກາຍຕົງເຮັດການບໍ່ ຖືກຕ້ອງກັນ ເກີດວິວາດກັນຂຶ້ນພາກັນລາອອກການ.

ຄ.ສ. ໑໙໓໕ ສົ່ງລູກໄປຮຽນວິຊາຄວາມຮູ້ທີ່ເມືອງວິນ ປະເທສ ແກວກາງ ແລະທ້າຍປີນີ້ໄດ້ໄປຢ້ຽມຢາມລູກແລະທ່ຽວດູບ້ານເມືອງໃຫຍ່.

ຄ.ສ.໑໙໓໖ ໄດ້ໄປຊົມຕລາດນັດເມືອງໄຊງ່ອນ ແລະນູນສລອງ ທາງຣົຖໄຟສາຍຈາກເມືອງໄຊງ່ອນໄປຫາໄນຍ.

ຄ.ສ.໑໙໓໘ ກອມມີສແສຣ໌ ກູແວຣ໌ເນີນອງ ແຂວງພວນ ຕັ້ງ ໃຫ້ເປັນຜູ້ກຳກັບການຝ່າຍຕາແສງໜອງແຮ້ດ: ບ່ອນທີ່ຫຼາຍຄົນບໍ່ຖືກຕ້ອງ ກັນ ເພາະໃຜກໍຍາດກັນເປັນຕາແສງນັ້ນ.

ຄ.ສ. ໑໙໓໙ ວັນທີ່ ໑໒ ອັກໂຕບເບີ ລີຟຸງເຖິງແກ່ກັມ ປະ ກອບຄົວໄວ້ມີ:

໑/ນາງປາວ້າ ມີລູກຊາຍຊື່ລີໜາວຈາວ ລີປາວເຢ້ ລີຕູ່ເປີ ລີຕູລີອາ (ຮູບທີ່໔)ລູກຍິງຊື່ລີປາວປົ່ວແລະລີເໝົານໍ້.

໒/ນາງລໍໄໜ. ມີລູກຊາຍຊື່ລີຕູບີ(ຮູບທີ່໓)ລູກຍິງຊື່ລີເໝົາຊົງ.

໓/ນາງກີຈົວ ມີລູກຊາຍຊື່ລີຕູ່ ລີຊ່າວ ຮຽນຢູ່ເມືອງດາລັດ ປະເທສ

ແກວກາງ ແລະລີຫບາວກາວ ຮຽນຢູ່ເມືອງຊຽງຂວາງ.

໔/ນາງວ່ານ້ ມີລູກຊາຍຊື່ ລິຊັ໌ສີ.

ລີຟຸງໄດ້ຮັບຕາອິສສຣິຍາພອນ:

-ສິສວ່າງວົງສ໌ຫຼຽນທອງ

-ລ້ານຊ້າງຮົ່ມຂາວຊັ້ນທີ່໕



ຮູປທີ່ ໓ - ພຼະຍາຄຳຣົງຣິທິໄກ ລີ ຕູ ບີ ເຈົ້າເມືອງແມ້ວ

# ປະວັຕິ ພະຍາດຳຣົງຣິທິໄກ ລີ ຕູ ບີ

ເກີດວັນທີ່ ໑໓ ອູດ ໑໙໑໙ ທີ່ບ້ານພັກແຄະ ຕາແສງພັກບູນ ກອງໜອງແຮດ ເມືອງຄຳ ແຂວງພວນ . ເປັນບຸດຂອງລີຟຸງແລະນາງລ່ໄໝ. ເມື່ອອາຍຸ ໘ ປີ ພໍ່ໄດ້ຈ້າງນາຍຄູຄຳຜັນມາສອນໜັງສືລາວໃຫ້. ຄ. ສ. ໑໙໒໙ ໄປເຂົ້າໂຮງຮຽນເມືອງຊຽງຂວາງ ເສັງໄດ້ປະຖົມສຶກສາ ແລ້ວອອກໄປຮຽນຢູ່ເມືອງວຽງຈັນທນ໌ ໂຮງຮຽນມັທຍົມປາວີ ບໍ່ຖືກອາກາສຮ້ອນ ໄດ້ກັບຄືນມາບ້ານ ຫາຍພະຍາທິແລ້ວລົງໄປຮຽນຢູ່ໂຮງຮຽນມັທຍົມເມືອງວິນ (Vinh ) ໄດ້ ໔ ປີຈຶ່ງໄດ້ກັບຄືນບ້ານ. ຮູ້ອ່ານຂຽນພາສາຝຣັ່ງ ລາວ ໄທ ຫໍ້ແລະແກວ.

ຄ. ສ. ໑໙໓໙ ເປັນຕາແສງແກ້ງຄວາຍ ກອງໜອງແຮດ. ເມື່ອບ້ານເມືອງວຸ້ນວາຍໄດ້ຊ່ວຍຝຣັ່ງຕໍ່ສູ້ຍີ່ປຸ່ນ ອິສສຣະແລະວຽດມິນ. ໄດ້ເປັນນາຍກອງຊັ້ນທີ່ ໔ ວັນທີ່ ໒໘ ອູດ ໑໙໔໓. ອຸປຣາດຊັ້ນທີ່ ໑ ວັນທີ່ ໑໘ ຊຸນເຍ ໑໙໔໗. ເຈົ້າເມືອງຊັ້ນທີ່ ໔ ວັນທີ່ ໑ ໂນວອມເບີ ໑໙໔໙ ຮອງຄ່ເຈົ້າແຂວງພວນ ວ່າການຝ່າຍແມ້ວແຂວງພວນ . ໄດ້ຮັບພະຣາຊທານນາມຍົສເປັນ ພະຍາດຳຣົງຣິທິໄກ ຈາກສົມເດັຈພະເຈົ້າສີສວ່າງວົງສ໌ ແລະເຄື່ອງອິສສຣິຍາພອນເປັນບຳເນັຈພິເສສຄື:

ຕຼາລ້ານຊ້າງຮົ່ມຂາວຊັ້ນ ໔ (Officier du Millions Eléphants )

„ສົງຄາມມີຄຳຊ້ອບ ໔ ຄັ້ງ (Groix de guerre à 4 citations )

ຫຼຽນຕໍ່ຕ້ານສັດຕູຂອງຝຣັ່ງ - ລາວ(Médaille de résistance Franco -Lao )

„ມຫາສົງຄາມ ໑໙໓໙ - ໔໕ (Médaille Commémorative de gnerre 1939 - 45)

ຫຼຽນອະນານິຄົມ (Médaille Goloniale )

ຕຼາຊັ້ນສູງຝຣັ່ງເສສຊັ້ນທີ່ ໕ (Chevalies de la Légion d ' Honneur ) .

ພະຍາດຳຣົງຣິທິໄກ ລີຕູບີ ມີເມັຍ ໓ ຄົນຊື່ ; ນາງປົ້ວ ນາງຊົງແລະນາງເຊັຍ ມີລູກຊາຍຊື່ລີລົງ ລີເຕັ່ງ ລີຕູສາ ລີຕູວີ ລີຕູຫຼີ. ລູກຍິງຊື່ລີເຊັຽ ລີເກົາລີ ລີເກົາໃບ້ ລີນໍ້ວ້າ ລີເກົາເປີ.

## ລາຍການເດີນທາງຂອງເຈົ້າຄຳໝັ້ນ ວົງກົດຣັຕນະ ເຈົ້າເມືອງບຳນານ ໄປຊົມເມືອງພວນ.

ເມື່ອວັນສຸກຣ໌ເດືອນ ໗ ແຮມ ໒ ຄ່ຳ ປີກົດບີ ພ.ສ. ໒໔໙໗ ຕົງກັບ ວັນທີ ໒໗ ເຜວຣີເຍ ໑໙໕໑ ເວລາ໑໓ນ໗໐ ມອງຊີເອີຣ໌ ລອງຕັນລ໌(**Lenthall**) ນັກຂັບເຄື່ອງບິນນໍຣດຸນ (**Noorduyn**) ໄດ້ຖືສານຂອງພຼະຍາດຳຣົງຣິທິໄກ ລີ ຕູ ບີ ເຈົ້າເມືອງແມ້ວມາເຊີນຂ້າພເຈົ້າໄປຢ້ຽມຢາມ ຂ້າພເຈົ້າຕອບຮັບດ້ວຍຄວາມຍິນດີ. ວັນທີ່ ໒໕ ເວລາ ໑໘ ນ໐໐ ມອງຊີເອີຣ໌ ລອງຕັນລ໌ແລະພຣິຍາ ເອົາຣົຖຍົນຕ໌ມາຮັບເອົາຂ້າພເຈົ້າກັບລູກສາວໄປຂຶ້ນເຄື່ອງບິນທີ່ສນາມບິນ ຊື່ສວນຂ້າພເຈົ້າບ້ານໜອງຊາຍ. ພໍ໑ກຸບ໑໐ ເຄື່ອງບິນເປີດຈັກຣ໌ຂຶ້ນເວຫາລ້ຽບພູສີ ຜ່ານໜ້າພຼະຣາຊວັງ ລ້ຽວຊ້າຍຜ່ານບ້ານຂອງຂ້າພເຈົ້າໃຫ້ພຣິຍາລູກຫຼານຮ້ອງສັ່ງ ແລ້ວກໍ່ຕັ້ງໜ້າເຫາະໄປຫຼີກທ້າຍພູສວງ ບິນໄປໃຜ່ງໆຢ້ຽມຊ້າຍແລຂວາ ເຫັນແຕ່ພູຜາປ່າໄມ້ຫ້ວຍນ້ຳລຳທາຣຖບິນຫັນທາງ. ໑ກຸບ·໔໕ ເຄື່ອງບິນເຂົ້າຫວ່າງຜາວີ້ແດນດີນລາວກັບພວນ.

໑ກຸບ· ໕໐ ເຫັນເມືອງສູນ ແລໄປທີ່ໄດກໍ່ເຫັນແຕ່ພູຫົວລ້ານແລະຄັງ. ໑ກຸບ. ໕໕ ເຄື່ອງບິນລົງຈອດສນາມບິນຄັງມະແລ່ນ ຣວມຣະຍະທີ່ເຫາະມາປະມານ ໑໓໐ ກິໂລແມດຕ໌ ໔໕ ນາທີ. ທີ່ສນາມບິນມີເຮືອນ ໒ ຊັ້ນ ພື້ນແປ້ນຝາ ປະທາຍມູງດິນຂໍ ເໝາະສົມຄວນໃຊ້ເປັນທີ່ພັກ ສາງຂອງໂທຣະຊັພມີຝຣັ່ງເປັນນາຍ. ພຼະຍາດຳຣົງຣິທິໄກ ລີຕູເບີ ລີຕູລືອາ ເອົາຣົຖຍົນຕ໌ຍີ່ຫໍ້ຊີບ ໑໕ ແຮງມ້າ ມາຕ້ອນຮັບແລ້ວພ້ອມກັນໄປເຖິງຊຽງຂວາງ ຣະຍະທາງ ໗໐ ກິໂລແມດ ສວັສດີ. ພັກຢູ່ເຮືອນພຼະຍາດຳຣົງຣິທິໄກ ຕຶກຊັ້ນດຽວໃກ້ຖນົນຫຼວງ. ພຣິຍາບຸດາແລະບຸດີຂອງພຼະຍາມາໄຫວ້ ເຈົ້າສາຍຄຳ ເຈົ້າແຂວງພາພຣິຍາແລະບຸດີມາຢ້ຽມ. ກາງຄືນໜາວເປັນບາຫຼອດລົງຮອດ ໓ ດີກຣີ ຫີນນະຕົກຫຼັງຄາແລະທົ່ງນາຂາວເປີະ.



ຮູປທີ່ ໔ - ຊ້າຍໄປຂວາ ; ພຼະຍາຄໍາຣົງຣິທິໄກ ລິ ຕູ ບິ
ລິ ຕູ ເປິ ເຈົ້າຄໍາໝັ້ນ ເຈົ້າຄໍາຜູຍແລະລິຕູລິອາ.

ວັນທີ່ ໒໗ຫາ໒໘ແລະ໑ ມາກສ໌ ໑໙໕໑

ທ່ຽວຊົມເມືອງຊຽງຂວາງ

ພະຍາຄຳຣົງຣິທິໄກ ພາຂ້າພະເຈົ້າໄປຢ້ຽມຢາມ; ເຈົ້າແຂວງຢູ່ຕຶກ໒ ຊັ້ນ ມອງຊິເອີຣ໌ ເດີ ແມສຕ໌ (De Maistre) ຂ້າຫຼວງ ແຕ່ກ່ອນທ່ານເປັນຜູ້ຮອງກອມມີສແສຣ໌ ກູແວຣ໌ ເນີມອງ ຫຼວງພະບາງ ຂ້າພະເຈົ້າຮູ້ຈັກທ່ານ ແລະຈາກກັນໄປນານໄດ້ ໑໘ ປີ ເມື່ອທ່ານເຫັນຂ້າພະເຈົ້າທ່ານກໍມີຄວາມຍິນດີ ແລະຂ້າພະເຈົ້າກໍເໝືອນກັນ ເຈົ້າໄຊຍ໌ວົງສ໌ ເຈົ້າເມືອງຊຽງຂວາງເກົ່າ ອາຍຸ ໙໙ ປີ ຍັງມີເນື້ອຊຸ່ມໜັງມັນ ຜິວພັນວັນນະຜ່ອງໃສ ຮັບຮອງຢ່າງລູກຫຼານຢູ່ຕຶກຊັ້ນດຽວ ປິ່ນໜ້າຫາຖນົນຫຼວງ ຊາຍາຊື່ໝ່ອມດວງດີ ພາບຸຕີອອກມາໄຫວ້ ພະຄູເຈົ້າຄຳດວນ ເຈົ້າຣາຊາຄນະປົກຄອງສົງຄ໌ ຊົງເມຕາຢູ່ທີ່ເພັຍວັດ ມີຄວາມຍິນດີທີ່ທ່ານໄດ້ເຫັນຂ້າພເຈົ້າຄັ້ງນີ້ ທ່ານວ່າເຫັນແຕ່ຊື່ແຕ່ນານຢູ່ໃນພຸທທະສາສນະບັນດິດ ແລະເຈົ້ານາຍພີ່ນ້ອງກັບສະເຫີບເຄີຍຮັກ. ເມືອງຊຽງຂວາງມີ ໙໗ ວັດ ຍັງແຕ່ ໒ ວັດຄື ວັດເພັຍວັດ ຕັ້ງຢູ່ທິສໃຕ້ຊຸດໂຊມລົງມາກ ພະພຸທທະຮູປອົງຄ໌ຫຼວງຄໍຂາດ ບໍ່ມີເກສ ແລະວັດສີພົມ ຕັ້ງຢູ່ທິສເໜືອກຳລັງປະຕິສັງຂຣ ພູຈອມເພັຊຕັ້ງຢູ່ກາງເມືອງສູງປະມານ ໑໐໐ ແມດ ຣົຖຍົນຕ໌ພາຂຶ້ນເບື້ອງເໜືອອ້ອມເມືອຮອດຈອມພູ ກັບຄືນເບື້ອງໃຕ້ອ້ອມລົງຮອດຕີນພູ. ມີທາຕຸ ໒ ລູກໆນຶ່ງເອົາຊື່ພູມາໃສ່ເອີ້ນວ່າ ທາຕຸພູຈອມເພັຊ ອີກລູກນຶ່ງຊື່ທາຕຝຸ່ນ (ຝຸ່ນພະພຸທທີອົງຄ໌) ມີແຫ່ນວັດແລະກຸຕິເກົ່າໆ ມີສນາມເພາະຂອງເຈົ້ານ້ອຍສ້າງກວ້າງ໑ມ໕໐ ເລີກ໒ມ໐໐ຍາວໆໄປ ເພີ່ນວ່າອ້ອມເມືອງຊຽງຂວາງນີ້ ໑໐ ກິໂລແມຕຣິກໄປແຕ່ຫຍ້າຄາແລະຫຍ້າແຝດ. ຢູ່ທີ່ພູຈອມເພັຊເບິ່ງເຫັນບ້ານເມືອງຕລອດຮອດທົ່ງນາແລະພູອ້ອມ ມີນ້ຳງື້ວໄຫຼຜ່ານຕີນເມືອງ ນ້ຳລີນສູງໄຫຼປ່ອງກ້ອງເມືອງ ຖ້າມີໄຟຟ້າໄຕ້ກາງຄືນແຮງຈະຮຸ່ງເຮືອງ ຄືເຮົາຂຶ້ນພູຈອມສີ ເບິ່ງເຫັນເມືອງຫຼວງພະບາງຕລອດຮອດທົ່ງນາແລະພູອ້ອມ ຕ່າງແຕ່ມີນ້ຳຂອງໄຫຼຜ່ານຕີນເມືອງ ນ້ຳຄານໄຫຼປ່ອງທິວເມືອງກັບໄຟຟ້າໄຕ້ຮຸ່ງເຮືອງນັ້ນແລ້ວ. ຖ້ຳກາຍແລະຖ້ຳມາດຢູ່ທິສຕາວັນຕົກສ່ຽງໃຕ້ແລະສ່ຽງເໜືອ ໄກຊຽງຂວາງ ໙ ກິໂລແມຕຣ໌ເສສ. ໒ ຖ້ຳນີ້ມີພະພຸທທຮູປ ຮອດລະດູປີໃໝ່ເດືອນ໕ ຊາວພວນໄປຣົດ

ສົງ ຄືຊາວເມືອງຫຼວງພຼະບາງເຮົາໄປຣົດສົງພຼະພຸທທະຮູປຖ້ຳຕິງ ຖ້ຳພາມ່ານ ຖ້ຳສັກກະຣິນຄູຫາແລະຖ້ຳພາຕັດແກ້ເໝືອນກັນນັ້ນແລ້ວ. ທຳນະເທສັກຫຼັກເມືອງ ຮ້ອດເດືອນ ຖ ຂ້າຄວາຍລ້ຽງ ຄືເມືອງຫຼວງພຼະບາງ ລ້ຽງທຳເທວະດາຫຼວງ ແຕ່ເຮົາຫ້າກບໍ່ຂ້າສັດວ໌. ເຂົາກຳລັງສ້າງສນາມບິນໄກຊຽງຂວາງ ມີ ກີໂລແມຕູທິສເໜືອສຳຫຼັບໃຫ້ເຄື່ອງບິນນ້ອຍລົງຈອດ. ໂຮງການເຈົ້າແຂວງຕຶກຊັ້ນດຽວ ຢູ່ບ້ານຂ້າຫຼວງຝຣັ່ງຢັບກັບຢູ່ຄົນລະຫ່ອງ ໂຮງການເຈົ້າເມືອງຄູນຕຶກຊັ້ນດຽວ ແລະໂຮງການເຈົ້າເມືອງແມ້ວຕຶກ ໒ ຊັ້ນ ຢູ່ແຄມຖນົນຫຼວງເບື້ອງເທິງ ຊັ້ນເທິງແມ່ນທີ່ວ່າການຂອງພຼະຍາເຈົ້າເມືອງ ຊັ້ນລ່າງແມ່ນທີ່ທຳງານຂອງສມຽນແມ້ວ ໕ ຄົນ ຕັດຜົມສໄນ ແຕ່ງກາຍສະອາດ ນຸ່ງສິ້ງເສື້ອສັກກະລາດ ສຸບຖົງເທົ້າຮອງເທົ້າ ນັດກຣາວັດ ດິດພິມພ໌ເຄາະຕົວຝຣັ່ງຊຽນໜັງສືລາວ ກິຣິຍາສຸພາບຮຽບຮ້ອຍ ເຫັນຂ້າພະເຈົ້າເຂົ້າໄປ ທະຫານແມ້ວຢູ່ຍາມປະຕູທຳວັນທະຍາວຸທ ແລະພັວກສມຽນ'ບາກັບລຸກຢືນປະນົມມືຖວາຍຄຳນັບ ຂ້າພະເຈົ້າຄຳນັບຕອບແລ້ວຈັບມື ອອກຈາກນັ້ນໄປເຫັນໂຮງທະຫານລາວ ໂຮງຕຳຣວຈ ໂຮງສະໂມສອນຝຣັ່ງ ໂຮງສະໂມສອນລາວ ຊົນຫ້າງພໍ່ຄ້າຫ໌ຊິລີພິງຟູ ເມັຍແມ່ນລາວອອກມາໄຫວ້ເຊີນຮັປທານອາຫານຄ່ຳ ຕື່ນຮູ່ງເຊົ້າໄປຊົມຕະລາດ ເຮືອນຊູດີນມຸງດິນຂໍ ຂາຍເນື້ອສຸກຣ ງົວຄວາຍເປັນຫ້ອງມີປ່ອງບືນຂອງໃຫ້ຜູ້ຊື້ ແລະເສື້ອຜ້າ ແພ່ນແພ ຫມາກໄມ້ ພິກ ເກືອປາປາງ ເຜີມີ ເຂົ້າແກງ ກາເຟ ນ້ຳນົມ ເຫຼົ້າ ເຂົ້າໜົມ ໝວກເກີບ ນີທັງລາວພວນ ຜູ້ເທິງ ໝ້ ແມ້ວ ແກວຂາຍຢູ່ຕລອດວັນ. ໃຕ່ຂົວຂ້າມນ້ຳງົວໄປດູອີ່ງນ້ຳປາ ໆ ຢູ່ພູຈອງວອງໜ້າເມືອງຝ່າຍຕາວັນຕົກສ່ຽງເໜືອ ເຂົາກໍ່ດ້ວຍຫີນແຂງເປັນກຳແພງສູງ ໒ ແມດເສສ ເນີນ ໆ ລົງມາແລ້ວວາງທໍ່ແຕ່ບໍ່ນ້ຳໄຫຼຕົກໃສ່ອີ່ງ ໆ ແລະແຜ່ນກໍ່ດ້ວຍດີນຈີ່ມຸງດີນຂໍ ຝັງທໍ່ລອດພື້ນນ້ຳງົວໄປຫາໃນເມືອງ ແຈ້ກປາຍທຸກບ້ານຣາຊການແລະກອັກຕາມຖນົນຫຼວງບ່ອນສຳຄັນ. ຈາກນັ້ນໄປຢາມປາສເຕີຣ໌ອາເມຣິກັນ ມີເມັຍລູກ ໒ ຄົນ ຢູ່ເຮືອນໄກກັງວົນ ເປັນພູເບື້ອງເໜືອອີ່ງນ້ຳແລະທາງຄັ້ງເງິນ ເມັຍແມ່ນລາວເມືອງຫຼວງພຼະບາງ ລູກ ໒ ຄົນຢູ່ເຮືອນຄືກັນ ເປັນພູເບື້ອງໃຕ້ອີ່ງນ້ຳ ພາກັນຮັບຮອງດີທັງສອງຄົວ. ພູສອງບ່ອນນີ້ຕັ້ງຢູ່ຝາກນ້ຳງົວ ຄືພູທ້າວແລະພູນາງ

ຕັ້ງຢູ່ປາກນ້ຳຂອງໜ້າເມືອງຫລວງພະບາງ ແຕ່ບໍ່ເປັນທັມມະຊາຕິ ຫາກມີເຮືອນໄກກັງວົນ ຕ່າງເມືອງເຮົາທີ່ມີບ້ານຊຽງແມນ. ໄປປານເຈົ້າສາຍຖວິນ ສາຣາວັດສຶກສາ ທ່ານພາໄປດູໂຮງຮຽນທຸກຫລັງທຸກຫ້ອງ ສເນີນາຍຄູໃຫ້ຂ້າພເຈົ້າມີນັກຮຽນລາວພວນ ແມ້ວຍິງຊາຍຫາຍສິບຄວນ ຮຽນດີ ຂ້າພເຈົ້າຖາມພາສາຝຣັ່ງກໍບໍ່ມີຜູ້ໃດຈົນ. ຖັດໂຮງຮຽນເບື້ອງເໜືອມີເດີ່ນກິລາ ວັນພັກມີນັກຮຽນ ທຫານຝຣັ່ງ ລາວ ແມ້ວເຕະບັນປະກອບສຽງແກສຽງກລອງບັນເລງເພງກິລາ. ໄປດູໂຮງໄປສະນີໂທຣະເລຂ ໂຮງພຍາບານ ໂຮງທຫານແມ້ວ ຢູ່ບ້ານແກວຣ້າງທາງເມື້ອງມີສອງສາມໂຮງ ເຫັນເຈົ້າເມືອງແມ້ວ ເມື່ອຂ້າພເຈົ້າເຂົ້າໄປກໍອອກມາລຽນແຖວທຳວັນທະຍາວຸທແລ້ວທຳເພງອາວຸທໃຫ້ຊົມ ຂ້າພເຈົ້າບໍ່ໄດ້ເປັນທຫານຫາກເປັນທີ່ຈັບໃຈ ຂ້າພເຈົ້າຈັບມືຜູ້ເປັນນາຍແລະສັນຣະເສີນ.

ວັນທີ່ ໒ຫາ໔ ມາກສ໌ ໑໙໕໑ ໄປຊົມເມືອງສູຍ.

ເຈົ້າສາຍຄຳ ເອົາອາວຸທ ເຄື່ອງນຸ່ງຫົ່ມໃສ່ຣົຖການົບົງໄປແຈກປາຍໃຫ້ປາກຕີຊັງແມ້ວ ຊຶ່ງໄປລາດຕະເວນດົນຕາແສງສູບ ທ່ານໄດ້ເຊີນຂ້າພເຈົ້າບັ້ງຣົຖຊີບຂອງທ່ານໄປພ້ອມ ທ່ານເອງເປັນຜູ້ຂັບ ມີຂ້າພເຈົ້າກັບລູກສາວພຣິຍາຕູເປົກັບລູກນ້ອຍ ສ່ວນພະຍາດຳຣົງຣິທີໄກກັບຕູເປີ ບັ້ງຣົຖການົບົງອອກຈາກຊຽງຂວາງ໑ມືນມົ໐ ໄປຕາມຖນົນຫລວງທິສເໜືອແວະບ້ານລາດຮ້ວງຢູ່ແຄມຖນົນເບື້ອງຂວາ ມີເຮືອນແຖວ ມີ ຫລັງ ພົ້ນແປັນມູງດິນຂໍຮ້ອດນີ້ຄຳຮ້ວງ ລາວພວນ ແມ້ວຂ້າລົງໄສະ ຈຶ່ງເອີ້ນວ່າ ລາດຮ້ວງ. ຈາກນີ້ອອກເດີນຕໍ່ໄປລ້ຽວຊ້າຍຂ້າມສນາມບິນທິສຕາວັນຕົກສ່ຽງເໜືອ ພົ້ນຄັ້ງມະແລ່ນແລ້ວ ທັງສອງທາງເຕັ້ນໄປແຕ່ກົກແປ້ກຫອມກິ່ນເຊື້ອບໃຈ. ສີຫ້າຫລັງມູງຫຍ້າສາຍຄາໄລ່ມທາງຫົວທາງຕີນ ເຮັດຄ້ອກໃຫ້ງົວຄວາຍຢູ່ ຫົວບ້ານມີຫຍ້າຄາທາງບ້ານມີນາກໍວິເສສບ້ານພວນເປັນດັ່ງນີ້ ໄປຕາມຣະຍະທາງກິນນ້ຳຫ້ວຍບ້າງ ນ້ຳເໝືອງບ້າງ ນ້ຳສ້າງບ້າງ ເຫັນມີນາຂັ້ນໄດຫລາຍບ່ອນ ແຕ່ກ່ອນຄືຈະມີຄົນຫລາຍ ຈຶ່ງດັ່ງພົງສາວະດານພວນກ່າວໄວ້ ໃຫກວາດຄົວພວນເມືອງສູຍລົງໄປກ້ຳເມືອງຫລວງພະບາງ. ເຖິງໂຮງຮຽນບ້ານຄ້າຍແຄມຖນົນເບື້ອງຊ້າຍ ນາຍຄູເພົ້າ ສູນທອນ ຄົນເມືອງຫລວງພະບາງ ມາຮັບເຊີນໄປຮັປທານນ້ຳຊາ

ທີ່ເຮືອນ ປຸ້ມໂຮງຮຽນຊູດີນມຸງຫຍ້າຝາໄມ້ເຮັ້ງມີນັກຮຽນຍິງຊາຍລາວພວນ ແມ້ວ
ມີ໐ ຄົນ ຮຽນດີສົມຄວນ ຖາມພາສາຝຣັ່ງກໍຕອບໄດ້. ໄປໄຫວ້ວັດຕັ້ງຢູ່ໃຕ້ໂຮງ
ຮຽນຫົວບ້ານໂນນສູງ ມີພຸະເນຣນ້ອຍບໍ່ຫຼາຍ. ບ້ານຄ້າຍເຮືອນປາຍໄປຕາມຖນົນ
ເບື້ອງຊ້າຍເບື້ອງຂວາໃຫຍ່ສົມຄວນ ຜູ້ທຸຂຢູ່ເຮືອນມຸງຫຍ້າ ຜູ້ຮັ່ງມຸງດິນຂໍ ງົວ
ຄວາຍເປັນຫມູ່ກິນຫຍ້າຢູ່ຕາມທົ່ງນາຍັ່ງໆ. ເຖິງໜອງຕັ່ງຢູ່ຕີນພູຜາເບື້ອງຊ້າຍ
ກວ້າງຫຼາຍເຕີບ ຫ້າພີ່ລຶກບໍ່ມີຈອກແໜຫຍ້າ ນ້ຳອ້ອກຣູຜາ ເຂົາວ່ານ້ຳຂອງ
ແຫ້ງໆນ້ຳຂຶ້ນໆນຳ ແຕ່ກ່ອນເປັນບ້ານ ໃຫບ້ານກິນຟານ ດ່ອນເງືອກຢູ່ພູຜາ
ບ່ວງນີ້ເກືອບເອົາບ້ານເຮືອນລຸບລົງ ມີແຕ່ວັ່ງຟູຂຶ້ນບ່ງດຽວ ຈຶ່ງຮ້ອງວ່າໜອງຕ່ຳ
ເຖິງເມືອງສູຍ ໑໗໐໐ ຕາແສງສູຍຊື່ທ້າວບົວສີ ນ່າຮັບເຊີນພັກທີ່
ເຮືອນພື້ນແປ້ນ ຝາແປ້ນ ມຸງແປ້ນເກັຈ ມີຫ້ອງຮັບແຂກເກາະມຸກ ເລົ້າ
ເຂົ້າຄອກນ້ຳງົວຄວາຍຢູ່ຕ່າງຫາກ. ຮວມຣະຍະທາງ ກ໕ ກິໂລແມດ ຂ້າມ
ນ້ຳອ່າງ ນ້ຳສ້າງ ນ້ຳເປັນ ນ້ຳງື່ມ ນ້ຳຊອງ ນ້ຳກັດ ນ້ຳງຽບ (ຍອດນ້ຳງຽບ
ເອີ້ນນ້ຳກ້ອກຣອດເໜືອບ້ານງົ້ວ ແຕ່ນີ້ໄປຮອດຊຽງຂວາງເອີ້ນນ້ຳງົ້ວ ກາຍ
ຊຽງຂວາງໄປເອີ້ນນ້ຳເຕົ້ ຕໍ່ນີ້ໄປສຸດເອີ້ນນ້ຳງຽບ) ແລະນ້ຳສູຍ. ເມືອງສູຍມີ
ເຮືອນ ໑໐ ຫຼັງ ວັດໂບຮານ ໑໖ ຫຼັງມູ່ນທລາຍໝົດ ຍັງແຕ່ວັດບ້ານພ້ອງ
ຫຼັງດຽວ. ວັດບ້ານຕາແສງຕັ້ງເທົ່າບ້ານຕົນດົງ ຍັງແຕ່ແທ່ນກັບພຸະພຸທ
ທະຮູປອົງດໍ່ຫຼວງຄໍຂາດ ແຂນຂາດ ຮາວທຽນຄົວດຮູປນາຄ ໔ ຕົວທາງ
ກຽວກັບເປັນຍອດປຣາສາທ ໑ ຮາວ ຫີບໜັງສື ໖ ຫີບຂອງໂບຮານຍັງເທົ່າ
ນີ້ ມີພຸະເນຣ ໕ ເຈົ້າໂອວາທຊື່ພຸະຈັນທາ ອາຍຸ ໖໐ ວັສສາ ໔ ກຳລັງ
ປຸກກຸຕີທໍເທວະດາ ໑ ຫຼັງ ມີ ຫ້ອງ ພື້ນແປ້ນ ຝາແປ້ນ ມຸງຫຍ້າ ມີ
ນາທົ່ງໃຫຍ່ຍາວໆຢູ່ກ້ອງບ້ານ ເໝືອງນ້ຳສູຍໄຫຼລົງບຕີນບ້ານບໍ່ສະອາດ ໄດ້
ຂຸດນ້ຳສ້າງກິນ ງົວຄວາຍມີຫາຍສິບຄວນ ສວນຄົວ ສວນກ້ວງ ອ້ອຍພືສຜົນ
ເຮັດນາຕ້ອງເອົາຝຸ່ນສັດໃສ່ຈຶ່ງໄດ້ເຂົ້າຫຼາຍ. ຄ່ຳວັນນີ້ຕາແສງແລະເຖົ້າແກ່
ນາຍະສີ ມີ ປີ ພາເຫຼົ້າກ້ອງໄກ່ຕົວ ເຂົ້າໜົມດອກໄມ້ທູບທຽນ ເອົາຜ້າຕຸ້ມ
ຫົ້ມພາຂວັນ ເອີ້ນຂວັນແລ້ວມັດແຂນເບື້ອງດຽວ ຝາຍເຫຼົ້າເອົາເຫຼົ້າໃຫ້ກິນ.
ຮຸ່ງຂຶ້ນຂີ່ຣົຖໄປໄຫວ້ວັດບ້ານພ້ອງ (ຮູປທີ່ ໕) ໃກບ້ານຕາແສງ ປີ ກິໂລ
ແມດ ເດີນຂ້າມນາແລະນ້ຳສູຍຊິວແປັນນຸງຫຍ້າ ຂຶ້ນໂນນສູງປະມານ ໑໐



ຮູບທີ່ ໕-ວັດບ້ານພ້ອງ ເມືອງສູຍ

ແມດ ເບິ່ງເຫັນນາອ້ອມ ກົກຄໍ້ ໄມ້ຫວີງ ( ໄມ້ປ້ວກ ) ໄມ້ເຮັ້ຍອ້ອມບໍຣິເວນ ກົກໂພໜ້າວັດກົກໄຮກອບວັດ ມີພຼະ ໒ ເນຣ ໒ ເຈົ້າໂອວາທຊື່ພຼະ ບົວພັນທ໌ຸ ອາຍຸ ໒໕ ວັສສາ ມີ ອາຣາມນີ ມີ ຫ້ອງ ໜ້າຕ່າງ ໜ້າກອບ ຫຼັງຄາມີ ໔ ສົດ ມຸງດິນຂໍ ຫຼາຍບ່ອນເອົາຫຍ້າມຸງຊອນ ພຼະພຸທທະຮູປອົງຄ໌ ຫລວງຮູປຊົງແບບພະມ່ານມີຮ້ອຍເຈາະຫົວອົກ ບາດລົງຮ້ອດສາຍບື ແທ່ນກໍ່ເຈາະ ຊື່ກົ້ນ ແຕ່ປິດປາແລ້ວ ມີຮາວທຽນຄ້ວດຮູປນາຄ ໒ ຫົວຫາງກ່ຽວກັນ ເມື່ອເອົາ ລົງນ້ຳກໍ່ຕີງ ຫໍປາສາທ ຖ ຫີບໜັງສືຄັມພີຣ໌ໃບລານເຕັມຍັດ ໔໒ ພຼະພຸທທະ ຮູປໄມ້ແລະຄະນຸກ ມີເລັກນ້ອຍບໍ່ຫຼາຍ. ຂ້າງອາຣາມເບື້ອງເທິງມີຫໍບວຊ ໑ ຫຼັງ ສີມນ້ອຍ ໑ ຫຼັງ. ເບື້ອງລຸ່ມມີຫໍໄຕ ໑ ຫຼັງເພພັງໝົດຂຶ້ນໄປກໍບໍ່ໄດ້ ກອບອາ ຣາມມີກຸຕິ ໑ ຫຼັງ ໘ ຫ້ອງເສົາຕັ້ງແຄ່ງພື້ນແປ້ນ ຝາແປ້ນ ໜ້າຕ່າງ ໜ້າກອບ ແມ່ປະຕູ ແມ່ປ່ອງຢ້ຽມຄວັດດອກລາຍກະແຈ ມີງວງເຜິງປ່ຽນ ຝາປ່ອງຢ້ຽມ ຝາກຸຕິ ແມ່ລັບຈັບດອກພອກຄຳຫຼັງຄາມີ ໑ ສົດມຸງດິນຂໍ ຫຼາຍບ່ອນເອົາຫຍ້າ ມຸງຊອນ ແຕ່ສ່ວນຫຼັງຄາໜ້າຕ່າງຝ່າຍເທິງນັ້ນບໍ່ມີ. ຖັດກຸຕິເບື້ອງລຸ່ມ ມີ ແທ່ນທໍແຈກ ເອົາຫັ້ນມາດຕັ້ງ ປຸກເຮືອນງ່ວາ ມີ ຫ້ອງມຸງຫຍ້າ ກອງໄຫຍ່ ໑ ບ່ວງຫຸ້ມທັງ ໒ ໜ້າ ກວ້າງ ໑ ແມດຍາວ ໑ມ໕໐ ແຂວນປູ່ໜ້າຕ່າງກຸຕິເບື້ອງ ເໜືອ. ເດືອນຍີ່ເພັງ ຊາວເມືອງສູຍມາທຳບຸນມຫາເວສໄສ່ວັດນີ້ທຸກປີ ຂ້າພເຈົ້າ ໄຫວ້ເຈົ້າໂອວາທວ່າ ວັດນີ້ສ້າງປີໃດ? ທ່ານຕອບວ່າ ອາຕມາບໍ່ຮູ້. ໝົດແຮງ ຊອກຫາຕຳນານທຸກຄັມພີຣ໌ໃບລານ ຮ້ອດຄີ່ຂ້າວສະນິວກໍບໍ່ພົບຈາລຶກ. ຄັນຂ້າພເຈົ້າກຼັບໄປທູລທຸບາທໄຊຍ໌ວົງສ໌ ນິຍາໃຫ້ຟັງວ່າ ເມືອງພວນສ້າງວັດ ບ້ານພ້ອງແລ້ວເມືອງຫຼວງພຼະບາງຈຶ່ງສ້າງວັດວິຊຸນ. ຂ້າພເຈົ້າຕຼວຈດູພົງສາ ວະດານເມືອງຫຼວງພຼະບາງແລະເມືອງພວນ ເຫັນວ່າຈະແມ່ນສໄມພຼະເຈົ້າ ຄຳອຸ່ນເມືອງ (ເຈົ້າຜ້າຂາວ) ຣາວພ.ສ. ໒໐໕໕.ຕົວຂ້າພເຈົ້າເປັນພຸທທະ ສາສະນິກະຊົນຄົນນຶ່ງ ແລະເຄີຍກຳກັບພຸທທະສາສນະບັນທິດຝ່າຍຫີນະຍານ ມາຫຼາຍປີ ຄິດເສັຍດາຍອີຫຼີ ເສັຍດາຍຈິງໆ ເສັຍດາຍນຶ່ງນັກ ເສັຍດາຍແທ້ໆ ໝົດທັງເມືອງພວນຍັງປູນີ້ຍະສຖານເກົ່າແກ່ແຕ່ຫຼັງດຽວນີ້. ຊາວພວນກໍເປັນ ຄົນເລື່ອມໃສພຼະພຸທທະສາສນາ ຫາກບໍ່ກ້າເຮັດ ເກງຈະຜິດຣະບຽບພິທັກຮັກ ສາສຖານໂບຮານນະວັດຖຸຂອງປະເທສ ຈຶ່ງປະປ່ອຍຄ່ອຍປິດປາເອົາຕາມຄວາມ

ສາມາດທີ່ຈະກະທຳໄດ້ ແຕ່ຈະເອົາສິ່ງຂອງໃດໆອອກໄປຈາກວັດ ກໍບັງເອີນເກີດອຸບາດຕ່າງໆ. ເຈົ້າໂອວາທຖວາຍພະພອນດັ່ງນີ້ ຂ້າພະເຈົ້າຈຶ່ງນ້ອມເກົ້າວັນທາລາກັບຄືນໄປພັກນອນບ້ານຕາແສງສູບ. ຮຸ່ງຂຶ້ນເວລາ ໑໐ນ໐ ອອກຈາກເມືອງສູບພັກຖ່າຍຮູບໜອງຕັ່ງທີ່ງໃຫ້ເຫຼົ້າເຈືອງ ເຖິງເມືອງຊຽງຂວາງເວລາເປັນ ໑໑ນ໐໐ ສວັສດີ.

ວັນທີ່ ໕ແລະ໖ ມາກສ໌ ໑໙໕໑ ໄປຊົມເມືອງຄຳ.

ຂ້າພະເຈົ້າ ເຈົ້າສາຍຖວິນ ສາຣະວັດສຶກສາແລະລິ ຕູ ເປີ ນັ່ງຣົດຊີບຂອງພະຍາຄຳຣົງຣິທີໄກ ນາຍລີຢອງສິງເປັນຜູ້ຂັບ ອອກຈາກຊຽງຂວາງ ໑໔ນ໐໐ ໄປຕາມຖນົນຫຼວງທິສເໜືອ ຜ່ານລາດຮ້ວງເຖິງເມືອງແປັກ(ລາດບົວກ) ໄປຄຳນັບເຈົ້າເມືອງຊື່ທ້າວບຸນເພັງ ອອກມາຣັບທີ່ຣະບຽງ ໂຮງການຕັ້ງຢູ່ໃກ້ຖນົນຫຼວງ ຊູດີນມຸງຫຍ້າຝາປະທ້າຍ ມີ ຫ້ອງ ບໍ່ມີສວນດອກໄມ້ ປະຣັກໄວ້ ຮົ້ວກໍໄປດ ແລ້ວທ່ານສາຣະວັດພາໄປຢ້ຽມໂຮງຮຽນຊູດີນມຸງຫຍ້າຝາໄມ້ຣະບຽງລ້ອມ ມີນັກຮຽນລາວພວນ ແມ້ວ ໔ມີ ຈາກນັ້ນອອກເດີນລົງຂວາຜິກທາງໄປສນາມບິນຄັງນະແລ່ນ ສອງຝາກທາງມີແຕ່ຄັງ ຄ້າຍທຫານຝຣັ່ງຄັງໄຊ ສວນຊາວສວນຝຣັ່ງ ແວະເບື້ອງຂວາໄປຄຳນັບທີ່ຝັງສົພນາຍກອງແມ້ວຈິງຕວາ ປູ່ບ້ານຮ້າງຕີນພູດູ່ ເພາະຂ້າພະເຈົ້າຮູ້ຈັກນາຍກອງຄົນນີ້ເວລາທ່ານເປັນຄົນ ໄປປາມຂ້າພະເຈົ້າທີ່ວັດພະແກ້ວ ເມືອງວຽງຈັນທນ໌ວັນທີ ໒໕ ຊູ້ວີເປ ໑໙໕໐ ແລ້ວຂຶ້ນໄປເຖິງບ້ານນາຍກອງປູ່ຈອມພູ ຣະຍະ ໒ ກິໂລແມດ ພະຣິບາລູກຫຼານຂອງນາຍກອງອອກມາໄຫວ້ ເຊີນເຂົ້າພັກເຮືອນຮັບທານນ້ຳຊາ ລາທ່ານສາຣະວັດທີ່ນີ້ ແລ້ວກໍອອກເດີນທາງຕໍ່ໄປຂ້າມພູເກືອຍປຸດຢູ່ຊິວຂ້າມຕີນ ຕາດເປັນດູຕາດແລ້ວໄປຮອດບ້ານຈອມທອງ ໑໙ນ໐໐ ຄຳນັບອຸປຣາດທ້າວຄຳໝັ້ນ ເຈົ້າເມືອງຄຳ ອອກເດີນຕໍ່ໄປຜ່ານບ້ານບານ ເຖິງບ້ານໜ້າກາງ ໒໐ນ໐໐ ຣວມຣະຍະທາງ ໑໐໐ ກິໂລແມດພັກເຮືອນຕາແສງເກົ້າ ທີ່ດີນມາບໍ່ຢູ່ ຕາແສງໃໝ່ຊຽງອຸທາມາຣັບ ເຮືອນຕາແສງຈາງວາງ ພື້ນແປັນຝາປະທາຍ ມຸງດີນຂໍ່ ເກາະມຸກກ່າຍຊານເປັນຣະບຽງເດີນໄປຫາເຮືອນໄຟທາງກອນ ກິນນ້ຳມັດໄຫຼຜັດຜ່ານເຫງົ້າຫົວ ໃຊ້ນ້ຳອິດອ້ອຍ ຕຳເຂົ້າລຽງປາ ສວນຄົວມີນ້ຳອ້ອມ ບ້ານໃຫຍ່ສິນຄວນ ແຕ່ກາງ



ຮູບທີ່ ໗-ຖ່າຍແຕ່ໃຕ້ເມືອເໜືອ
ຢືນຢູ່ແທ່ນສາງໝໍ້ໂດນທໍ່
ຊ້າຍໄປຂວາ:ພໍ່ເຖົ້າກວານຊາ ຜູ້ນຳທາງ
ຕາແສງອຸທາ ເຈົ້າຄຳໝັ້ນ ມຫາບົວທອງ
ແລະທ້າວແກ່ນຈັນທຣ໌ ນາຍໝໍ
ລິ ຕູ ເບີ ເປັນຜູ້ຖ່າຍ

ບ້ານເປັນດິນໂຄ້ກເຕັມໄປແຕ່ກ້ອນຫີນ ມີກົກພ້າວ ໝາກກ້ວຍ ອ້ອຍພືສຜົນ ຕາມແຄມນ້ຳ ມີອາຣາມນ້ອຍແທ່ນສູງ ໑໓໕໐ ບັນໄດແລະປະຕູປະດັບ ຮູບລວງ ພຣະພຸທທະຮູບອົງຄ໌ຫຼວງ ຮູບຊົງແບບມ່ານ ໄຫວ້ເຈົ້າໄອ ວາທຕອບວ່າ ໄດ້ຈ້າງແກວເຮັດ ໂຮງຮຽນປາລີ ໂຮງຮຽນກຸລສຶກສາ ໂຮງພຍາ ບາລ ຊູດີນມູງຫຍ້າບາກວ້າງຂວາງ ເຮັດບໍ່ຕ້ອງໃສ່ຝຸ່ນ ປີນີ້ໄດ້ເຂົ້າ ໕໐ໂຕນ ງົວຄວາຍຫຼາຍສິບຄວນ ໙໒໐໐ ອອກຈາກບ້ານຫຳກາງຂ້າມນ້ຳນັດຣະຍະ ທາງ ໕໐໐ ແມັດ ໄປດູໂດນໄທແລະລາວອົບຫົ້ແຕ່ກ່ອນ(ຮູບທີ່ ໗) ດຽວນີ້ ຣາສດອນຊ່າວເຮັດນາຫມົດ ຍັງແຕ່ແທ່ນສ້າງນີ້ຫົ້ແລະກົກໄຜ່ບາງບ່ອນ ກັບ ຄືນໄປເຖິງເຮືອນຕາແສງຊຽງອຸທາ ພາເຖົ້າແກ່ນາບະສີພູກແຂນໃຫ້ແລ້ວເຊີນ ຮັບທານ ໑໑໒໐໐ ຂຶ້ນຣົຖກັບຄືນ ຕາແສງ ມຫາບົວທອງແລະທ້າວ ແກ່ນຈັນທຣ໌ ນາຍໝໍໄປສົ່ງຮອດບ້ານຈອມທອງ ຊົມຫ້າງພວນ ຫົ້ ແກວ ຢູ່ສອງຝາກຖນົນ ແລ້ວໄປລາເຈົ້າເມືອງທີ່ໂຮງກາຣຕັ້ງຢູ່ໃກ້ຖນົນຫຼວງ ຊູດີນ ມູງຫຍ້າ ຝາປະທາຍ ມີ ຫ້ອງຫນ້າໂຮງກາຣບໍ່ມີສວນດອກໄມ້ ປະຣິກໄວ້ ຮົ້ວກໍ ໂປດ. ອອກເດີນໄປແລະອ້າບນ້ຳອຸ່ນ ອອກຮູແຄມຖນົນຣີມນ້ຳນັດເປັນໜ້າອັສ ສະຈັນຍ໌ ຜ່ານບ້ານແລະນານ້ຳນັດປ່າດົງ ໄປເຖິງພູດູ່ບ້ານນາຍກອງນີ້ລາງ ແມ້ວຈິງຕວາ ໑໗໒໐ ພັກຮັບທານທີ່ເຮືອນນາຍກອງ ພື້ນເບຕົງ ຝາແປ້ນ ມູງແປ້ນເກັຈ ໔ ຫ້ອງ ລະບຽງໜ້າກອນ ເຮືອນຄົວແຜງທາງຕີນ ທາງຫົວ ເປັນສ້ວມນອນ ມີ ສ້ວມ ສະອາດສວາດສບາຍ ມີເຮືອນບໍຣິວາຣປູກຢາຍອ້ອມ ໔-໕ ຫຼັງ. ທ່ານສາຣະວັຕພາໄປຢ້ຽມໂຮງຮຽນຊູດີນ ຝາໄມ້ ມູງແປ້ນເກັຈ ຣະບຽງລ້ອມ ນາຍຄູແມ່ນລາວເມືອງບໍຣິຄັນ ຊື່ພີເລີພົ້ງໄປ ມີນັກຮຽນແມ້ວ ຍິງຊາຍ ໕໙ ຢູ່ຫ້ອງນຶ່ງລຸກຢືນຄຳນັບ. ຂ້າພະເຈົ້າຖາມພາສາຝຣັ່ງກັບ ນາງສາວແມ້ວອາຍຸ ໑໔ ປີ ກໍ່ຕອບໄດ້ທຸກຄວາມ ກວດເບິ່ງພັບຂຽນ ຕົວຝຣັ່ງຕົວລາວເໝາະສົມ ວ່າຈະເສັງເອົາຊັ້ນປະຖົມສຶກສາປີນີ້ຫຼາຍຄົນ. ຫ້ອງນຶ່ງປະເປົ່າໄວ້ວ່າບໍ່ມີຄູສອນ. ລາຈາກນີ້ໄປດູໂຮງໝໍ ບໍ່ພົບນາຍໝໍ ພົບແຕ່ເມັຍເປັນຄົນແມ້ວ ມີປາເລັກໆນ້ອຍໆ. ອອກຈາກບ້ານນາຍກອງ ໄປແວະດູສວນມອງຊີເອີຣ໌ ຣາເສ ພົບແຕ່ເມັຍເປັນຄົນແກວ ເຊີນພັກ ເຮືອນຮັບທານກາເຟນ້ຳນົມ. ເຮືອນຫຼັງນີ້ພື້ນແປ້ນ ຝາປະທາຍ ມູງດີນຂໍ ຣະ

ບຽງລ້ອມເກາະນກ ມີຫ້ອງນອນ ໖ ຝາກຫ້ອງກິນເຂົ້າ ຫ້ອງຮັບແຂກທາງ ກາງ ເຮືອນໄຟຊັ້ນດຽວຕິດຫ້ອງກິນເຂົ້າ ມີມ້າເທດ ງົວເທດ ຄວາຍເທດ ແບ້ ເທດໝູເທດ ໝາເທດເປັດເທດ ໄກ່ເທດເໜືອນສວນຜັກສະນ້ຳບໍຣິບູນຂ້າສັດ໌ ເອົາເນື້ອໃສ່ເຄື່ອງບິນໄປຂາຍເມືອງແກວ. ມີກາມີບົງຣິຖຕ່າງຂນາດນ້ອຍ. ທ່ານ ຣາເສເປັນທຫານຢູ່ຄັງໄຂ ພົນກຳໜົດແລ້ວຂໍຈ່ອງດິນເປັນຊາວສວນ ຣາຊ ການຝຣັ່ງໃຫ້ເງິນອຸດໜູນນ້ອຍຈາກເງິນບຳນານອີກ. ມີຫລາຍຄົນເປັນດັ່ງນີ້ ດຽວນີ້ ເຫັນຍັງແຕ່ ໖ ຄົນ. ອອກຈາກນີ້ໄປເຖິງສວນລ້ຽງແກະທີ່ບໍ່(Bergerie) ບໍ່ມີແກະ ມີແຕ່ງົວ ຄວາຍ ແບ້ ສະນ້ຳຢູ່ກາງສວນ ບ້ານກະເສຕາທິການ(Service Agricole) ເອົາທົດລອງຕິດຕໍ່ແລະປູກພືນໄມ້ຕ່າງໆຂອງພື້ນເມືອງ ແລະປະເທສນອກ ສວນຊາ(Station Expérimentale )ກວ້າງ ໖໕ ເຫັກຕາຣ໌ ໃນນພູມີຝຣັ່ງເປັນນາຍ ນາອະທິບາຍໃຫ້: ກົກຊາສູງພຽງຫົວ ເອົາໄວ້ເກັບເອົາໝາກ ປົດເອົາໃບມາ ໃສ່ບັງໄວ້ເອີ້ນວ່າໃບໜັງງ ກົກທີ່ຕອນລົງເດືອນບໍ່ຍາວຄ່າສອກ ຜົນເດືອນ ໔ ຮຳຮວາຍແລ້ວປົ່ງ ເຂົ້າເກັບເອົາແຕ່ຍອດ ໓ ໃບ ສົ່ງໄປຂາຍປະເທສນອກ ເປັນທີ່ ໑ ໃນໂລກ ແຕ່ກ່ອນຄືຈະເປັນທີ່ ໑ ໃນເມືອງລາວ ຈົນໃຫ້ຜູ້ສາວເມືອງ ຫຼວງພຣະບາງ ນຳເອົາວິທີນມາເວົ້າຫຼິ້ນຜູ້ບ່າວວ່າ ນ້ອງຂໍຕາຍນຳອ້າຍ ໓ ໃບ ກັບຍອດ ນູນຣອດແລ້ວຈື່ຂຶ້ນໄດ້ເມື່ອໃດ? ມີເຮືອນຫົວໜ້າການ ໂຮງການ ເຮືອນ ໃສມຸງ ນາຍຄຸມ ຄູລີ ງົວແລະຄວາຍ ໄວ້ຝູ່ງສັດ໌ເປັນຕຶກຊັ້ນດຽວມຸງດິນຂໍໜົດ ດູບຫນາແຫງນມູງຫຍ້າ ໕໐ ມີໄມ້ລຽນລຳເອົາກະເພາະໃສ່ດິນປອງສຳຫຼັບກ້າ ແກ່ນຊາ ໝາກໄມ້ ນ້ຳໄຫຼກາຍໜ້າດູນງໃດມີຂຸມ ໑ ພໍປະສົມຕັກງ່າຍ. ກາຍ ນີ້ໄປດູສວນປູກເຂົ້າຝຣັ່ງ( Blé )ແລະຫຍ້າສຳຫຼັບໃຫ້ສັດ໌ກິນ( Avoine ) ເອົາຂຸດ ເປັນຫນານຍາວໆກວ້າງ ໑ ແມັດ ຮ່ອງນ້ຳໄຫຼຫວ່າງຫນານລ້ຽງດິນເຂົ້າ ຄັນ ນ້ຳຫລາຍເອົາເອົາແປ້ນຕັນ ຄືຊາວນາເຮົາໃສ່ແປ້ນແຕມນ້ຳນັ້ນແລ້ວ. ອອກຈາກ ນີ້ຂ້າມຖນົນຫຼວງໄປເບື້ອງລຸ່ມ ມີຕຶກສອງຫຼັງຊັ້ນດຽວ ໓ ແລະ ໒ ຫ້ອງນອນ ດິນຂໍສ້າງຂຶ້ນໃໝ່ໆສຳຫຼັບວາງເຄື່ອງຈັກ໌ ໜີບໝາກນັບ( Abrazin ) ແລະໄວ້ ຫມາກນັບ ຊຶ່ງປູກຢູ່ສວນໃນບ້ານນີ້ເອງປະມານ ໖໐ ເຫັກຕາຣ໌ ກົກໝາກນັບ ກຳລັງສູງພຽງຫົວ. ລາຫົວຫນ້າການໄປເຖິງຊຽງຂວາງ ໑໘ນ ໓໐ ໄປລາທ່ານ ເດີເນສຕູ. ໑໙ນ໐໐ ໄປຮັບທານທີ່ໂຮງຫຸບາທໄຊຍ໌ວົງສ໌ພ້ອມດ້ວຍພຣະຍາ

ດີວິງສ໌ ນິຟຣັ່ງ ປີ ຄົບຮວມ ໑ປີ ຂ້າພເຈົ້ານັ່ງຕໍ່ຂນຫນ້າທຸບາທ ເບື້ອງ
ຂວາຂ້າພເຈົ້າຄຸນຍິງເຈົ້າແຂວງ ເບື້ອງຊ້າຍນາຍດານຄັງເງິນ. ກ່ອນຈະ
ຣັປທານຂອງຫວານ ຂ້າພເຈົ້າໄດ້ລຸກຂຶ້ນຖວາຍຄຳນັບແລ້ວທູລວ່າ: ທານໂທສ
ທຸບາທ ! ຂ້ານ້ອຍຂໍຖວາຍຄວາມເຄົາຣົພຢ່າງສູງສຸດ ແລະຂອບພຣະເດຊ
ພຣະຄຸນເປັນຢ່າງຍິ່ງ ທີ່ໄດ້ຊົງກຣຸນາໃຫ້ຂ້ານ້ອຍມາຮ່ວມໂຕະເສວີຍໃນວັນນີ້ພ້ອມ
ດ້ວຍພຣະຍາດີວິງສ໌. ຂ້ານ້ອຍມີຄວາມຍິນດີມາກທີ່ໄດ້ເຫັນທຸບາທ ກໍເໝືອນ
ວ່າ ໄດ້ເຫັນຫນ້າພຣະຣາຊບິດາຂອງຂ້ານ້ອຍກັບເສດັຈເຈົ້າມຫາອຸປຣາຊສູວັນນະ
ພຣົມມາແລະບຸນຄົງອົງຄ໌ເປັນພຣະໂອຍໂກແລະປິຕຸລາ ຊຶ່ງໄດ້ເສດັຈມາຣົບຫໍ
ຊ່ວຍເມືອງພວນແຕ່ປາງກ່ອນພຸ້ນ ຂ້ານ້ອຍຈະໄດ້ກາບລາໄປມື້ອື່ນ ຂ້າ
ນ້ອຍຂໍປະທານຝາກລູກຣັກພຣະຍາດຳຣົງຣິທິໄກ ລີຕູບີ ແລະລູກຫຼານພີ່ນ້ອງ
ຊຶ່ງໄດ້ມາເພິ່ງພຣະບາຣະມີຫຼີ ຜ່ານໄປມາໃນເມືອງພວນກໍດີ. ໃນໂອກາສທີ່ຈຳ
ໃຈຈຳຈາກ ຂ້ານ້ອຍຂໍອວຍພຣຖວາຍທຸບາທພຣະຍາດີວິງສ໌ແລະຜູ້ຖືກເຊີນນັ່ງ
ຮ່ວມທີ່ນີ້ ຈົ່ງຊົງພຣະເຈຣີນແລະເຈຣີນດ້ວຍອາຍຸ ວັນນະ ສຸຂະ ພລະ ຄູນ
ສາຣສົມບັດ ສຸພຣະສີຣິສວັສດິ໌ ພິພັທນະມົງຄົລ ວິບູນລະຜົລ ຊົ່ວກາລນານ
ເທີນ.

ວັນພຸທເດືອນ ປີ ແຣມ ໑໔ ຄ່ຳ ນີ້ຈຳເຣີນ ຕົງກັບວັນທີ່ ກຸ
ມາກສ໌ ເປັນວັນທີ່ຂ້າພເຈົ້າໄດ້ພາກຈາກເມືອງພວນ ທີ່ເປັນເມືອງເຄີຍຖືກຂ້າ
ເສິກສັຕຣູມາຮາວີປົ້ນປົນຍ່ຳ ໃຫ້ໄດ້ຮັບ ຄຳທຸຂຍາກລຳບາກແສນສາຫັສ ປົ້ນແປ
ມາເປັນຫາຍຄັ້ງຫຼາຍຫົນ ຍັງຫາຫາຍປ່ອຍລຸກນັ່ງຕັ້ງຕົນເມື່ອຝຣັ່ງມາປົກຄອງ.
ເຕັ້ນຕໍ່ເມື່ອຂໍໃຫ້ພຸທທະສາສນານເທສັກຫຼັກເມືອງແລະປະຊາຊົນເມືອງພວນທີ່
ຢູ່ພູນປະເທສເຈັດເຈືອງອຸດົມສົມບູນ ປະກອບໄປດ້ວຍດິນຟ້າອາກາສຢ່າງວິເສສ
ທົ່ງນາ ຖ້ຳຣູ ຄູຫາ ພູຜາ ປ່າໄມ້ ບອດນ້ຳ ລຳທາຣແລະຄັງມີຫຍ້າຂຽວອ່ອນ
ອໍຣະຊອນ ໃຫ້ສັດວ໌ທ່ຽວເນຈອນເບີກບານເພີ້ນໃຈກິນ ຈົ່ງເຈຣີນ ກະເສມສຸຂສຳ
ຣານ ນິຣາສໄພຍ໌ ໄຮ້ໂຣຄາພາທ ປາສຈາກອຸປັທທະວັນຕລາຍທັງປວງ ຢູ່ເຢັນ
ເປັນສຸຂດ້ວຍອາຍຸ ວັນນະ ສຸຂະ ພລະ ນັ້ນເທີນ.

໑໑ນ ໐໐ ຂຶ້ນຣົດຍົນຕ໌ໄປສນາມບິນ ພຣະຍາດຳຣົງຣິທິໄກຕາມໄປສົ່ງ.
໑໒ນ໗໐ ຂຶ້ນເຄື່ອງບິນແອກລູອາສຸຣ໌(Aigle Azur) ເທາະໄປເຖິງເມືອງວຽງຈັນທນ໌

໑໔ບ໑໕ ພ້ອມດ້ວຍລິດູເປີໂດຍສວັສດີ ແລ້ວຈະເຫາະຕໍ່ໄປເມືອງຫຼວງພຼະບາງ

ພິມພ໌ທີ່ໂຮງພິມພ໌
ລາວຫັນສມັຍ
ວຽງຈັນ
ພິມພ໌ ໑໐໐໐ ສບັບ